ບົດລາຍງານ ການພັດທະນາມະນຸດ
ປີ 2007/2008

ການຕໍ່ສູ້ກັບ ການປ່ຽນແປງດິນຟ້າອາກາດ:
ຄວາມເປັນອັນໜຶ່ງອັນດຽວກັນຂອງມະນຸດ ໃນໂລກທີ່ແບ່ງແຍກ

ຈັດພິມສຳລັບ
ອົງການ
ສະຫະປະຊາຊາດ
ເພື່ອການພັດທະນາ
(UNDP)

ທີມງານກະກຽມບົດລາຍງານ
ການພັດທະນາມະນຸດ ປີ 2007/2008

ອຳນວຍການ ແລະ ນັກຂຽນ

ທ່ານ ເຄວິນ ວັດກິນສ (Kevin Watkins)

ການຄົ້ນຄວ້າ ແລະ ສະຖິຕິ

ເຊຊີເລຍ ອູກາສ (Cecilia Ugaz) (ຮອງອຳນວຍການ ແລະ ຫົວໜ້າຮຽບຮຽງ), ລິລຽນນາ ຄາວາຈານ (Liliana Carvajal), ດານຽນ ຄອບປາດ (Daniel Coppard), ຣິກາຣໂດ ຟູເອນເຕ ນິວາ (Ricardo Fuentes Nieva), ອາມີ ເກ (Amie Gaye), ໄວ ຮາ (Wei Ha), ແຄລ ໂຈຮານສັນ (Claes Johansson), ອາລິສັນ ແຄນາດີ (Alison Kennedy) (ຫົວໜ້າສະຖິຕິ), ຄຣິສໂຕເຟີ ກວນກີ (Christopher Kuonqui), ອີຊາແບລ ເມດາໂລ ເປເຣຣາ (Isabel Medalho Pereira), ຣອຊນີ ເມນອນ (Roshni Menon), ໂຈນາທານ ມອສ (Jonathan Morse) ແລະ ປາປາ ແຊັກ (Papa Seck).

ຝ່າຍຜະລິດ ແລະ ແປພາສາ

ກາລອດຕາ ໄອໂລ (Carlotta Aiello) ແລະ ມາຣຕາ ແຈັກໂຊນາ (Marta Jaksona)

ເຄືອຂ່າຍ ແລະ ການສື່ສານ

ມາຣິດສາ ອາເຊັນຊີອິສ (Maritza Ascencios), ຈີນອີບ ອາແມລ (Jean-Yves Hamel), ເປໂດຣ ມານູແອລ ໂມເຣໂນ (Pedro Manuel Moreno) ແລະ ມາຣິໂຊລ ຊັນຈີນ (Marisol Sanjines) (ຫົວໜ້າເຄືອຂ່າຍ).

ຫ້ອງການບົດລາຍງານການພັດທະນາມະນຸດ (The Human Development Report Office ຫລື ຂຽນຫຍໍ້ວ່າ: HDRO): ບົດລາຍງານການພັດທະນາມະນຸດ ແມ່ນ ຜົນງານຂອງຄວາມພະຍາຍາມຮ່ວມກັນ. ສະມາຊິກຂອງໜ່ວຍງານລາຍງານ ດ້ານການພັດທະນາມະນຸດແຫ່ງຊາດ (National Human Development Report ຂໍ້ຂຽນຫຍໍ້ວ່າ NHDR) ໄດ້ໃຫ້ຄຳຄິດເຫັນ ແລະ ຄຳແນະນຳ ລະອຽດໃນຕະຫລອດຂະບວນການສຶກສາຄົ້ນຄວ້າ. ເຂົາເຈົ້າຍັງໄດ້ເຊື່ອມໂຍງບົດລາຍງານນີ້ ກັບເຄືອຂ່າຍ ການສຶກສາຄົ້ນຄວ້າຂອງທົ່ວໂລກໃນບັນດາປະເທດກຳລັງ ພັດທະນາຕ່າງໆ. ທີມງານ NHDR ປະກອບດ້ວຍ ທ່ານ ຊາຣມິລາ ກູຣູກູລາຊູຣິຍາ (Sharmila Kurukulasuriya), ທ່ານ ມາຣີ ແອນ ມວນກີ (Mary Ann Mwangi) ແລະ ທ່ານ ທິໂມທີ ສະກ໊ອດ (Timothy Scott). ທີມງານບໍລິຫານຂອງ ຫ້ອງການ HDRO ເປັນຜູ້ທີ່ຊ່ວຍເຮັດຫ້ອງການຄົງຕົວດຳເນີນງານໄດ້ດີ ແລະ ປະກອບດ້ວຍ ທ່ານ ອອດສະກາ ເບີນານ (Oscar Bernal), ທ່ານ ມາມາເຢ ເກແບຣສະດິກ (Mamaye Gebretsadik), ທ່ານ ແມລິສາ ເຮີນານເດສ (Melissa Hernandez) ແລະ ທ່ານ ເຟ ຈວາເຣຊຊານາຮານ (Fe Juarez-Shanahan). ການດຳເນີນງານ ແມ່ນບໍລິຫານໂດຍທ່ານ ຊາຣານຕູຍາ ເມັນ (Sarantuya Mend).

ຄຳນຳ

ສິ່ງທີ່ພວກເຮົາເຮັດມື້ນີ້ກ່ຽວກັບການປ່ຽນແປງດິນຟ້າອາກາດມີຜົນຕາມມາທີ່ຈະແກ່ຍາວຮອດສັດຕະວັດ ຫຼື ຫຼາຍກວ່ານັ້ນ. ສ່ວນໜຶ່ງຂອງການປ່ຽນແປງນັ້ນແມ່ນຍ້ອນ ການປ່ອຍ ອາຍພິດເຮືອນແກ້ວທີ່ບໍ່ສາມາດ ປ່ຽນສະພາບໄປໄດ້ໃນອະນາຄົດຂ້າງໜ້າທີ່ສາມາດເຫັນກ່ອນໜ້າໄດ້. ອາຍແກັດທີ່ເກັບກັກຄວາມຮ້ອນ ທີ່ ພວກເຮົາສົ່ງອອກສູ່ຊັ້ນບັນຍາກາດໃນປີ 2008 ນັ້ນຈະຄົງຢູ່ຈົນຮອດປີ 2108 ແລະ ປີຕໍ່ໆໄປ. ດັ່ງນັ້ນ ສິ່ງທີ່ພວກເຮົາກຳລັງເລືອກມື້ນີ້ ຈະກະທົບຕໍ່ຊີວິດ ຂອງພວກເຮົາເອງ, ແລະ ຍິ່ງຫຼາຍໄປກວ່ານັ້ນ ແມ່ນຕໍ່ກັບລູກຫຼານ ແລະ ເຫຼນຂອງພວກເຮົາ. ຍ້ອນແນວນີ້ຈຶ່ງເຮັດໃຫ້ການປ່ຽນແປງດິນຟ້າອາກາດ ແຕກຕ່າງ ແລະ ຫຍຸ້ງຍາກຫຼາຍກວ່າບັນດາສິ່ງທ້າທາຍທາງດ້ານນະໂຍບາຍອື່ນໆ.

ການປ່ຽນແປງທາງດ້ານສະພາບດິນຟ້າອາກາດ ປັດຈຸບັນນີ້ ແມ່ນຕົວຈິງທີ່ເກີດຂຶ້ນທາງດ້ານວິທະ ຍາສາດ. ຜົນກະທົບແທ້ຈິງ ຂອງການປ່ອຍອາຍ ພິດເຮືອນແກ້ວ ບໍ່ແມ່ນເລື່ອງທີ່ຈະຄາດຄະເນໄດ້ ແລະ ມີຄວາມບໍ່ແນ່ນອນຫຼາຍຢ່າງ ທາງດ້ານວິທະ ຍາສາດ ກ່ຽວກັບຄວາມສາມາດໃນການຄາດຄະ ເນດັ່ງກ່າວ. ແຕ່ວ່າ ປັດຈຸບັນ ພວກເຮົາຮູ້ຢ່າງພຽງ ພໍທີ່ຈະຍອມຮັບວ່າ ມີຄວາມສ່ຽງຫຼວງຫຼາຍ, ໄພພິ ບັດທີ່ມີທ່າແຮງ, ລວມເຖິງ ການລະລາຍຂອງແຜ່ນ ນ້ຳກ້ອນຢູ່ຖິ່ນແລນ ແລະ ທະວີບ ອານຕາກຕິກ ຕະເວັນຕົກ (ທີ່ອາດເຮັດໃຫ້ຫຼາຍໆ ປະເທດຈົມລົງ ໃຕ້ນ້ຳໄດ້) ແລະ ການປ່ຽນແປງ ຂອງກະແສນ້ຳ ອຸ່ນທີ່ອາດກໍ່ໃຫ້ເກີດການປ່ຽນແປງດິນຟ້າອາກາດ ຢ່າງຮຸນແຮງ.

ຄວາມຮອບຄອບ ແລະ ການເອົາໃຈໃສ່ອະ ນາຄົດຂອງລູກຫຼານພວກເຮົາ ຮຽກຮ້ອງໃຫ້ພວກ ເຮົາມີ ການດຳເນີນການດຽວນີ້. ນີ້ເປັນຮູບແບບ ຂອງການຮັບປະກັນ ເພື່ອຕ້ານກັບການສູນເສຍ ອັນໃຫ່ຍຫຼວງທີ່ອາດເປັນໄປໄດ້. ຄວາມຈິງທີ່ພວກ ເຮົາບໍ່ອາດຄາດເດົາເຖິງແນວໂນ້ມຄວາມເສຍ ຫາຍດັ່ງກ່າວນັ້ນໄດ້ ຫຼື ເວລາທີ່ແນ່ນອນຂອງມັນ ໄດ້ ເຊິ່ງຈະບໍ່ແມ່ນຂໍ້ອ້າງ ເພື່ອທີ່ຈະບໍ່ໃຫ້ມີການ ຮັບປະກັນໄວ້ກ່ອນ. ພວກເຮົາຮູ້ວ່າ ອັນຕະລາຍ ແມ່ນມີຢູ່. ພວກເຮົາຮູ້ແຕ່ດົນແລ້ວວ່າ ຄວາມເສຍ ຫາຍທີ່ເກີດຈາກ ອາຍພິດເຮືອນແກ້ວ ແມ່ນບໍ່ສາ ມາດ ປ່ຽນສະພາບໄປໄດ້. ພວກເຮົາຮູ້ວ່າ ມັນເພີ່ມ ຂຶ້ນ ຍ້ອນການທີ່ພວກເຮົາບໍ່ດຳເນີນການໃດໆໃນ ທຸກມື້ນີ້.

ເຖິງແມ່ນວ່າ ຖ້າພວກເຮົາ ອາໃສຢູ່ໃນໂລກ ທີ່ຄົນທັງໝົດມີມາດຕະຖານການດຳລົງຊີວິດຄື ກັນ ແລະ ໄດ້ຮັບຜົນກະທົບຈາກການປ່ຽນແປງດິນ ຟ້າອາກາດ ໃນລັກສະນະດຽວກັນ ພວກເຮົາຍັງ ຕ້ອງມີການ ດຳເນີນການໃດໜຶ່ງ. ຖ້າໂລກເຮົານີ້ ເປັນປະເທດໜຶ່ງ, ທີ່ປະຊາກອນທັງໝົດມີລາຍ ໄດ້ເທົ່າກັນ ແລະ ໄດ້ຮັບຜົນກະທົບແບບດຽວກັນ ໃນລະດັບປະມານເທົ່າໆກັນ ຈາກການປ່ຽນແປງ ດິນຟ້າອາກາດ, ເຖິງປານນັ້ນ, ໄພຂົ່ມຂູ່ຂອງພາວະ ໂລກຮ້ອນຍັງຄົງຈະສາມາດນຳໄປສູ່ຄວາມເສຍ

ທາຍທີ່ໃຫ່ຍຫຼວງຕໍ່ກັບຄວາມຢູ່ດີກິນດີ ແລະ ຄວາມຈະເລີນຮຸ່ງເຮືອງ ຂອງມະນຸດ ໃນທ້າຍສັດຕະວັດນີ້.

ໃນຄວາມເປັນຈິງ, ໂລກແມ່ນ ສະຖານທີ່ມີຄວາມຫຼາກຫຼາຍ. ຜູ້ຄົນ ມີລາຍໄດ້ ແລະ ຄວາມສົມບູນ ພູນສຸກທີ່ບໍ່ເທົ່າທຽມກັນ ແລະ ການປ່ຽນແປງດິນຟ້າອາກາດ ຈະສົ່ງຜົນກະທົບຕໍ່ບັນດາຂົງເຂດ ໃນລັກສະນະ ທີ່ແຕກຕ່າງກັນຫຼາຍ. ສຳລັບພວກເຮົາແລ້ວ ເຫດຜົນທີ່ຈຳເປັນທີ່ສຸດກໍ່ຄືຕ້ອງມີການດຳເນີນການຢ່າງໄວວາ. ການປ່ຽນແປງດິນຟ້າອາກາດ ແມ່ນໄດ້ເລີ່ມຕົ້ນສົ່ງຜົນກະທົບ ຕໍ່ບັນດາຊຸມຊົນ ທີ່ທຸກຍາກ ແລະ ດ້ອຍໂອກາດທີ່ສຸດໃນທົ່ວໂລກແລ້ວ. ທົ່ວໂລກອຸນຫະພູມໄດ້ເພີ່ມສູງຂຶ້ນ 3 ອົງສາເຊ (ປຽບທຽບ ກັບອຸນຫະພູມໃນຊ່ວງໄລຍະກ່ອນການປະຕິວັດອຸດສະຫະກຳ) ໃນຊ່ວງທົດສະວັດທີ່ຈະມາເຖິງນີ້ ເຊິ່ງຈະສົ່ງຜົນໃຫ້ມີອຸນຫະພູມເພີ່ມສູງຂຶ້ນ ໃນແຕ່ລະທ້ອງຖິ່ນ ເຊິ່ງອາດຮອດສອງເທົ່າ ໃນບາງທ້ອງຖິ່ນ. ຜົນກະທົບທີ່ພາໃຫ້ເກີດຄວາມແຫ້ງແລ້ງເພີ່ມຂຶ້ນ, ສະພາບອາກາດທີ່ໂຫດຮ້າຍຮຸນແຮງ, ພາຍຸລະດູຮ້ອນ ແລະ ການເພີ່ມຂຶ້ນ ຂອງລະດັບນ້ຳທະເລຈະເກີດຂຶ້ນກັບພາກສ່ວນໃຫຍ່ຂອງທະວີບອາຟະລິກາ, ຈະເກີດຂຶ້ນກັບບັນດາເກາະດອນນ້ອຍໆ ແລະ ພື້ນທີ່ຕາມຊາຍທະເລ ເຊິ່ງຈະເກີດຂຶ້ນໃນຊ່ວງຊີວິດ ຂອງພວກເຮົາ. ທາງດ້ານຜົນຜະລິດລວມພາຍໃນ (GDP) ຂອງໂລກ, ຜົນກະທົບ ໄລຍະສັ້ນນີ້ອາດຈະບໍ່ຫຼວງຫຼາຍ. ແຕ່ວ່າສຳລັບບາງຜູ້ຄົນທີ່ທຸກຍາກທີ່ສຸດ, ຜົນກະທົບຂອງມັນ ອາດເປັນທີ່ເຫັນໄດ້ຊັດເຈນ.

ໃນໄລຍະຍາວ ການປ່ຽນແປງດິນຟ້າອາກາດ ແມ່ນເປັນໄພຂົ່ມຂູ່ ທີ່ຮ້າຍແຮງຕໍ່ກັບການພັດທະນາມະນຸດ ແລະ ໃນບາງບ່ອນມັນໄດ້ທຳລາຍຄວາມພະຍາຍາມຂອງຊຸມຊົນສາກົນ ໃນການທີ່ຈະຫຼຸດຜ່ອນຄວາມທຸກຍາກທີ່ໜັກໜ່ວງ.

ຄວາມຂັດແຍ່ງທີ່ຮຸນແຮງ, ຊັບພະຍາກອນທີ່ບໍ່ພຽງພໍ, ການຂາດການປະສານງານ ແລະ ບັນດານະໂຍບາຍທີ່ອ່ອນແອສືບຕໍ່ເຮັດໃຫ້ຄວາມຄືບໜ້າດ້ານການພັດທະນາຊັກຊ້າລົງ, ໂດຍສະເພາະໃນທະວີບ ອາຟະລິກາ. ຢ່າງໃດກໍ່ຕາມ ໃນຫຼາຍໆປະເທດ ກໍ່ໄດ້ມີຄວາມກ້າວໜ້າຢ່າງແທ້ຈິງ. ຕົວຢ່າງ ປະເທດ ຫວຽດນາມ ສາມາດຫຼຸດຜ່ອນຄວາມທຸກຍາກລົງເຄິ່ງໜຶ່ງ ແລະ ສາມາດປະສົບຜົນສຳເລັດ ໃນດ້ານ ການສຶກສາຊັ້ນປະຖົມຢ່າງກວ້າງຂວາງ ກາຍເປົ້າໝາຍຂອງປີ 2015. ປະເທດ ໂມຊຳບິກ ໄດ້ຫຼຸດຜ່ອນຄວາມທຸກຍາກ ໄດ້ຢ່າງຫຼວງຫຼາຍ ແລະ ເພີ່ມອັດຕາການເຂົ້າຮຽນໜັງສືໄດ້ ພ້ອມທັງມີການປັບປຸງ ເຮັດໃຫ້ອັດຕາການຕາຍ ຂອງແມ່ ແລະ ເດັກໜ້ອຍລົງ.

ຄວາມຄືບໜ້າ ຂອງການພັດທະນານີ້ ແມ່ນຈະຖືກການປ່ຽນແປງດິນຟ້າອາກາດກີດຂວາງນັບມື້ນັບເພີ່ມຂຶ້ນ. ດັ່ງນັ້ນ ພວກເຮົາຕ້ອງຕໍ່ສູ້ຕ້ານກັບຄວາມທຸກຍາກ ແລະ ຕ້ານກັບຜົນກະທົບ ຈາກການປ່ຽນແປງດິນຟ້າອາກາດ ໂດຍຖືເອົາວຽກນີ້ເປັນຄວາມພະຍາຍາມຮ່ວມກັນ. ຄວາມພະຍາຍາມເຫລົ່ານັ້ນ, ຕ້ອງສົ່ງເສີມ ເຊິ່ງກັນ ແລະ ກັນ ແລະ ຄວາມສຳເລັດຕ້ອງປະສົບຜົນໄດ້ ຈາກການຮ່ວມມືກັນ. ຄວາມສຳເລັດ ຈະຕ້ອງລວມມີການປັບດັດຢ່າງຫຼວງຫຼາຍ, ຍ້ອນວ່າ ການປ່ຽນແປງດິນຟ້າອາກາດ ຍັງຄົງຈະສົ່ງຜົນກະທົບຢ່າງຫຼວງຫຼາຍຕໍ່ບັນດາປະເທດທີ່ທຸກຍາກທີ່ສຸດ, ເຖິງແມ່ນວ່າຄວາມພະຍາຍາມ ໃນການຫຼຸດຜ່ອນ ການປ່ອຍອາຍພິດຢ່າງຈິງຈັງ ໄດ້ເລີ່ມຂຶ້ນຢ່າງທັນທີທັນໃດແລ້ວກໍ່ຕາມ. ບັນດາປະເທດຕ່າງໆ ຕ້ອງມີການພັດທະນາສ້າງແຜນການປັບດັດໃຫ້ເຂົ້າກັບສະພາບຂອງຕົນ ແຕ່ວ່າຊຸມຊົນສາກົນຕ້ອງຊ່ວຍເຫຼືອເຂົາເຈົ້າ.

ເພື່ອຮັບມືກັບຄວາມທ້າທາຍນັ້ນ ແລະ ກັບ

ຄວາມຮຽກຮ້ອງຕ້ອງການອັນຮີບດ່ວນ ຈາກບັນດາຜູ້ນຳ ໃນບັນດາປະເທດກຳລັງພັດທະນາ, ໂດຍສະເພາະ ໃນ ຊັບ-ຊາຮາຣານ ອາຟະລິກາ, ອົງການ UNEP ແລະ UNDP ໄດ້ຮ່ວມມືກັນ ໃນປະເທດ Nairobi ໃນລະຫว่າງ ກອງປະຊຸມດ້ານດິນຟ້າອາກາດ ໃນເດືອນ ພະຈິກ ປີ 2006. ສອງອົງກອນ ໄດ້ຕັດສິນໃຈ ໃຫ້ການຊ່ວຍເຫຼືອ ໃນການຫຼຸດຜ່ອນ ຄວາມດ້ອຍໂອກາດ ແລະ ມີການເສີມສ້າງຄວາມສາມາດ ຂອງບັນດາປະເທດກຳລັງພັດທະນາ ເພື່ອເກັບກ່ຽວເອົາຜົນປະໂຫຍດຈາກກົນໄກການພັດທະນາ ທີ່ສະອາດ ໃນພື້ນທີ່ຕ່າງໆ ເຊັ່ນ: ການພັດທະນາພະລັງງານ ທີ່ເອົາກັບມາໃຊ້ຄືນໃໝ່ໄດ້ ຫຼື ພະລັງງານທົດແທນ ແລະ ພະລັງງານທີ່ສະອາດກວ່າ, ແຜນການການປົກປ້ອງດິນຟ້າອາກາດ ແລະ ການຫາທາງເລືອກໃໝ່ ເພື່ອຫຼຸດຜ່ອນການຊົມໃຊ້ນ້ຳມັນ.

ການມີຄູ່ຮ່ວມງານ, ຈະຊ່ວຍເຮັດໃຫ້ລະບົບຂອງສະຫະປະຊາຊາດ ດຳເນີນການ ໄດ້ຢ່າງທັນທີທັນໃດໃນການຕອບສະໜອງຄວາມຕ້ອງການ ຂອງຄວາມພະຍາຍາມຂອງລັດຖະບານ ໃນການດຶງເອົາປັດໄຈ ກ່ຽວກັບ ຜົນກະທົບ ການປ່ຽນແປງດິນຟ້າອາກາດ ເຂົ້າໃນການຕັດສິນໃຈ ທາງດ້ານການລົງທຶນ ຂອງເຂົາເຈົ້າ, ທັງເປັນສິ່ງຢັ້ງຢືນ ເຖິງຄວາມຕັດສິນໃຈຂອງ UN ທີ່ຈະດຳເນີນງານ ແບບເປັນອັນໜຶ່ງອັນດຽວ ຕໍ່ກັບຄວາມທ້າທາຍ ຂອງການປ່ຽນແປງດິນຟ້າອາກາດ. ຕົວຢ່າງ, ພວກເຮົາສາມາດຊ່ວຍ ປະເທດຕ່າງໆປັບປຸງສິ່ງກໍ່ສ້າງໂຄງລ່ານພື້ນຖານ ທີ່ມີຢູ່ ເພື່ອເຮັດໃຫ້ປະຊາຊົນຮັບມື ກັບໄພນ້ຳຖ້ວມ ທີ່ເພີ່ມຂຶ້ນ ແລະ ຖີ່ຂຶ້ນ ແລະ ສະຖານະການສະພາບອາກາດທີ່ໂຫດຮ້າຍ. ພວກເຮົາສາມາດພັດທະນາ ພືດທີ່ມີຄວາມສາມາດຕ້ານທານ ກັບສະພາບອາກາດ ຂຶ້ນໄດ້.

ໃນເວລາທີ່ພວກເຮົາ ໄດ້ດຳເນີນການດັດປັບ ພວກເຮົາຕ້ອງເລີ່ມຕົ້ນຫຼຸດຜ່ອນ ການປ່ອຍອາຍພິດ ແລະ ກ້າວສູ່ຂັ້ນຕອນອື່ນ ຄືການບັນເທົາການປ່ຽນແປງທີ່ບໍ່ສາມາດເອົາຄືນມາໄດ້, ທີ່ກຳລັງເກີດຂຶ້ນຢູ່ເພື່ອ ບໍ່ໃຫ້ມີການເພີ່ມທະວີຂຶ້ນ ໃນທິດສະວັດຕໍ່ໜ້າ. ຖ້າການແກ້ໄຂບັນເທົາບໍ່ໄດ້ເລີ່ມຂຶ້ນຢ່າງໄວທີ່ສຸດ ແຕ່ຕອນນີ້, ມູນຄ່າຂອງການດັດປັບໃນ 20 ປີ ຫຼື 30 ປີ ຕໍ່ໜ້າ ກໍ່ຈະສູງຈົນກາຍເປັນສິ່ງຫວງຫ້າມ ສຳຫຼັບບັນດາປະເທດທີ່ທຸກຍາກທີ່ສຸດ.

ການເຮັດໃຫ້ການປ່ອຍອາຍພິດເຮືອນແກ້ວຄົງຕົວ ເພື່ອຈຳກັດການປ່ຽນແປງ ດິນຟ້າອາກາດ ເປັນຍຸດທະສາດການຮັບປະກັນ ທີ່ມີຄຸນຄ່າທີ່ສຸດ ສຳຫຼັບໂລກໂດຍລວມ, ລວມເຖິງ ບັນດາປະເທດທີ່ຮັ່ງມີ, ແລະ ມັນເປັນພາກສ່ວນທີ່ສຳຄັນ ສຳຫຼັບການຕໍ່ສູ້ຕ້ານກັບຄວາມທຸກຍາກທັ້ງໝົດຂອງພວກເຮົາ ແລະ ສຳຫຼັບເປົ້າໝາຍ ການພັດທະນາສະຫະສະວັດ. ບັນດາຈຸດປະສົງສອງດ້ານຂອງນະໂຍບາຍທາງດ້ານ ດິນຟ້າອາກາດນີ້ ຕ້ອງເຮັດໃຫ້ພວກມັນ ເປັນບູລິມະສິດ ສຳລັບບັນດາຜູ້ນຳ ໃນທົ່ວໂລກ.

ແຕ່ໃນການສ້າງຄວາມຈຳເປັນ ໃນການຈຳກັດການປ່ຽນແປງດິນຟ້າອາກາດ ແລະ ໃນການຊ່ວຍເຫຼືອຜູ້ດ້ອຍໂອກາດທີ່ສຸດ ເພື່ອໃຫ້ສາມາດດັດປັບເຂົ້າກັບສິ່ງທີ່ຫຼີກລ້ຽງບໍ່ໄດ້ນັ້ນ, ພວກເຮົາຕ້ອງເດີນໜ້າຕໍ່ໄປ ແລະ ກຳນົດລັກສະນະຂອງນະໂຍບາຍຕ່າງໆ ທີ່ຈະຊ່ວຍພວກເຮົາ ໃຫ້ໄດ້ຮັບໝາກຜົນທີ່ພວກເຮົາຢາກໄດ້.

ໂດຍລວມແລ້ວກໍ່ມີຫຼາຍໆສິ່ງສາມາດເວົ້າໄດ້ ຄື: ໜຶ່ງ, ຖ້າເບິ່ງຕາມ ທິດທາງທີ່ໂລກກຳລັງກ້າວໄປນີ້ ມັນມີຄວາມຈຳເປັນຕ້ອງມີການປ່ຽນແປງຢ່າງໃຫ່ຍຫລວງ. ພວກເຮົາຕ້ອງການມີການປ່ຽນແປງຢ່າງໃຫ່ຍຫຼວງ ແລະ ມີບັນດານະໂຍບາຍໃໝ່ທີ່ມີແນວໂນ້ມເປັນໄປໄດ້ສູງ.

ສອງ, ຈະເກີດມີຕົ້ນທຶນສູງໃນໄລຍະສັ້ນ. ພວກເຮົາຕ້ອງມີການລົງທຶນ ໃສ່ການຈຳກັດການປ່ຽນແປງດິນຟ້າອາກາດ. ໃນຊ່ວງເວລາຕໍ່ມາກໍ່ຈະມີບັນດາຜົນປະໂຫຍດຫຼວງຫລາຍຕາມມາ, ແຕ່ໃນຊ່ວງເລີ່ມຕົ້ນ, ເຊັ່ນດຽວກັນກັບທຸກໆການລົງທຶນ, ພວກເຮົາຕ້ອງແບກຫາບຄ່າໃຊ້ຈ່າຍກ່ອນ. ນີ້ຈະເປັນສິ່ງທີ່ທ້າທາຍ ສຳລັບການປົກຄອງແບບປະຊາທິປະໄຕ: ບັນດາລະບົບການເມືອງຕ້ອງຕົກລົງຈະຈ່າຍຕົ້ນທຶນເບື້ອງຕົ້ນ ເພື່ອເກັບກ່ຽວເອົາຜົນໄດ້ຮັບໄລຍະຍາວ. ການນຳພາຕ້ອງມີການຮຽກຮ້ອງໃຫ້ເບິ່ງໄປຮອດ ບັນດາຮອບວຽນການເລືອກຕັ້ງ.

ພວກເຮົາບໍ່ໄດ້ເບິ່ງໂລກໃນແງ່ຮ້າຍເກີນໄປ. ໃນການຕໍ່ສູ້ຕ້ານອັດຕາເງິນເຟີ້ ທີ່ສູງຂຶ້ນຫຼາຍໃນຊ່ວງອະດີດຜ່ານມາ, ປະຊາທິປະໄຕໄດ້ນຳເອົາສິ່ງຕ່າງໆມາສູ່ລັດຖະທຳມະນູນ ເຊັ່ນ: ທະນາຄານກາງທີ່ປົກຄອງຕົນເອງ ແລະ ການຕົກລົງເຫັນດີທາງດ້ານນະ�โยบาย ທີ່ເຮັດໃຫ້ບັນລຸໄດ້ອັດຕາເງິນເຟີ້ທີ່ຫລຸດລົງ ເຖິງແມ່ນວ່າມີຄວາມຕ້ອງການໄລຍະສັ້ນທີ່ຈະນຳໃຊ້ມາດຕະການນຳໃຊ້ສິ່ງພິມ. ມັນກໍ່ຈະເກີດຂຶ້ນກັບດິນຟ້າອາກາດ ແລະ ສະພາບແວດລ້ອມ ໃນລັກສະນະດຽວກັນທີ່: ສັງຄົມຕ້ອງມີການຕົກລົງເບື້ອງຕົ້ນ ແລະ ເສຍສະຫຼະຄວາມເພິ່ງພໍໃຈໄລຍະສັ້ນ ເພື່ອການຢູ່ດີມີສຸກໃນໄລຍະຍາວກວ່າ.

ພວກເຮົາຍາກກ່າວເພີ່ມເຕີມວ່າ ໃນຊ່ວງໄລຍະທີ່ກຳລັງຫັນປ່ຽນໄປສູ່ ຮູບແບບການດຳລົງຊີວິດ ແລະ ພະລັງງານທີ່ປົກປ້ອງດິນຟ້າອາກາດນັ້ນ ມັນຈະມີຄ່າໃຊ້ຈ່າຍໄລຍະສັ້ນຕ່າງໆ, ແຕ່ກໍ່ອາດຈະມີຜົນ ປະໂຫຍດທາງດ້ານເສດຖະກິດຫລາຍກວ່າ ສິ່ງທີ່ການເຮັດໃຫ້ອຸນຫະພູມຄົງຕົວສາມາດບັນລຸໄດ້. ບັນດາຜົນປະໂຫຍດເຫຼົ່ານີ້ສາມາດປະກົດເປັນຈິງໄດ້ ໂດຍຜ່ານກົນໄກ ເກເນຊຽນ ຊຸມເປເຕຣຽນ (Keynesian Schumpeterian) ໂດຍມີສິ່ງຈູງໃຈໃໝ່ ສຳລັບການລົງທຶນໃຫຍ່ ທີ່ກະຕຸ້ນຄວາມຕ້ອງການທັງໝົດ ແລະ ການທຳລາຍທີ່ເກີດຂຶ້ນ ທີ່ນຳໄປສູ່ການປະດິດສ້າງ ແລະ ການກະໂດດຂ້າມທາງດ້ານຜົນຜະລິດ ໃນຫຼາຍໆຂະແໜງການ. ມັນກໍ່ອາດເປັນໄປໄດ້ຍາກ ທີ່ຈະກະຕວງລ່ວງໜ້າກ່ຽວກັບປະລິມານ ຂອງບັນດາຜົນກະທົບເຫຼົ່ານີ້ ແຕ່ການນຳເອົາຜົນກະທົບເຫລົ່ານີ້ມາພິຈະລະນາ ກໍ່ສາມາດນຳໄປສູ່ອັດຕາສ່ວນຄວາມຄຸ້ມຄ່າ ຕໍ່ການລົງທຶນທີ່ສູງຂຶ້ນຂອງບັນດານະ�โยบาย ທາງດ້ານດິນຟ້າອາກາດທີ່ດີ.

ການອອກແບບ ບັນດານະ�โยบายທີ່ດີ ຈະຕ້ອງເອົາໃຈໃສ່ເຖິງ ຄວາມອັນຕະລາຍ ຈາກການໄວ້ວາງໃຈຕໍ່ການຄວບຄຸມແບບອາດຍາສິດຫຼາຍເກີນໄປ. ໃນຂະນະທີ່ການນຳພາຂອງລັດຖະບານຈະກາຍມາເປັນສິ່ງສຳຄັນ ໃນການແກ້ໄຂບັນຫານອກຕົວ ທີ່ໃຫຍ່ຫຼວງ ເຊິ່ງແມ່ນ ການປ່ຽນແປງດິນຟ້າອາກາດ, ແຕ່ການຕະຫຼາດ ແລະ ລາຄາກໍ່ຕ້ອງດຳເນີນງານ, ເພື່ອເຮັດໃຫ້ການຕັດສິນໃຈຂອງຂະແໜງເອກະຊົນ ສາມາດນຳໄປສູ່ການຕັດສິນໃຈລົງທຶນ ແລະ ຜະລິດ ທີ່ສູງທີ່ສຸດ ຢ່າງເປັນທຳມະຊາດ.

ອາຍກາກບອນ ແລະ ທຽບເທົ່າກາກບອນຕ້ອງໄດ້ມີການຕີເປັນລາຄາ ເພື່ອສະທ້ອນເຖິງ ມູນຄ່າທາງດ້ານສັງຄົມທີ່ແທ້ຈິງ. ນີ້ຕ້ອງເປັນສິ່ງສຳຄັນ ໃນນະ�โยบายການບັນເທົາ. ໂລກໄດ້ຜ່ານຫຼາຍທິດສະວັດ ໃນການກຳຈັດ ບັນດາຂໍ້ຈຳກັດທາງດ້ານປະລິມານ ໃນຫຼາຍໆຂອບເຂດ, ນີ້ບໍ່ແມ່ນເວລາທີ່ຈະກັບມາຫາລະບົບຂອງການໃຫ້ໂຄວຕ້າທີ່ຫຼວງຫຼາຍ ແລະ ການຄວບຄຸມແບບອາດຍາສິດ ຍ້ອນການປ່ຽນແປງ ທາງດ້ານ ດິນຟ້າອາກາດ. ບັນດາເປົ້າໝາຍ ການປ່ອຍອາຍພິດ ແລະ ປະສິດທິພາບ ທາງດ້ານພະລັງງານ ແມ່ນມີບົດບາດສຳ

ຄັນ ແຕ່ມັນກ່ຽວກັບລະບົບການຕີເປັນລາຄາ ທີ່ຕ້ອງເຮັດໃຫ້ມັນມີຄວາມງ່າຍດາຍຂຶ້ນເພື່ອ ບັນລຸເປົ້າໝາຍຂອງພວກເຮົາ. ນີ້ຈະຮຽກຮ້ອງເຖິງ ການເຈລະຈາທີ່ເລິກເຊິ່ງ ຫຼາຍກວ່າເດີມຈາກທີ່ພວກເຮົາ ໄດ້ເຫັນຜ່ານມາ ລະຫว่างບັນດານັກເສດຖະສາດ ແລະ ນັກວິທະຍາສາດ ທາງດ້ານດິນຟ້າອາກາດ ເຊັ່ນດຽວກັບ ນັກສິ່ງແວດລ້ອມ. ພວກເຮົາຫວັງວ່າ ບົດລາຍງານ ການພັດທະນາມະນຸດ ນີ້ຈະປະກອບສ່ວນ ໃນການເຈລະຈາດັ່ງກ່າວ.

ບັນດາສິ່ງທ້າທາຍທາງດ້ານນະໂຍບາຍ ທີ່ຫຍຸ້ງຍາກທີ່ສຸດ ແມ່ນຈະກ່ຽວຂ້ອງກັບການແຈກຢາຍ. ໃນຂະນະທີ່ມີແນວໂນ້ມທີ່ຈະມີຄວາມສ່ຽງທີ່ຮ້າຍແຮງສຳລັບທຸກໆຄົນ, ການແບ່ງປັນຄ່າໃຊ້ຈ່າຍຕົ້ນທຶນ ແລະ ຜົນປະ�โຫຍດໄລຍະສັ້ນ ແລະ ໄລຍະກາງ ຈະບໍ່ເປັນໃນຮູບແບບດຽວ. ຄວາມທ້າທາຍ ທາງດ້ານການແຈກຢາຍ ແມ່ນເຮັດໃຫ້ມີຄວາມຫຍຸ້ງຍາກ ຍ້ອນບັນດາຜູ້ທີ່ສ່ວນໃຫຍ່ສ້ຳງບັນຫາ-ເຊັ່ນບັນດາປະເທດ ທີ່ຮັ່ງມີ-ຈະບໍ່ແມ່ນຜູ້ທີ່ໄດ້ຮັບຄວາມເສຍຫາຍຫລາຍທີ່ສຸດໃນໄລຍະສັ້ນ. ຜູ້ໄດ້ຮັບເຄາະຮ້າຍທີ່ສຸດ ແມ່ນຜູ້ທຸກຍາກທີ່ສຸດ ທີ່ເຊິ່ງບໍ່ໄດ້ປ່ອຍ ແລະ ຍັງຄົງບໍ່ໄດ້ປ່ອຍອາຍພິດເຮືອນແກ້ວ. ໃນໄລຍະກາງ, ຫຼາຍປະເທດທີ່ມີລາຍໄດ້ປານກາງ ກຳລັງກາຍມາເປັນຜູ້ທີ່ປ່ອຍອາຍພິດຕົວສຳຄັນ ແຕ່ວ່າເຂົາເຈົ້າບໍ່ມີໜີ້ສິນ ການປ່ອຍອາຍຄາບອນໃສ່ໂລກ ຄືທີ່ບັນດາປະເທດຮັ່ງມີໄດ້ສະສົມໄວ້ ແລະ ເຂົາເຈົ້າກໍ່ເປັນຜູ້ທີ່ປ່ອຍ ອາຍພິດໃນລະດັບຕ່ຳ ເມື່ອທຽບອັດຕາສ່ວນຕໍ່ຫົວຄົນ. ພວກເຮົາຕ້ອງຊອກຫາວິທີທາງ ທີ່ເປັນທີ່ຍອມຮັບໄດ້ ທັງທາງດ້ານການເມືອງ ແລະ ດ້ານສິນລະທຳ ເພື່ອທີ່ຈະຊ່ວຍໃຫ້ພວກເຮົາລິເລີ່ມກ້າວໄປຂ້າງໜ້າ ເຖິງແມ່ນວ່າ ຍັງຄົງມີການບໍ່ເຫັນດີ ກ່ຽວກັບການແບ່ງປັນພາລະ ແລະ ຜົນປະ�โຫຍດໃນໄລຍະຍາວ. ພວກເຮົາບໍ່ຄວນປ່ອຍໃຫ້ການທີ່ຕົກລົງກັນຍັງບໍ່ທັນໄດ້ກ່ຽວກັບການແຈກຢາຍນັ້ນ ມາປິດກັ້ນເສັ້ນທາງກ້າວໄປຂ້າງໜ້າ ຍ້ອນວ່າ ພວກເຮົາບໍ່ສາມາດລໍຖ້າ ໃຫ້ມີຄວາມແນ່ນອນແທ້ໆກ່ອນ ໃນທິດທາງການປ່ຽນແປງ ດິນຟ້າອາກາດ ທີ່ມີແນວໂນ້ມຈະເກີດຂຶ້ນກ່ອນທີ່ພວກເຮົາຈະເລີ່ມຕົ້ນດຳເນີນການໃດໆ. ພວກເຮົາຫວັງໄວ້ ເຊັ່ນກັນວ່າ ບົດລາຍງານ ການພັດທະນາມະນຸດຈະຊ່ວຍເອື້ອອຳນວຍໃຫ້ແກ່ການຖົກຖຽງ ແລະ ເຮັດໃຫ້ການເດີນທາງເລີ່ມຕົ້ນຂຶ້ນ.

ເກມານ ເດີວິສ
ຜູ້ບໍລິຫານ
ອົງການສະຫະປະຊາຊາດເພື່ອການພັດທະນາ

ອາຄິມ ສະຕາຍເນີ
ຜູ້ອຳນວຍການບໍລິຫານງານ
ອົງການສະຫະປະຊາຊາດເພື່ອສິ່ງແວດລ້ອມ

ການວິເຄາະ ແລະ ຄຳແນະນຳດ້ານນະໂຍບາຍຂອງບົດລາຍງານສະບັບນີ້ ບໍ່ໝາຍເຖິງວ່າຈະສະທ້ອນເຖິງທັດສະນະຂອງອົງການສະຫະປະຊາຊາດເພື່ອການພັດທະນາ, ຂອງຄະນະບໍລິຫານງານ ຫລື ຂອງປະເທດສະມາຊິກຂອງອົງການ. ບົດລາຍງານນີ້ ແມ່ນເອກະສານສິ່ງພິມທີ່ເປັນເອກະລາດທີ່ດຳເນີນການຄົ້ນຄວ້າໂດຍ UNDP. ມັນເປັນໝາກຜົນຂອງຄວາມພະຍາຍາມຮ່ວມກັນຂອງທີມງານທີ່ປຶກສາ ແລະ ຜູ້ໃຫ້ຄຳປຶກສາທີ່ມີຊື່ສຽງ ແລະ ໂດຍທີມງານບົດລາຍງານການພັດທະນາມະນຸດ. ທ່ານ ເຄວິນ ວັດກິນສ (Kevin Watkins), ອຳນວຍການຫ້ອງການບົດລາຍງານດ້ານການພັດທະນາມະນຸດ ເປັນຜູ້ນຳພາວຽກງານຄັ້ງນີ້.

ບົດລາຍງານການພັດທະນາມະນຸດ 2007/2008

ພາບລວມ ການຕໍ່ສູ້ກັບການປ່ຽນແປງດິນຟ້າອາກາດ: ຄວາມເປັນອັນໜຶ່ງອັນດຽວກັນຂອງມະນຸດ ໃນໂລກທີ່ແບ່ງແຍກ

ພາກທີ 1 ການປ່ຽນແປງດິນຟ້າອາກາດໃນສັດຕະວັດທີ 21

1.1 ການປ່ຽນແປງດິນຟ້າອາກາດ ແລະ ການພັດທະນາມະນຸດ
1.2 ວິທະຍາສາດກ່ຽວກັບດິນຟ້າອາກາດ ແລະ ພາບໃນອນາຄົດ
1.3 ຈາກລະດັບໂລກສູ່ລະດັບທ້ອງຖິ່ນ - ການວັດແທກຮ່ອງຮອຍສະສະອາຍຄາບອນໃນໂລກທີ່ບໍ່ເທົ່າທຽມກັນ
1.4 ຫລີກລ້ຽງການປ່ຽນແປງດິນຟ້າອາກາດທີ່ອັນຕະລາຍ - ເສັ້ນທາງການປ່ອຍອາຍພິດແບບຍືນຍົງ
1.5 ທຸລະກິດຕາມປົກກະຕິ - ເສັ້ນທາງສູ່ອນາຄົດຂອງດິນຟ້າອາກາດແບບບໍ່ຍືນຍົງ
1.6 ຍ້ອນຫຍັງພວກເຮົາຈຶ່ງຕ້ອງດຳເນີນການເພື່ອຫລີກລ້ຽງການປ່ຽນແປງດິນຟ້າອາກາດ
ພາກສະຫລຸບ

ພາກທີ 2 ສິ່ງທີ່ໜ້າຕົກໃຈດ້ານດິນຟ້າອາກາດ: ຄວາມສ່ຽງ ແລະ ຄວາມບໍ່ໝັ້ນຄົງໃນໂລກທີ່ບໍ່ເທົ່າທຽມກັນ

2.1 ສິ່ງທີ່ໜ້າຕົກໃຈດ້ານດິນຟ້າອາກາດ ແລະ ກັບດັກດ້ານການພັດທະນາມະນຸດທີ່ຕ່ຳ
2.2 ເບິ່ງໄປຂ້າງໜ້າ - ບັນຫາເກົ່າ ແລະ ຄວາມສ່ຽງດ້ານການປ່ຽນແປງດິນຟ້າອາກາດໃໝ່
ພາກສະຫລຸບ

ພາກທີ 3 ຫລີກລ້ຽງການປ່ຽນແປງດິນຟ້າອາກາດທີ່ອັນຕະລາຍ: ຍຸດທະສາດຕ່າງໆສຳລັບການລຶບລ້າງ

3.1 ຕັ້ງເປົ້າໝາຍໃນການຫຼຸດຜ່ອນ
3.2 ວາງລາຄາອາຍຄາບອນ - ບົດບາດຂອງຕະຫລາດ ແລະ ລັດຖະບານ
3.3 ບົດບາດທີ່ສຳຄັນຂອງກົດລະບຽບ ແລະ ການດຳເນີນການຂອງລັດຖະບານ
3.4 ບົດບາດຕົ້ນຕໍຂອງການຮ່ວມມືສາກົນ
ພາກສະຫລຸບ

ພາກທີ 4 ດັດປັບໃຫ້ເຂົ້າກັບສິ່ງທີ່ຫລີກລ້ຽງບໍ່ໄດ້: ການດຳເນີນການແຫ່ງຊາດ ແລະ ການຮ່ວມມືສາກົນ

4.1 ສິ່ງທ້າທາຍລະດັບຊາດ
4.2 ການຮ່ວມມືສາກົນກ່ຽວກັບການດັດປັບການປ່ຽນແປງດິນຟ້າອາກາດ
ພາກສະຫລຸບ

ຕົວຊີ້ວັດການພັດທະນາມະນຸດ

ຕາຕະລາງຕົວຊີ້ວັດ
ທິດທາງແນະນຳຜູ້ອ່ານ ແລະ ໝາຍເຫດກ່ຽວກັບຕາຕະລາງ

ການຕໍ່ສູ້ກັບການປ່ຽນແປງດິນຟ້າອາກາດ: ຄວາມເປັນອັນໜຶ່ງອັນດຽວກັນຂອງມະນຸດ ໃນໂລກທີ່ແບ່ງແຍກ

"ຄວາມຄືບໜ້າຂອງມະນຸດ ບໍ່ແມ່ນເປັນໄປຢ່າງອັດຕະໂນມັດ ແລະ ແບບຫຼີກລ້ຽງບໍ່ໄດ້. ປັດຈຸບັນ ພວກເຮົາພົບກັບຄວາມຈິງທີ່ວ່າມື້ອື່ນແມ່ນມື້ນີ້. ພວກເຮົາຜະເຊີນໜ້າກັບ ຄວາມຮີບດ່ວນ ທີ່ຮ້າຍແຮງ ຂອງປັດຈຸບັນນີ້. ໃນສິ່ງທີ່ເປັນໜ້າສົງໄສ ທີ່ບໍ່ໄດ້ເປີດເຜີຍໃຫ້ເຫັນ ຂອງຊີວິດ ແລະ ປະຫວັດສາດ ຍັງມີ ບາງຢ່າງທີ່ເອີ້ນກັນວ່າ:ຊ້າເກີນໄປແລ້ວ...ພວກເຮົາອາດຈະຮ້ອງໄຫ້ຢ່າງໝົດຫວັງເພື່ອໃຫ້ເວລາຢຸດລໍຖ້າ ໃນການເດີນທາງ ຂອງມັນ, ແຕ່ວ່າເວລາ ບໍ່ໄດ້ສາມາດຮັບຟັງທຸກໆ ການຂໍຮ້ອງໃດໆ ແລະ ຟ້າວໄປໜ້າ ເລື່ອຍໆ. ຢູ່ເທິງກະດູກ ແລະ ສິ່ງເສດເຫຼືອ ຈາກຄວາມສິວິໄລ ກໍ່ມີຄວາມເວົ້າທີ່ໜ້າສົງສານຂຽນໄວ້ວ່າ: ຊ້າເກີນໄປແລ້ວ"

ມາຕິນ ລູເທີຄິງ ຈູເນຍ: *"ພວກເຮົາຈະໄປທາງໃດຈາກບ່ອນນີ້: ສັບສົນວຸ້ນວາຍ ຫຼື ເປັນຊຸມຊົນ"*

ຈາກຄຳສອນທາງດ້ານຄວາມຍຸດຕິທຳຂອງສັງຄົມໃນ 4 ທົດສະວັດທີ່ຜ່ານມາ, ຄຳເວົ້າຂອງ ມາຕິນ ລູເທີຄິງ ຍັງຄົງເປັນສຽງສະທ້ອນທີ່ມີພະລັງ. ໃນຊ່ວງເລີ່ມຕົ້ນຂອງສັດຕະວັດທີ່ 21, ພວກເຮົາ ໄດ້ປະເຊີນໜ້າກັບ "ຄວາມຮີບດ່ວນ ທີ່ຂຸ້ນຂ້ຽວ" ຂອງວິກິດການທີ່ເຊື່ອມໂຍງມື້ນີ້ ກັບອະນາຄົດ. ວິກິດການນັ້ນແມ່ນການປ່ຽນແປງດິນຟ້າອາກາດ. ມັນຍັງຄົງແມ່ນ ວິກິດການ ທີ່ສາມາດປ້ອງກັນໄດ້ -ຖ້າຍັງບໍ່ຊ້າເກີນໄປ. ໂລກມີເວລາ ໜ້ອຍກວ່າໜຶ່ງ ທົດສະວັດເພື່ອຈະປ່ຽນແປງວິຖີທາງນັ້ນ. ບໍ່ມີປະ ເດັນໃດສົມຄວນຈະໄດ້ຮັບຄວາມ ສົນອົກສົນໃຈ ທີ່ເລັ່ງດ່ວນ-ຫຼື ດຳເນີນການຢ່າງທັນທີທັນໃດໄປ ກວ່າປະເດັນນີ້.

ການປ່ຽນແປງດິນຟ້າອາກາດ ແມ່ນໄດ້ກຳນົດ ປະເດັນການພັດທະນາມະນຸດ ຂອງລຸ້ນຄົນພວກ ເຮົາ. ທຸກໆການພັດທະນາ ໃນທ້າຍ ທີ່ສຸດແລ້ວ ແມ່ນກ່ຽວກັບການເສີມຂະຫຍາຍທ່າແຮງຂອງ ມະນຸດ ແລະ ເສີມຂະຫຍາຍເສລີພາບຂອງມະນຸດ. ມັນກ່ຽວກັບການທີ່ຄົນເຮົາ ພັດທະນາຄວາມສາ ມາດທີ່ເສີມສ້າງຄວາມເຂັ້ມແຂງດ້ານຈິດໃຈ ໃຫ້ ແກ່ເຂົາເຈົ້າ ເພື່ອໃຫ້ສາມາດຕັດສິນໃຈເລືອກທາງ ເລືອກຕ່າງໆ ແລະ ນຳໄປສູ່ຊີວິດ ທີ່ເຂົາເຈົ້ານິຍົມ ຊົມຊອບ. ການປ່ຽນແປງດິນຟ້າອາກາດ ເປັນໄພ ຂົ່ມຂູ່ຕໍ່ກັບເສລີພາບ ແລະ ຈຳກັດທາງເລືອກ ຂອງມະນຸດ. ມັນກ້າວໄປສູ່ຄຳຖາມ ກ່ຽວກັບຫຼັກ ການຄວາມກະຈ່າງແຈ້ງ ເຊິ່ງໃນນັ້ນຄວາມຄືບໜ້າ ຂອງມະນຸດ ຈະເຮັດໃຫ້ ອະນາຄົດດີກວ່າອະດີດ.

ສັນຍານເຕືອນເບື້ອງຕົ້ນ ໄດ້ປະກົດໃຫ້ພວກ ເຮົາເຫັນແລ້ວ. ໃນມື້ນີ້, ພວກເຮົາເປັນພະຍານ ຮັບຮູ້ດ້ວຍຕົນເອງເຖິງສິ່ງທີ່ເຮັດໃຫ້ການພັດທະ ນາຂອງມະນຸດເກີດການຖອຍຫຼັງ ໃນຊ່ວງຊີວິດ ຂອງພວກເຮົາ. ໃນບັນດາປະເທດກຳລັງພັດທະນາ ຄົນທີ່ທຸກຍາກທີ່ສຸດຈຳນວນຫຼາຍໆຄົນໃນໂລກ ນີ້ກຳລັງຖືກບັງຄັບ ໃຫ້ຮັບມືກັບ ຜົນກະທົບຈາກ

ການປ່ຽນແປງດິນຟ້າ ອາກາດ ໄດ້ໃຫ້ສັນຍານ ເຕືອນອັນສຳຄັນ ກ່ຽວກັບ ສິ່ງໜຶ່ງ ຄື ພວກເຮົາໃຊ້ ບາງຢ່າງຮ່ວມກັນ. ນັ້ນຄື ຜົນໂລກ. ທຸກໆຊາດ ແລະ ຄົນທຸກຄົນຮ່ວມ ສູນຍາກາດອັນດຽວກັນ.

ການປ່ຽນແປງດິນຟ້າອາກາດ. ບັນດາການກະທົບ ເຫຼົ່ານີ້ ບໍ່ໄດ້ຖືກຮັບຮູ້ວ່າ ເປັນສິ່ງທີ່ໄດ້ຮັບການເປີດ ເຜີຍ ແລະ ໄດ້ຮັບການຕິດຕາມເບິ່ງຈາກສື່ຕ່າງໆ ຂອງໂລກ. ພວກມັນບໍ່ໄດ້ຮັບຄວາມສົນໃຈໃນຕະ ຫຼາດການເງິນ ແລະ ໃນການວັດແທກ ຜົນຜະລິດ ລວມພາຍໃນ (GDP) ຂອງໂລກ. ແຕ່ການມີໄພ ແຫ້ງແລ້ງເພີ່ມຂຶ້ນ, ການເກີດພາຍຸທີ່ຮຸນແຮງ, ໄພ ນ້ຳຖ້ວມ ແລະ ແຮງກົດດັນທາງດ້ານສະພາບແວດ ລ້ອມ ໄດ້ເຮັດໃຫ້ ຄວາມພະຍາມຂອງຜູ້ທຸກຍາກ ໃນໂລກນີ້ ໃນການສ້າງຊີວິດຂອງເຂົາເຈົ້າ ແລະ ຂອງລູກຫຼານເຂົາເຈົ້າ ໃຫ້ດີຂຶ້ນນັ້ນ ຫຼຸດຖອຍລົງ.

ການປ່ຽນແປງດິນຟ້າອາກາດ ຈະທຳລາຍ ຄວາມພະຍາຍາມຂອງສາກົນໃນການຕໍ່ສູ້ກັບ ຄວາມທຸກຍາກ. 7 ປີທີ່ຜ່ານມາ, ບັນດຜູ້ນຳການ ເມືອງໃນໂລກໄດ້ເຕົ້າໂຮມກັນ ເພື່ອຕັ້ງເປົ້າໝາຍ ໃນການເລັ່ງກະຕຸ້ນ ຄວາມຄືບໜ້າຂອງການພັດ ທະນາ. ເປົ້າໝາຍການພັດທະນາສະຫະສະວັດ ໄດ້ກຳນົດ ຄວາມມຸ່ງມາດປາດຖະນາ ອັນໃໝ່ສຳ ລັບປີ 2015. ຫຼາຍໆສິ່ງໄດ້ບັນລຸຜົນສຳເລັດ, ເຖິງ ແມ່ນວ່າຫຼາຍໆປະເທດ ຍັງບໍ່ບັນລຸໄດ້. ການປ່ຽນ ແປງດິນຟ້າອາກາດ ໄດ້ຂັດຂວາງຄວາມພະຍາ ຍາມໃນການບັນລຸຄວາມຄາດຫວັງ ຂອງເປົ້າ ໝາຍການພັດທະນາສະຫະສະວັດ. ຖ້າເບິ່ງໄປໃນ ອະນາຄົດ, ສິ່ງທີ່ອັນຕະລາຍແມ່ນ ຄວາມຄືບໜ້າ ຈະຢຸດຊະງັດ ແລະ ປີ້ນກັບຄືນກະທົບໃສ່ກັບລຸ້ນ ຄົນອື່ນ ບໍ່ສະເພາະແຕ່ ມີຄວາມທຸກຍາກທີ່ແສນ ສາຫັດ, ແຕ່ທາງດ້ານສຸກຂະພາບ, ພະລານາໄມ, ການສຶກສາ ແລະ ສິ່ງອື່ນໆ.

ວິທີທາງທີ່ໂລກຈະຮັບມືກັບການປ່ຽນແປງ ດິນຟ້າອາກາດໃນມື້ນີ້ ຈະເປັນພາລະຕໍ່ກັບໂອ ກາດການພັດທະນາມະນຸດ ຂອງມະນຸດຊາດສ່ວນ ໃຫຍ່. ຄວາມລົ້ມເຫຼວຈະນຳເອົາ ປະຊາກອນໂລກ ຈຳນວນ 40% - ປະມານ 2.6 ຕື້ຄົນ - ໄປສູ່ອະນາ ຄົດທີ່ມີໂອກາດໜ້ອຍລົງ. ມັນຈະເຮັດໃຫ້ຄວາມບໍ່ ເທົ່າທຽມກັນ ພາຍໃນປະເທດ ຍິ່ງເພີ່ມທະວີຂຶ້ນ. ແລະມັນຈະທຳລາຍຄວາມພະຍາຍາມ ໃນການ ສ້າງຮູບແບບຂອງໂລກາພິວັດ, ເພີ່ມຄວາມແຕກ ຕ່າງ ລະຫວ່າງ "ຄົນມີ" ກັບ "ຄົນບໍ່ມີ".

ໃນໂລກມື້ນີ້, ມັນແມ່ນຜູ້ທຸກຍາກ ທີ່ຕ້ອງ ແບກຫາບສ່ວນທີ່ໜັກທີ່ສຸດ ຂອງການປ່ຽນແປງ ດິນຟ້າອາກາດ. ມື້ອື່ນ, ຈະແມ່ນມະນຸດທັງໝົດ ທີ່ຈະປະເຊີນກັບຄວາມສ່ຽງຕ່າງໆ ທີ່ມາພ້ອມກັບ ພາວະໂລກຮ້ອນ. ການກໍ່ຕົວ ຂອງອາຍພິດເຮືອນ ແກ້ວຢ່າງໄວວາ ໃນຊັ້ນບັນຍາກາດຂອງໂລກກຳ ລັງປ່ຽນແປງການພະຍາກອນດິນຟ້າອາກາດ ໂດຍ ພື້ນຖານສຳລັບລຸ້ນຄົນໃນອະນາຄົດ. ພວກເຮົາ ກຳລັງຖືກໄລ່ໃຫ້ຈົນມຸມ ໄປສູ່ "ຈຸດປ່ຽນແປງ". ສິ່ງ ເຫຼົ່ານີ້ ເປັນສະຖານະການ ທີ່ບໍ່ສາມາດຄາດຄະເນ ໄດ້ ແລະ ບໍ່ເປັນຕາມປົກກະຕິຂອງມັນ ເຊິ່ງສາ ມາດໄຂປະຕູໄປສູ່ຄວາມຫາຍະນະທາງດ້ານນິ ເວດວິດທະຍາ- ເລັ່ງໃຫ້ເກີດການເຈື່ອນຂອງແຜ່ນ ນ້ຳກ້ອນແຜ່ນໃຫຍ່ຂອງໂລກ ເຊິ່ງເປັນກຳລະນີເຖິງ ຂີດສຸດແລ້ວ-ສິ່ງເຫຼົ່ານັ້ນຈະທັນປ່ຽນຮູບແບບຂອງ ການຕັ້ງຖິ່ນຖານຂອງມະນຸດ ແລະ ທຳລາຍບັນດາ ເສດຖະກິດແຫ່ງຊາດ. ລຸ້ນຄົນພວກເຮົາ ອາດຈະບໍ່ ໄດ້ຢູ່ເພື່ອເບິ່ງຜົນທີ່ຕາມມາ. ແຕ່ລູກຫຼານ ແລະ ເຫຼນ ຂອງພວກເຮົາຈະບໍ່ມີທາງເລືອກ ແຕ່ຕ້ອງປະ ເຊີນຢູ່ກັບມັນ. ການທັນກັບໄປສູ່ຄວາມທຸກຍາກ ແລະ ຄວາມບໍ່ເທົ່າທຽມກັນໃນມື້ນີ້, ໄປສູ່ຄວາມ ສ່ຽງ ທີ່ເປັນຫາຍະນະໃນອະນາຄົດ ເປັນເຫດຜົນ ທີ່ສຳຄັນ ທີ່ຕ້ອງມີການ ດຳເນີນການຢ່າງຮີບດ່ວນ.

ຜູ້ໃຫ້ຄຳເຫັນບາງຄົນ ສືບຕໍ່ອ້າງເອົາຄວາມບໍ່ ແນ່ນອນ ກ່ຽວກັບຜົນໄດ້ຮັບ ໃນອະນາຄົດ ເປັນ ບ່ອນອີງ ໃຫ້ມີການຮັບມືກັບການປ່ຽນແປງດິນຟ້າ ອາກາດໃນລະດັບທີ່ຈຳກັດ. ຈຸດເລີ່ມຕົ້ນແບບນັ້ນ ແມ່ນເປັນຈຸດບົກພ່ອງ. ແນ່ນອນມີຫຼາຍໆສິ່ງທີ່ບໍ່ຮູ້

ໄດ້: ວິທະຍາສາດ ທາງດ້ານດິນຟ້າອາກາດ ກ່ຽວພັນກັບຄວາມເປັນໄປໄດ້ ແລະ ຄວາມສ່ຽງ, ແຕ່ບໍ່ແມ່ນກ່ຽວກັບຄວາມແນ່ນອນ. ຢ່າງໃດກໍ່ຕາມ, ຖ້າພວກເຮົາຄຳນຶງເຖິງຄວາມອຸດົມພູນສຸກ ຂອງລູກຫຼານ ແລະ ເຫຼນຂອງພວກເຮົາ, ແມ້ແຕ່ ຄວາມສ່ຽງ ຂອງເຫດການ ຄວາມຫາຍະນະເລັກໆນ້ອຍໆ ກໍ່ຄວນຄ່າແກ່ການໃຫ້ມີວິທີການເຕືອນລະວັງ ທີ່ຮັບປະກັນໄວ້ກ່ອນ. ແລະ ຄວາມບໍ່ແນ່ນອນປຽບດັ່ງມີດສອງຄົມຄື: ຄວາມສ່ຽງຕ່າງໆ ອາດຫຼາຍກວ່າທີ່ພວກເຮົາເຂົ້າໃຈໃນປັດຈຸບັນ.

ການປ່ຽນແປງດິນຟ້າອາກາດ ຮຽກຮ້ອງໃຫ້ມີການດຳເນີນການຮີບດ່ວນຕອນນີ້ ເພື່ອສະແດງໃຫ້ເຫັນເຖິງໄພຂົ່ມຂູ່ ຕໍ່ກັບ 2 ພາກສ່ວນຊຸມຊົນເປົ້າໝາຍຂອງພວກເຮົາ ທີ່ມີສິດມີສຽງທາງດ້ານການເມືອງໜ້ອຍຄື: ຜູ້ທຸກຍາກໃນໂລກ ແລະ ລຸ້ນຄົນໃນອະນາຄົດ. ມັນໄດ້ຍົກບັນຫາທີ່ສຳຄັນຂຶ້ນກ່ຽວກັບຄວາມຍຸດຕິທຳທາງສັງຄົມ, ຄວາມເທົ່າທຽມກັນ ແລະ ສິດທິມະນຸດ ໃນບັນດາປະເທດ ແລະ ລຸ້ນຄົນຕ່າງໆ. ໃນບົດລາຍງານ ການພັດທະນາມະນຸດ ປີ 2007/2008 ພວກເຮົາໄດ້ຕັ້ງຄຳຖາມຕ່າງໆເຫຼົ່ານີ້. ຈຸດເລີ່ມຕົ້ນຂອງພວກເຮົານັ້ນແມ່ນຕໍ່ສູ້ກັບ ການປ່ຽນແປງດິນຟ້າອາກາດ ແລະ ຕ້ອງໄດ້ຮັບໄຊຊະນະ. ໂລກເຮົາຍັງຂາດແຫຼ່ງທຶນ ແລະ ຄວາມສາມາດ ທາງດ້ານເຕັກນິກ ເພື່ອດຳເນີນການ. ຖ້າພວກເຮົາລົ້ມເຫຼວໃນການປ້ອງກັນການປ່ຽນແປງດິນຟ້າອາກາດ ສາຍເຫດກໍ່ຈະແມ່ນຍ້ອນພວກເຮົາບໍ່ສາມາດຜັກດັນໃຫ້ການເມືອງເຂົ້າມາມີສ່ວນຮ່ວມນຳເຮົາໄດ້.

ຜົນໄດ້ຮັບດັ່ງກ່າວ ຈະສະແດງໃຫ້ເຫັນບໍ່ສະເພາະແຕ່ຄວາມລົ້ມເຫຼວ ທາງດ້ານການເມືອງ ແຕ່ຍັງແມ່ນ ທາງດ້ານການນຳພາ, ແລະ ຄວາມລົ້ມເຫຼວ ທາງດ້ານສີນລະທຳ ໃນລະດັບທີ່ບໍ່ມີຫຍັງທຽບໄດ້ໃນປະຫວັດສາດ. ໃນຊ່ວງສັດຕະວັດທີ 20 ຄວາມລົ້ມເຫຼວທາງດ້ານການນຳພາທາງການເມືອງໄດ້ນຳໄປສູ່ ສົງຄາມໂລກ ເຖິງສອງຄັ້ງ. ຜູ້ຄົນຫຼາຍລ້ານຄົນຕ້ອງໄດ້ຈ່າຍຄ່າທົດແທນ ທີ່ຫຼວງຫຼາຍຕໍ່ກັບຄວາມຫາຍະນະ ທີ່ສາມາດຫຼີກລ້ຽງໄດ້. ການປ່ຽນແປງດິນຟ້າອາກາດທີ່ອັນຕະລາຍ ແມ່ນຄວາມຫາຍະນະທີ່ຫຼີກລ້ຽງໄດ້ ຂອງສັດຕະວັດທີ 21 ແລະ ປີຕໍ່ຈາກນັ້ນໄປ. ລຸ້ນຄົນໃນອະນາຄົດ ຈະນຳສິ່ງຄຳພິພາກສາທີ່ແຂງກະດ້າງ ໃຫ້ກັບລຸ້ນຄົນທີ່ເຝົ້າແຕ່ເບິ່ງຂໍ້ມູນ ຫຼັກຖານ ຂອງການປ່ຽນແປງດິນຟ້າອາກາດ, ລຸ້ນຄົນຜູ້ທີ່ມີຄວາມເຂົ້າໃຈຜິນທີ່ຕາມມາ ແຕ່ກໍ່ຍັງສືບຕໍ່ ເດີນຕາມເສັ້ນທາງທີ່ພາ ໃຫ້ຜູ້ດ້ອຍໂອກາດທີ່ສຸດຂອງໂລກ ຫຼາຍໆລ້ານຄົນ ໄປພົບກັບຄວາມທຸກຍາກ ແລະ ເຮັດໃຫ້ລຸ້ນຄົນໃນອະນາຄົດມີຄວາມສ່ຽງຕໍ່ກັບໄພພິບັດທາງດ້ານນິເວດວິທະຍາ.

ການເພິ່ງພາອາໄສ ເຊິ່ງກັນ ແລະ ກັນ ທາງດ້ານນິເວດວິທະຍາ

ການປ່ຽນແປງດິນຟ້າອາກາດ ແມ່ນແຕກຕ່າງຈາກບັນຫາອື່ນໆ ທີ່ມະນຸດປະເຊີນຢູ່ ແລະ ມັນ ທ້າທາຍພວກເຮົາໃຫ້ຄິດແຕກຕ່າງເກົ່າ ໃນຫຼາຍລະດັບ. ເໜືອສິ່ງອື່ນໃດ, ມັນທ້າທາຍພວກເຮົາໃຫ້ຄິດກ່ຽວກັບ ຄວາມໝາຍຂອງການດຳລົງຊີວິດຢູ່ ເປັນສ່ວນໜຶ່ງຂອງຊຸມຊົນມະນຸດທີ່ເພິ່ງພາເຊິ່ງກັນ ແລະ ກັນ ທາງດ້ານນິເວດວິທະຍາ.

ການເພິ່ງພາ ເຊິ່ງກັນ ແລະ ກັນ ທາງດ້ານນິເວດວິທະຍາ ບໍ່ແມ່ນແນວຄວາມຄິດທີ່ບໍ່ມີຕົວຕົນ. ພວກເຮົາທຸກມື້ນີ້ ແມ່ນຢູ່ໃນໂລກທີ່ໄດ້ແບ່ງອອກເປັນຫຼາຍໆລະດັບ. ຜູ້ຄົນໄດ້ຖືກແບ່ງອອກຕາມຖານະ ແລະ ໂອກາດ. ໃນຫຼາຍໆຂົງເຂດ, ການຕໍ່ສູ້ ທາງດ້ານແນວຄິດຊາດນິຍົມ ແມ່ນເປັນບ່ອນທີ່ເຮັດໃຫ້ເກີດມີຄວາມຂັດແຍ່ງ. ສິ່ງທີ່ເຫັນເລື້ອຍໆກໍ່ແມ່ນ ສາດສະໜາ, ວັດທະນະທຳ ແລະ

ພວກເຮົາຄຸ້ມຄອງ ການເພິ່ງພາອາໄສເຊິ່ງກັນ ແລະ ກັນດ້ານຊີວະວິທະຍາແບບ ມັກງ່າຍ. ລຸ້ນຄົນ ລຸ້ນເຮົາ ກຳລັງສະສົມໜີ້ສິນດ້ານຊີວະແບບບໍ່ຍືນຍົງ ເຊິ່ງລຸ້ນຄົນລຸ້ນຫລັງຈະຕ້ອງໄດ້ສືບທອດເອົາໃນອານາຄົດ.

ຊິນເຜົ່າ ເປັນສິ່ງທີ່ເຮັດໃຫ້ເກີດການແບ່ງແຍກ ແລະ ເຮັດໃຫ້ແຕກຕ່າງຈາກຜູ້ອື່ນໆ. ຈາກຄວາມແຕກຕ່າງເຫຼົ່ານີ້, ການປ່ຽນແປງດິນຟ້າອາກາດ ໄດ້ເປັນສິ່ງເຕືອນ ໃຫ້ເຫັນວ່າ ພວກເຮົາໄດ້ມີສ່ວນນຶ່ງນຳກັນ ເຊິ່ງເອີ້ນວ່າ ຜືນໂລກ. ທຸກໆປະເທດ ແລະ ທຸກໆຄົນ ຮ່ວມສູນຍາກາດອັນດຽວກັນ. ແລະ ພວກເຮົາມີໜຶ່ງດຽວເທົ່ານັ້ນ.

ພາວະໂລກຮ້ອນ ເປັນຫຼັກຖານ ວ່າພວກເຮົາ ເຮັດໃຫ້ບັນຍາກາດ ຂອງໂລກແບກຫາບນ້ຳໜັກ ຫຼາຍເກີນກວ່າຄວາມສາມາດຂອງມັນ. ການສະສົມຂອງອາຍພິດເຮືອນແກ້ວ ທີ່ເກັບກັກຄວາມຮ້ອນໃນບັນຍາກາດ ຂອງໂລກແມ່ນກຳລັງສະສົມ ຫລາຍຂຶ້ນ ໃນອັດຕາທີ່ຄາດບໍ່ເຖິງ. ຄວາມເຂັ້ມຂຸ້ນ ໃນປັດຈຸບັນ ແມ່ນຮອດ 380 ສ່ວນຕໍ່ລ້ານ (PPM) ຂອງອັດຕາຄາບອນທຽບຖານ ເຊິ່ງເກີນກວ່າອັດ

ຮູບພາບທີ 1 ການເພີ່ມຂຶ້ນຂອງອາຍພິດຄາບອນ ເຮັດໃຫ້ເພີ່ມການສະສົມ ແລະ ເພີ່ມອຸນຫະພູມໃຫ້ສູງຂຶ້ນ



ແຫລ່ງຂໍ້ມູນ: CDIAC 2007; IPCC 2007a.

ຕາທຳມະຊາດ ຂອງ 650,000 ປີຜ່ານມາ. ໃນສັດຕະວັດທີ 21, ອຸນຫະພູມສະເລັ່ຍຂອງໂລກສາມາດເພີ່ມຂຶ້ນ ຫຼາຍກວ່າ 5 ອົງສາເຊ.

ຖ້າຜົນປ່ຽນຕົວເລກດັ່ງກ່າວເປັນປະໂຫຍກ, ມັນເທົ່າທຽມກັບການປ່ຽນແປງຂອງ ອຸນຫະພູມ ຕັ້ງແຕ່ຍຸກນ້ຳກ້ອນຜ່ານມາ - ໃນສະໄໝ ທີ່ຫຼາຍໆ ບ່ອນໃນເອີລົບ ແລະ ອະເມລິກາເໜືອ ຢູ່ໃຕ້ນ້ຳກ້ອນຫຼາຍກວ່າ 1 ກິໂລແມັດ. ຈຸດຂອບເຂດສຳລັບການປ່ຽນແປງດິນຟ້າອາກາດທີ່ເປັນອັນຕະລາຍ ແມ່ນມີການເພີ່ມຂຶ້ນປະມານ 2 ອົງສາເຊ. ຈຸດຂອບເຂດ ກຳນົດຈຸດທີ່ການພັດທະນາມະນຸດທີ່ຖືກຖອຍກັບຫລັງ ແລະ ເປັນຈຸດປ່ຽນແປງໄປສູ່ຈຸດທີ່ວ່າຄວາມເສຍຫາຍ ທາງດ້ານນິເວດວິດທະຍາ ກາຍເປັນສິ່ງທີ່ຍາກທີ່ຈະຫຼີກລ້ຽງໄດ້.

ຈາກຕົວເລກ ແລະ ການວັດແທກດັ່ງກ່າວນັ້ນ ສະແດງໃຫ້ເຫັນຄວາມເປັນຈິງ ທີ່ຊັດເຈນແລ້ວ. ພວກເຮົາມີການຈັດການບໍລິຫານ ການເພິ່ງພາເຊິ່ງກັນ ແລະ ກັນ ທາງດ້ານນິເວດວິທະຍາ ຂອງພວກເຮົາ ທີ່ຜິດພາດແບບບໍ່ໄດ້ຮີ່ນຕອງ. ຈາກຜົນກະທົບນັ້ນ, ລຸ້ນຄົນພວກເຮົາໄດ້ແລ່ນໄປສູ່ ໜີ້ສິນທາງດ້ານນິເວດວິທະຍາ ທີ່ບໍ່ມີຄວາມຍືນຍົງ ທີ່ລຸ້ນຄົນໃນອະນາຄົດຈະຕ້ອງສືບທອດເອົາ. ພວກເຮົາ ເຮັດໃຫ້ທຶນຮອນ ທາງດ້ານສະພາບແວດລ້ອມ ຂອງລູກຫຼານເຮົາຫຼຸດໜ້ອຍລົງ. ການປ່ຽນແປງດິນຟ້າອາກາດ ທີ່ອັນຕະລາຍ ຈະເປັນຕົວແທນໃຫ້ເຫັນເຖິງການປັບປ່ຽນສູ່ລະດັບການປ່ອຍອາຍພິດເຮືອນແກ້ວ ທີ່ບໍ່ຍືນຍົງ.

ລຸ້ນຄົນໃນອະນາຄົດ ບໍ່ແມ່ນພຽງແຕ່ເປັນຜູ້ທີ່ຕ້ອງຮັບມືກັບບັນຫາທີ່ເຂົາເຈົ້າບໍ່ໄດ້ສ້າງຂຶ້ນ. ແຕ່ຍັງແມ່ນຜູ້ທຸກຍາກໃນໂລກທີ່ຈະໄດ້ຮັບເຄາະໄວທີ່ສຸດ ແລະ ໄດ້ຮັບຜົນກະທົບທີ່ເສຍຫາຍຫຼາຍທີ່ສຸດ. ປະເທດທີ່ຮັ່ງມີ ແລະ ປະຊາກອນຂອງເຂົາເຈົ້າ ເປັນຜູ້ສ້າງອາຍພິດເຮືອນແກ້ວທີ່ຫຼວງຫຼາຍທີ່ຖືກ

ເກັບກັກໄວ້ໃນຊັ້ນບັນຍາກາດ ຂອງໂລກ. ແຕ່ປະເທດທຸກຍາກ ແລະ ປະຊາກອນ ຂອງເຂົາເຈົ້າຈະຕ້ອງໄດ້ຮັບຜົນກະທົບທີ່ສູງທີ່ສຸດ ສຳລັບການປ່ຽນແປງ ດິນຟ້າອາກາດ.

ຄວາມສຳພັນທີ່ປົ້ນກັນ ລະຫວ່າງຄວາມຮັບຜິດຊອບຕໍ່ ການປ່ຽນແປງດິນຟ້າອາກາດ ແລະ ຄວາມອ່ອນໄຫວກັບຜົນກະທົບຂອງມັນ ບາງເທື່ອກໍ່ໄດ້ຖືກລືມໄປ. ການໂຕ້ວາທີໃນສາທາລະນະຂອງປະເທດທີ່ຮັ່ງມີ ໄດ້ເນັ້ນໜັກຫຼາຍຂຶ້ນ ກ່ຽວກັບໄພຂົ່ມຂູ່ທີ່ເກີດຈາກອາຍພິດເຮືອນແກ້ວ ທີ່ເພີ່ມຂຶ້ນ ຈາກປະເທດກຳລັງພັດທະນາ. ໄພຂົ່ມຂູ່ແມ່ນເປັນຄວາມຈິງ. ແຕ່ມັນບໍ່ຄວນປິດບັງບັນຫາທີ່ມີຢູ່. ມະຫາມະຄານທີ (Mahatma Gandhi) ໄດ້ສະທ້ອນໃຫ້ເຫັນວ່າ ອາດຈຳເປັນຕ້ອງມີຫ່ວຍໂລກຫລາຍໆຫ່ວຍ ຖ້າຫາກປະເທດອິນເດຍ ຍັງຄົງເດີນຕາມຮູບແບບ ການພັດທະນາອຸດສະຫະກຳຄືປະເທດອັງກິດ. ພວກເຮົາບໍ່ສາມາດຕອບຄຳຖາມນັ້ນໄດ້. ຢ່າງໃດກໍ່ຕາມ, ພວກເຮົາຄາດຄະເນໃນບົດລາຍງານນີ້ ຖ້າທຸກໆຄົນໃນໂລກນີ້ ປ່ອຍອາຍພິດເຮືອນແກ້ວ ໃນອັດຕາຄືກັນ ກັບປະເທດທີ່ພັດທະນາແລ້ວ ພວກເຮົາຈຳເປັນຕ້ອງມີຫ່ວຍໂລກເຖິງ 9 ຫ່ວຍ.

ໃນຂະນະທີ່ຜູ້ທຸກຍາກປ່ອຍອາຍຄາບອນໃນລະດັບໜ້ອຍດຽວ ແຕ່ເຂົາເຈົ້າກຳລັງແບກຫາບພາລະ ທີ່ໜັກທີ່ສຸດ ເນື່ອງຈາກການບໍລິຫານການເພິ່ງພາເຊິ່ງກັນ ແລະ ກັນ ທາງດ້ານນິເວດວິທະຍາ ຂອງພວກເຮົາ ມີລັກສະນະບໍ່ຍືນຍົງ. ໃນປະເທດຮັ່ງມີ, ການຮັບມືກັບການປ່ຽນແປງດິນຟ້າອາກາດ ໃນປັດຈຸບັນ ສ່ວນຫລາຍແມ່ນກ່ຽວກັບ ເລື່ອງການປັບອຸນຫະພູມລົດລົງ, ກ່ຽວຂ້ອງກັບການມີລະດູຮ້ອນທີ່ຍາວກວ່າເກົ່າ ແລະ ຮ້ອນຂຶ້ນ ແລະ ມີການປ່ຽນຍ້າຍລະດູການ. ເມືອງຕ່າງໆ ເຊັ່ນ ລອນດອນ ແລະ ລອດສແອນເຈີລິດສ ອາດຈະປະເຊີນກັບ ຄວາມສ່ຽງນ້ຳຖ້ວມ ຍ້ອນລະດັບນ້ຳທະເລສູງຂຶ້ນ, ແຕ່ປະຊາຊົນຜູ້ຢູ່ອາໄສຢູ່ບ້ານເຂົາເຈົ້າ ແມ່ນໄດ້ຮັບການປ້ອງກັນ ຈາກລະບົບການປ້ອງກັນນ້ຳຖ້ວມທີ່ລະອຽດ. ແຕ່ກົງກັນຂ້າມ, ເມື່ອພາວະໂລກຮ້ອນ ໄດ້ປ່ຽນຮູບແບບສະພາບອາກາດ ໃນເມືອງແຫຼມອາຟະລິກາ, ມັນໝາຍຄວາມວ່າ ພືດຜັກໄດ້ລົ້ມຕາຍ ແລະ ຜູ້ຄົນຕ້ອງອຶດຫິວ, ຫຼືວ່າຜູ້ຍິງ ແລະ ເດັກຍິງ ແມ່ນຕ້ອງໃຊ້ເວລາຫລາຍຂຶ້ນ ໃນການຕັກນ້ຳ. ແລະ ບໍ່ວ່າຄວາມສ່ຽງໃດໆກໍ່ຕາມທີ່ອາດເກີດຂຶ້ນກັບເມືອງຕ່າງໆໃນໂລກ ຂອງຄົນຮັ່ງມີ, ໃນທຸກມື້ນີ້ ຄວາມອ່ອນແອຕໍ່ກັບການປ່ຽນແປງດິນຟ້າອາກາດ ທີ່ເຊື່ອມໂຍງກັບພາຍຸ ແລະ ໄພນ້ຳຖ້ວມຕ່າງໆ ກໍ່ໄດ້ເກີດຂຶ້ນກັບຊຸມຊົນ ຊົນນະບົດ ໃນສາມຫຼ່ຽມແມ່ນ້ຳແກ້ງ, ແມ່ນ້ຳຂອງ ແລະ ແມ່ນ້ຳນາຍ, ແລະ ໃນເຂດຊຸມຊົນແອອັດ ທີ່ກະຈາຍ

ຕາຕະລາງ ທີ 1 **ຮ່ອງຮອຍສະສົມຂອງອາຍຄາບອນ ໃນລະດັບຂອງ OECD ທີ່ອາດຮຽກຮ້ອງໃຫ້ມີ ຫລາຍກວ່າ 1 ໂລກ [a]**

	ການປ່ອຍອາຍພິດ ຄາບອນ ຕໍ່ຫົວຄົນ (t CO_2) 2004	ທຽບຖານອາຍພິດ ຄາບອນໃນທົ່ວໂລກ[b] (Gt CO_2) 2004	ທຽບຖານຈຳນວນ ງົບປະມານ ອາຍຄາບອນ ໃນລະດັບຍືນຍົງ[c]
ທົ່ວໂລກ[d]	4.5	29	2
ອິດສະຕາລີ	16.2	104	7
ການາດາ	20.0	129	9
ຝຣັ່ງ	6.0	39	3
ເຢຍລະມັນ	9.8	63	4
ອິຕາລີ	7.8	50	3
ຍີ່ປຸ່ນ	9.9	63	4
ເນເທີແລນ	8.7	56	4
ສະເປນ	7.6	49	3
ສະຫະລາດຊະອານາຈັກ	9.8	63	4
ສະຫະລັດ	20.6	132	9

a. ຕາມການວັດແທກໃນງົບຄາບອນແບບຍືນຍົງ.
b. ອ້າງອີງເຖິງການປ່ອຍອາຍພິດຂອງໂລກ ຖ້າທຸກປະເທດໃນໂລກປ່ອຍອາຍພິດໃນລະດັບຕໍ່ຫົວຄົນເທົ່າກັນກັບປະເທດທີ່ລະບຸໄວ້.
c. ອີງໃສ່ທິດທາງການປ່ອຍອາຍພິດແບບຍືນຍົງ ໃນອັດຕາ 14.5 Gt CO2 ຕໍ່ປີ.
d. ຮ່ອງຮອຍສະສົມຄາບອນຂອງໂລກໃນປັດຈຸບັນ.

ແຫລ່ງຂໍ້ມູນ: ການຄິດໄລ່ຂອງຫ້ອງການ HDRO ອີງໃສ່ຕາຕະລາງຕົວຊີ້ວັດທີ 24.

ຢູ່ໃນທົ່ວໂລກທີ່ກຳລັງພັດທະນາ.

ບັນດາຄວາມສ່ຽງທີ່ເກີດຂຶ້ນ ແລະ ຄວາມບໍ່

ໝັ້ນຄົງກ່ຽວຂ້ອງກັບການປ່ຽນແປງດິນຟ້າອາກາດ ແມ່ນຜົນໄດ້ຮັບຂອງ ຂະບວນການ ທາງດ້ານກາຍະພາບ. ແຕ່ວ່າພວກມັນຍັງແມ່ນຜົນທີ່ຕາມມາ ຂອງການ ປະພຶດຕົນ ແລະ ການເລືອກ ຂອງມະນຸດ. ນີ້ແມ່ນອີກດ້ານໜຶ່ງ ຂອງການເພິ່ງ ພາເຊິ່ງກັນແລະກັນ ທາງດ້ານນິເວດວິທະຍາ ທີ່ ບາງເທື່ອ ໄດ້ຖືກຫຼົງລືມໄປ. ເມື່ອຜູ້ຄົນໃນເມືອງ ອາເມລິກາ ເປີດເຄື່ອງປັບອາກາດ ຫຼືວ່າຜູ້ຄົນໃນ ເອີລົບ ຂັບຂີ່ລົດຂອງ ເຂົາເຈົ້າ, ສິ່ງທີ່ເຂົາເຈົ້າເຮັດ ລ້ວນແລ້ວແຕ່ມີຜົນກະທົບຕາມມາ. ຜົນທີ່ຕາມມາ ເຫຼົ່ານັ້ນ ພົວພັນກັບຜູ້ຄົນ ໃນຊຸມຊົນ ຊົນນະບົດໃນ ປະເທດບັງກະລາເທດ, ບັນດາຊາວນາໃນ ເອທິໂອ ເປຍ ແລະ ຜູ້ຢູ່ອາໄສໃນຊຸມຊົນແອອັດ ໃນ ໄຮຕິ. ຕິດພັນກັບການພົວພັນກັນ ຂອງມະນຸດເຫຼົ່ານີ້ ແມ່ນຄວາມຮັບຜິດຊອບ ທາງດ້ານສິນລະທຳ, ລວມທັງຄວາມຮັບຜິດຊອບ ໃນການປ່ຽນແປງ ນະໂຍບາຍ ທາງດ້ານພະລັງງານ ທີ່ກໍ່ໃຫ້ເກີດ ຄວາມເສຍຫາຍ ຕໍ່ກັບຜູ້ຄົນ ແລະ ລຸ້ນຄົນອະນາ ຄົດ.

ຂໍ້ສະໜັບສະໜູນສຳລັບການດຳເນີນການ

ຖ້າໂລກໄດ້ມີການດຳເນີນການຕອນນີ້ມັນຈະເປັນ ໄປໄດ້ -ພຽງແຕ່ເປັນໄປໄດ້ເທົ່ານັ້ນ ທີ່ຈະເຮັດໃຫ້ ອຸນຫະພູມຂອງໂລກເພີ່ມຂຶ້ນພາຍໃນ ຂອບເຂດ 2 ອົງສາ ເຊັນຕິເກດ ທຽບໃສ່ລະດັບກ່ອນການ ປະຕິວັດອຸດສະຫະກຳ. ເພື່ອຢາກໃຫ້ບັນລຸຜົນດັ່ງ ກ່າວນີ້ ໃນອະນາຄົດຈະມີ ຄວາມຕ້ອງການ ການນຳພາ ແລະ ການຮ່ວມໄມ້ ຮ່ວມມືສາກົນ ໃນລະດັບສູງ. ເຖິງຢ່າງໃດກໍ່ຕາມ ການປ່ຽນແປງ ດິນຟ້າອາກາດ ເປັນໄພຂົ່ມຂູ່ ທີ່ມາພ້ອມກັບ ໂອກາດ. ເໜືອສິ່ງອື່ນໃດ, ມັນໄດ້ສະໜອງໂອກາດ ໃຫ້ໂລກເຮົາມາຮ່ວມກັນ ຮັບມືກັບວິກິດການທີ່ຂົ່ມ ຂູ່ຄວາມຄືບໜ້າ ຂອງມະນຸດ.

ຄຸນຄ່າທີ່ຈູງໃຈຂອງຖະແຫຼງການ ທາງດ້ານ ສິດທິມະນຸດໃນໂລກ ເປັນບ່ອນອ້າງອີງ ທີ່ໜັກ ແໜ້ນ. ເອກະສານນັ້ນ ໂຕ້ຕອບກັບຄວາມລົ້ມເຫຼວ ທາງດ້ານການເມືອງ ທີ່ເຮັດໃຫ້ເກີດມີຄວາມເປັນ ຊາດນິຍົມໃນລະດັບສູງ, ຜະເດັດການ ແລະ ສິງ ຄາມໂລກ. ມັນໄດ້ສ້າງໃຫ້ມີ ສິດທິ ແລະ ຄວາມ ຍຸດຕິທຳ-ພົນລະເຮືອນ, ການເມືອງ, ວັດທະນະ ທຳ, ສັງຄົມ ແລະ ເສດຖະກິດ- ສຳລັບ "ທຸກໆ ສະມາຊິກໃນຄອບຄົວມະນຸດ". ຄຸນຄ່າ ທີ່ຈູງໃຈ ຂອງຖະແຫຼງການຂອງໂລກ ແມ່ນຖືເປັນຫຼັກການ ໃນການດຳເນີນການຂອງມະນຸດ ທີ່ຈະປ້ອງກັນ "ການບໍ່ເຄົາລົບ ແລະ ການດູໝິ່ນ ສິດທິມະນຸດ ທີ່ກໍ່ໃຫ້ເກີດມີການກະທຳ ທີ່ໂຫດຮ້າຍປ່າເຖື່ອນ ທີ່ເປັນການ ທຳລາຍ ຄຸນນະທຳຂອງມະນຸດ.

ການຖະແຫຼງການ ທາງດ້ານສິດທິມະນຸດໄດ້ ເບິ່ງຄືນ ໄພພິບັດຂອງມະນຸດ, ສິງຄາມໂລກຄັ້ງທີ່ 2 ທີ່ໄດ້ເກີດຂຶ້ນ. ການປ່ຽນແປງດິນຟ້າອາກາດ ແມ່ນມີຄວາມແຕກຕ່າງ. ມັນແມ່ນໄພພິບັດ ທີ່ ມະນຸດກຳລັງສ້າງຂຶ້ນ. ການທີ່ປ່ອຍໃຫ້ໄພພິບັດ ນັ້ນເກີດຂຶ້ນ ຈະແມ່ນຄວາມລົ້ມເຫຼວ ທາງດ້ານ ການເມືອງ ທີ່ສົມຄວນ ໄດ້ຮັບຄຳກ່າວว່າ "ທຳ ລາຍຄຸນນະທຳຂອງມະນຸດ". ມັນຈະເປັນຕົວແທນ ເຖິງການຝ່າຝືນທີ່ເປັນລະບົບ ຕໍ່ສິດທິມະນຸດຂອງ ຜູ້ທຸກຈົນໃນໂລກ ແລະ ລຸ້ນຄົນໃນອະນາຄົດ ແລະ ຖືເປັນການຖອຍຫຼັງໜຶ່ງກ້າວຈາກມະນຸດໃນ ໂລກເຮົາ. ໃນທາງກົງກັນຂ້າມ, ການປ້ອງກັນການ ປ່ຽນແປງດິນຟ້າອາກາດ ທີ່ມີຄວາມອັນຕະລາຍ ຈະເຮັດໃຫ້ພວກເຮົາມີ ຄວາມຫວັງສຳລັບການ ພັດທະນາ ການແກ້ໄຂຕ່າງໆຮ່ວມກັນ ຕໍ່ກັບບັນ ຫາທີ່ໃຫຍ່ໂຕກວ່າ ທີ່ຂຸມຊົນສາກົນ ກຳລັງຜະເຊີນ ຢູ່. ການປ່ຽນແປງດິນຟ້າອາກາດ ຜະເຊີນໜ້າພວກ ເຮົາ ດ້ວຍຄຳຖາມຕ່າງໆ ທີ່ສັບສົນຢ່າງຫຼວງຫຼາຍ ທີ່ກ່ຽວຂ້ອງກັບ ວິທະຍາສາດ, ເສດຖະກິດ ແລະ

ການພົວພັນສາກົນ. ຄຳຖາມເຫຼົ່ານີ້ຕ້ອງໄດ້ມີການສະແດງ ໃຫ້ເຫັນໂດຍຜ່ານບັນດາ ຍຸດທະສາດຕົວຈິງ. ມັນເປັນສິ່ງສຳຄັນ ທີ່ບໍ່ປະລະປະເດັນທີ່ກວ້າງກວ່າອື່ນໆ ທີ່ເປັນຫຼັກ. ທາງເລືອກຕົວຈິງ ທີ່ຜະເຊີນກັບບັນດາຜູ້ນຳການເມືອງ ແລະ ຜູ້ຄົນໃນມື້ນີ້ ແມ່ນທາງເລືອກລະຫว่ວ່ານ ຄຸນຄ່າມະນຸດໃນໂລກ, ອີກດ້ານໜຶ່ງ, ແລະ ການມີສ່ວນຮ່ວມໃນການມ້ານ ທຳລາຍຢ່ານເປັນລະບົບ ແລະ ກວ້ານຂວານຕໍ່ກັບ ສິດທິມະນຸດ.

ຈຸດເລີ່ມຕົ້ນ ສຳລັບການຫຼີກລ້ຽງ ການປ່ຽນແປງດິນຟ້າອາກາດ ທີ່ເປັນອັນຕະລາຍ ແມ່ນຕ້ອງໄດ້ຍອມຮັບເອົາ 3 ລັກສະນະຂອງບັນຫາ. ລັກສະນະທຳອິດ ແມ່ນການລວມຕົວ ຂອງແຮງອົ້ງຕົ້ງ ແລະ ຜົນໄດ້ຮັບສະສົມຂອງການປ່ຽນແປງດິນຟ້າອາກາດ. ເມື່ອໄດ້ມີການປ່ອຍ, ອາຍຄາບອນ ແລະ ອາຍພິດເຮືອນແກ້ວອື່ນໆ ອາຍເຫຼົ່ານັ້ນຈະ

ການປະກອບຄຳເຫັນພິເສດ: **ການປ່ຽນແປງ ດິນຟ້າອາກາດ-ຮ່ວມກັນ ພວກເຮົາສາມາດເອົາຊະນະ ການຕໍ່ສູ້ນີ້ໄດ້**

ບົດລາຍງານ ການພັດທະນາມະນຸດ 2007/2008 ແມ່ນໄດ້ຂຽນຂຶ້ນ ໃນຊ່ວງເວລາມີການປ່ຽນແປງດິນຟ້າອາກາດ-ເປັນຫົວຂໍ້ທີ່ຢູ່ໃນເວທີສາກົນເປັນເວລາດົນນານ-ທີ່ກຳລັງເລີ່ມຕົ້ນໄດ້ຮັບຄວາມສົນໃຈສູງສຸດ ເຊິ່ງມັນສົມຄວນໄດ້ຮັບ. ການຄົ້ນພົບໃນມໍ່ໆນີ້ ຂອງ IPCC ເປັນສິ່ງທີ່ເຕືອນບອກຈະແຈ້ງ; ພວກເຂົາມີການຢືນຢັນຢ່ານບໍ່ສົງໄສວ່າການຮ້ອນຕົວຂຶ້ນຂອງລະບົບດິນຟ້າອາກາດພວກເຮົາ ມີການເຊື່ອມຕໍ່ ໂດຍກົງກັບກິດຈະກຳ ຂອງມະນຸດ.

ບັນດາຜົນກະທົບ ຂອງການປ່ຽນແປງເຫຼົ່ານີ້ ແມ່ນຮຸນແຮງແລ້ວ, ແລະ ພວກມັນໄດ້ເພີ່ມຂຶ້ນ. ບົດລາຍງານປີນີ້ ແມ່ນການຍ້ຳເຕືອນ ຈຸດຫຼັກໆທັງໝົດ ທີ່ກ່ຽວຂ້ອງ: ການປ່ຽນແປງດິນຟ້າອາກາດ ທີ່ເປັນໄພຂົ່ມຂູ່ "ສອງຄວາມຫາຍະນະ", ດ້ວຍການເຮັດໃຫ້ການພັດທະນາຂອງມະນຸດຊັກຊ້າລົງ ມະນຸດໃນມໍ່ໆນີ້ ສຳລັບຜູ້ທຸກຈົນໃນໂລກ ທີ່ກຳລັງປະສົບຄວາມອັນຕະລາຍ ໄລຍະຍາວສຳລັບມະນຸດທັງໝົດ.

ພວກເຮົາໄດ້ເລີ່ມຕົ້ນເຫັນ ວິກິດການທີ່ໄດ້ເຜີຍຕົວຂຶ້ນເຫຼົ່ານີ້. ຄື້ລະດັບນ້ຳທະເລໄດ້ສູງຂຶ້ນ ແລະ ພາຍຸລະດູຮ້ອນ ໄດ້ເພີ່ມຄວາມຮຸນແຮງຂຶ້ນ, ຜູ້ຄົນຫຼາຍລ້ານຄົນ ຕ້ອງໄດ້ຍ້າຍທີ່ຢູ່ອາໄສ. ຜູ້ຄົນ ແລະ ສິ່ງທີ່ມີຊີວິດອາໄສຢູ່ບົກ ແລະ ຜູ້ທີ່ດ້ອຍໂອກາດ ທີ່ສຸດໃນໂລກເຮົາ, ຕ້ອງຮັບມືກັບຄວາມແຫ້ງແລ້ງ ທີ່ເກີດຂຶ້ນເລື່ອຍໆ ແລະ ເປັນປະຈຳ. ຍ້ອນການເຄື່ອນຍ້າຍ ແລະ ລະລາຍຂອງນ້ຳແຂງ, ການສະໜອງນ້ຳ ແມ່ນ ເລີ່ມຕົ້ນມີຄວາມຫຍຸ້ງຍາກ ແລະ ສ່ຽງສູງຂຶ້ນ.

ພາວະໂລກຮ້ອນໃນມໍ່ໆນີ້ ແມ່ນມີຜົນກະທົບທີ່ບໍ່ເປັນແນວເສັ້ນກົງ ກັບຜູ້ທີ່ທຸກຈົນໃນໂລກ, ແລະ ເປັນສິ່ງຂັດຂວາງ ຄວາມພະຍາຍາມ ເພື່ອບັນລຸເປົ້າໝາຍໃນການພັດທະນາສະຫະສະວັດ. ແຕ່ຈັ່ງໃດກໍ່ຕາມ ໃນໄລຍະຍາວ, ບໍ່ມີໃຜ- ຜູ້ຮັ່ງມີ ຫຼື ຜູ້ທຸກຈົນ ສາມາດໄດ້ຮັບຂໍ້ຍົກເວັ້ນ ຈາກອັນຕະລາຍ ທີ່ເກີດຈາກການປ່ຽນແປງ ດິນຟ້າອາກາດ.

ຂ້າພະເຈົ້າເຊື່ອວ່າ ສິ່ງທີ່ພວກເຮົາເຮັດກ່ຽວກັບ ສິ່ງທ້າທາຍນີ້ ຈະກຳນົດຍຸກສະໄໝ ທີ່ພວກເຮົາອາໄສຢູ່ ຫຼາຍເທົ່າກັບ ທີ່ພວກມັນກຳນົດພວກເຮົາ. ຂ້າພະເຈົ້າເຊື່ອເຊັ່ນກັນວ່າ ການປ່ຽນແປງດິນຟ້າອາກາດນັ້ນ ແມ່ນແນ່ນອນ ເປັນສິ່ງທ້າທາຍຂອງໂລກຊະນິດໜຶ່ງ ທີ່ ສະຫະປະຊາຊາດ (UN) ມີຄວາມເໝາະສົມ ທີ່ຈະຊີ້ແຈງ. ນີ້ແມ່ນເຫດຜົນ ທີ່ຂ້າພະເຈົ້າ ໃຫ້ບູລິມະສິດ ໃນການເຮັດວຽກ ກັບສະມາຊິກແຫ່ງລັດ ເພື່ອຮັບປະກັນວ່າ ສະຫະປະຊາຊາດ (UN) ໄດ້ມີບົດບາດຢ່ານເຕັມສ່ວນ.

ການຮັບມືກັບ ການປ່ຽນແປງດິນຟ້າອາກາດ ຮຽກຮ້ອງໃຫ້ມີການດຳເນີນການ 2 ຢ່ານ. ທຳອິດ ໂລກເຮົາຕ້ອງລຸກຂຶ້ນເພື່ອ ດຳເນີນການບັນເທົາ ແລະ ລຸດຜ່ອນການປ່ອຍອາດພິດເຮືອນແກ້ວ. ບັນດາປະເທດອຸດສາຫະກຳ ຕ້ອງລຸດຜ່ອນອາຍພິດຢ່ານຈິງຈັງ. ມີຄວາມຈຳເປັນ ຕ້ອງລວມເອົາ ການຮ່ວມມືຈາກ ປະເທດກຳລັງພັດທະນາ, ເຊັ່ນດຽວກັບ ການໃຫ້ຜົນຕອບແທນ ໃຫ້ເຂົາເຈົ້າ ໃນການຈຳກັດ ການປ່ອຍອາຍພິດຂອງເຂົາເຈົ້າ ໃນເວລາດຽວກັນກັບ ການເຮັດໃຫ້ການເຕີບໂຕທາງດ້ານເສດຖະກິດ ຢ່ານມີສະຖຽນລະພາບ ແລະ ຄວາມພະຍາຍາມໃນການ ຫຼຸດຜ່ອນຄວາມທຸກຈົນ.

ການດັດປັບ ແມ່ນເປັນຄວາມຈຳເປັນທີ່ສອງຂອງໂລກເຮົາ. ຫຼາຍໆປະເທດ ໂດຍສະເພາະ ປະເທດກຳລັງພັດທະນາ ທີ່ມີຄວາມອ່ອນແອທີ່ສຸດ, ມີຄວາມຕ້ອງການການຊ່ວຍເຫຼືອ ໃນການປັບປຸງສະມັດຕະພາບຂອງເຂົາເຈົ້າ. ມີຄວາມຈຳເປັນ ເຊັ່ນດຽວກັນ ໃນການຊຸກຍູ້ເພື່ອສ້ານເຕັກໂນໂລຊີອັນໃໝ່ ເພື່ອຕໍ່ສູ້ກັບການປ່ຽນແປງ ດິນຟ້າອາກາດ, ເພື່ອເຮັດໃຫ້ເຕັກໂນໂລຊີພະລັງງານທົດແທນ ມີຄວາມຄຸ້ມຄ່າທາງ ດ້ານເສດຖະກິດ ແລະ ສິ່ງເສີມ ການກະຈາຍເຕັກໂນໂລຊີ.

ການປ່ຽນແປງດິນຟ້າອາກາດ ເປັນໄພຂົ່ມຂູ່ ຕໍ່ຄອບຄົວມະນຸດ ທັງໝົດ. ໃນຂະນະດຽວກັນ ມັນໃຫ້ໂອກາດພວກເຮົາ ມາຮ່ວມມືກັນ ແລະ ແກ້ໄຂຮ່ວມກັນ ຕໍ່ກັບບັນຫາຂອງໂລກ. ນີ້ແມ່ນຄວາມຫວັງຂອງຂ້າພະເຈົ້າ ເພື່ອໃຫ້ພວກເຮົາລຸກຂຶ້ນ ເປັນໜຶ່ງດຽວ ເພື່ອຜະເຊີນໜ້າກັບ ຄວາມທ້າທາຍນີ້, ແລະ ມອບໂລກທີ່ສວຍງາມກວ່ານີ້ ສຳລັບລຸ້ນຄົນໃນອະນາຄົດ.

ແບນ ກີ-ມູນ
ເລຂາ ທິການໃຫຍ່ ສະຫະປະຊາຊາດ

ບໍ່ມີປະເທດໜຶ່ງດຽວປະເທດສາ ມາດເອົາຊະນະການປ່ຽນແປງດິນ ຟ້າອາກາດ ດ້ວຍການດຳເນີນງານ ພຽງປະເທດດຽວ ໂດຍລຳພັງ. ການດຳເນີນ ການຮ່ວມກັນ ນັ້ນ ບໍ່ແມ່ນທາງເລືອກແຕ່ເປັນສິ່ງທີ່ ຫຼີກລ້ຽງບໍ່ໄດ້

ຢູ່ໃນບັນຍາກາດເປັນເວລາດົນນານ. ຈະບໍ່ມີວິທີ ໝຸນຄືນຢ່າງໄວວາໃດໆ ເພື່ອໃຫ້ການສະສົມຫຼຸດ ລົງ. ຜູ້ຄົນທີ່ອາໄສໃນໄລຍະເລີ່ມຕົ້ນຂອງ ສັດຕະ ວັດທີ່ 22 ຈະຢູ່ກັບຜົນທີ່ຕາມມາ ຂອງການປ່ອຍ ອາຍພິດຂອງພວກເຮົາ, ກໍ່ຄືກັບພວກເຮົາອາໄສ ຢູ່ກັບຜົນທີ່ຕາມມາ ຂອງການປ່ອຍອາຍພິດ ຕັ້ງ ແຕ່ການປະຕິວັດອຸດສະຫະກຳ. ການຊັກຊ້າ ຂອງ ເວລາ ແມ່ນຜົນທີ່ຕາມມາ ຂອງແຮງອຶ້ງຕຶ້ງທາງ ການປ່ຽນແປງດິນຟ້າອາກາດ. ແມ້ແຕ່ມາດຕະ ການບັນເທົາທີ່ເຄັ່ງຄັດຈະບໍ່ມີຜົນຢ່າງເຫັນໄດ້ເປັນ ຕົນເປັນໂຕ ຈົນຮອດກາງປີ 2030 ແລະ ອຸນຫະ ພູມ ຈະບໍ່ຂຶ້ນສູງສຸດ ຈົນຮອດປີ 2050. ເວົ້າອີກ ຢ່າງໜຶ່ງ, ໃນເຄື່ງທຳອິດ ຂອງສັດຕະວັດທີ່21 ໂລກ ໂດຍທົ່ວໄປ, ແລະ ໂດຍສະເພາະ ຜູ້ທຸກຈົນໃນ ໂລກ, ຈະຕ້ອງອາໄສຢູ່ ກັບການປ່ຽນແປງດິນຟ້າ ອາກາດ ທີ່ພວກເຮົາໄດ້ຕົກລົງປົງໃຈກັບມັນແລ້ວ.

ລັກສະນະ ຂອງການສະສົມ ຂອງການປ່ຽນ ແປງດິນຟ້າອາກາດ ແມ່ນມີຄວາມໝາຍຫຼາຍຢ່າງ. ບາງເທື່ອ ສິ່ງທີ່ສຳຄັນທີ່ສຸດ ແມ່ນຮອບວຽນຂອງ ອາຍຄາບອນ ທີ່ບໍ່ໄປຕາມຮອບວຽນຂອງການ ເມືອງ. ບັນດາຜູ້ນຳ ທາງດ້ານການເມືອງ ລຸ້ນຄົນ ໃນປັດຈຸບັນ ບໍ່ສາມາດແກ້ໄຂບັນຫາ ການປ່ຽນ ແປງດິນຟ້າອາກາດ ແຕ່ພຽງຜູ້ດຽວ ຍ້ອນວ່າ ແນວ ທາງການປ່ອຍອາຍທີ່ຍືນຍົງ ຈະຕ້ອງຖືກປະຕິບັດ ຕາມ ໃນ ຫຼາຍ ໆ ທົດ ສະ ວັດ, ບໍ່ ແມ່ນ ເປັນ ປີ. ຢ່າງ ໃດ ກໍ່ ຕາມ, ຜູ້ ນຳ ການ ເມືອງ ມີ ພະ ລັງ ຄວາ ມ ສາ ມາ ດ ທີ່ ຈະ ເປີ ດ ໂອ ກາ ດ ສຳ ລັ ບ ຄົ ນ ລຸ້ ນ ອະ ນາ ຄົ ດ ຫຼື ອາ ດ ປິ ດ ໂອ ກາ ດ ນັ້ ນ ເລີ ຍ.

ຄວາ ມ ຮີ ບ ດ່ ວ ນ ແມ່ ນ ເປັ ນ ລັ ກ ສະ ນະ ທີ່ ສ ອງ ຂອ ງ ຄ ວ າ ມ ທ້ ຳ ທ າ ຍ ກ ານ ປ່ ຽ ນ ແ ປ ງ ດ ິ ນ ຟ້ າ ອ າ ກ າ ດ ແ ລ ະ ຜ ົ ນ ທ ີ ່ ຕ າ ມ ມ າ ຂ ອ ງ ແ ຮ ງ ອ ຶ ້ ງ ຕ ຶ ້ ງ. ໃ ນ ຫ ຼ າ ຍ ຂ ົ ງ ເ ຂ ດ ຂ ອ ງ ກ ານ ພ ິ ວ ພ ັ ນ ສ າ ກ ົ ນ, ການ ບ ໍ ່ ດ ຳ ເ ນ ີ ນ ກ ານ ໃ ດ ໆ ຫ ຼ ື ການ ເ ຮ ັ ດ ຂ ໍ ້ ເ ຫ ັ ນ ດ ີ ຕ ິ ກ ລ ົ ງ ທ ີ ່ ຊ ັ ກ ຊ ້ ຳ ມ ີ ມ ູ ນ ຄ່ າ ໃ ນ ຂ ອ ບ ເ ຂ ດ ໃ ດ ໜ ຶ ່ ງ. ການ ຄ ້ າ ສ າ ກ ົ ນ ແ ມ ່ ນ ເ ປ ັ ນ ຕ ົ ວ ຢ ່ າ ງ ໜ ຶ ່ ງ. ນ ີ ້ ແ ມ ່ ນ ຂ ົ ງ ເ ຂ ດ ທ ີ ່ ການ ເ ຈ ລ ະ ຈ າ ສ າ ມ າ ດ ລ ົ ້ ມ ເ ຫ ຼ ວ ແ ລ ະ ສ າ ມ າ ດ ກ ັ ບ ຄ ືນ ມ າ ໃ ໝ ່ ໄ ດ ້ ໂ ດ ຍ ປ າ ດ ສ ະ ຈ າ ກ ການ ສ ້ າ ງ ຄ ວ າ ມ ເ ສ ຍ ຫ າ ຍ ໄ ລ ຍ ະ ຍ າ ວ ຕ ່ ໍ ກ ັ ບ ລ ະ ບ ົ ບ ທ ີ ່ ມ ີ ຢ ູ ່ - ດ ັ ່ ງ ມ ີ ສ ັ ກ ຂ ີ ພ ະ ຍ ານ ຈ າ ກ ປ ະ ຫ ວ ັ ດ ສ າ ດ ທ ີ ່ ບ ໍ ່ ຄ ່ ອ ຍ ດ ີ ຂ ອ ງ ການ ປ ະ ຊ ຸ ມ ທ ີ ່ ໂ ດ ຮ າ. ຈ າ ກ ການ ປ ່ ຽ ນ ແ ປ ງ ດ ິ ນ ຟ ້ າ ອ າ ກ າ ດ, ທ ຸ ກ ໆ ປ ີ ຂ ອ ງ ຄ ວ າ ມ ຊ ັ ກ ຊ ້ ຳ ໃ ນ ການ ບ ັ ນ ລ ຸ ຂ ໍ ້ ຕ ົ ກ ລ ົ ງ ໃ ນ ການ ຕ ັ ດ ທ ອ ນ ການ ປ ່ ອ ຍ ອ າ ຍ ພ ິ ດ ໄ ດ ້ ເ ຮ ັ ດ ໃ ຫ ້ ມ ີ ການ ສ ະ ສ ົ ມ ອ າ ຍ ພ ິ ດ ເ ຮ ືອ ນ ແ ກ ້ ວ, ປ ິ ດ ກ ັ ້ ນ ອ ະ ນ າ ຄ ິ ດ ໄ ວ ້ ກ ັ ບ ອ ຸ ນ ຫ ະ ພ ູ ມ ທ ີ ່ ສ ູ ງ ຂ ຶ ້ ນ. ໃ ນ 7 ປ ີ ຫ ຼ ັ ງ ຈ າ ກ ກ ອ ງ ປ ະ ຊ ຸ ມ ໂ ດ ຮ າ, ໂ ດ ຍ ການ ສ ືບ ຕ ໍ ່ ສ ິ ່ ງ ທ ີ ່ ຄ ້ າ ຍ ຄ ື ກ ັ ນ, ແ ຫ ຼ ່ ງ ສ ະ ສ ົ ມ ຂ ອ ງ ອ າ ຍ ພ ິ ດ ເ ຮ ືອ ນ ແ ກ ້ ວ ໄ ດ ້ ເ ພ ີ ່ ມ ຂ ຶ ້ ນ ປ ະ ມ ານ 12 ppm ຂ ອ ງ ອ າ ຍ ຄ າ ບ ອ ນ ແ ລ ະ ແ ຫ ຼ ່ ງ ສ ະ ສ ົ ມ ນ ັ ້ ນ ຍ ັ ງ ຄ ົ ງ ຢ ູ ່ ເ ມ ື ່ ອ ການ ເ ປ ີ ດ ການ ຄ ້ າ ຂ ອ ງ ສ ັ ດ ຕ ະ ວ ັ ດ ທ ີ ່ 22 ໄ ດ ້ ດ ຳ ເ ນ ີ ນ ໄ ປ.

ມ ັ ນ ບ ໍ ່ ມ ີ ສ ິ ່ ງ ທ ີ ່ ຄ ້ າ ຍ ຄ ື ກ ັ ນ ໃ ນ ປ ະ ຫ ວ ັ ດ ສ າ ດ ທ ີ ່ ເ ຫ ັ ນ ໄ ດ ້ ຢ ່ າ ງ ຈ ະ ແ จ ้ ງ ສ ຳ ລ ັ ບ ຄ ວ າ ມ ຮ ີ ບ ດ ່ ວ ນ ຂ ອ ງ ບ ັ ນ ຫ າ ການ ປ ່ ຽ ນ ແ ປ ງ ດ ິ ນ ຟ ້ າ ອ າ ກ າ ດ. ໃ ນ ຊ ່ ວ ງ ສ ິ ງ ຄ າ ມ ເ ຢ ັ ນ, ລ ະ ເ ບ ີ ດ ນ ິ ວ ເ ຄ ຼ ັ ຍ ຫ ຼ າ ຍ ໆ ລ ູ ກ ໄ ດ ້ ຕ ັ ້ ງ ເ ປ ົ ້ າ ໃ ສ ່ ເ ມ ື ອ ງ ຕ ່ າ ງ ໆ ເ ຊ ິ ່ ງ ເ ປ ັ ນ ໄ ພ ຂ ົ ່ ມ ຂ ູ່ ຕ ໍ ່ ຄ ວ າ ມ ປ ອ ດ ໄ ພ ຂ ອ ງ ມ ະ ນ ຸ ດ. ຢ ່ າ ງ ໃ ດ ກ ໍ ່ ຕ າ ມ, "ການ ບ ໍ ່ ເ ຮ ັ ດ ຫ ຍ ັ ງ ເ ລ ີ ຍ" ເ ຄ ີ ຍ ແ ມ ່ ນ ຍ ຸ ດ ທ ະ ສ າ ດ ສ ຳ ລ ັ ບ ການ ລ ະ ງ ັ ບ ຄ ວ າ ມ ສ ່ ງ ໆ. ການ ຮ ັ ບ ຮ ູ ້ ຮ ່ ວ ມ ກ ັ ນ ເ ຖ ິ ງ ຄ ວ າ ມ ເ ປ ັ ນ ຈ ິ ງ ຂ ອ ງ ການ ທ ຳ ລ າ ຍ ເ ຊ ິ ່ ງ ກ ັ ນ ແ ລ ະ ກ ັ ນ ໄ ດ ້ ບ ົ ່ ງ ບ ອ ກ ເ ຖ ິ ງ ຄ ວ າ ມ ໝ ັ ້ ນ ຄ ົ ງ ທ ີ ສ າ ມ າ ດ ຄ າ ດ ການ ໄ ດ ້. ດ ້ ວ ຍ ການ ປ ່ ຽ ນ ແ ປ ງ ດ ິ ນ ຟ ້ າ ອ າ ກ າ ດ, ເ ມ ື ່ ອ ປ ຽ ບ ທ ຽ ບ ແ ລ ້ ວ, ການ ບ ໍ ່ ໄ ດ ້ ເ ຮ ັ ດ ຫ ຍ ັ ງ ເ ລ ີ ຍ ຈ ະ ຮ ັ ບ ປ ະ ກ ັ ນ ໄ ດ ້ ວ ່ າ ອ າ ຍ ພ ິ ດ ເ ຮ ືອ ນ ແ ກ ້ ວ ຈ ະ ມ ີ ຫ ຼ າ ຍ ຂ ຶ ້ ນ, ແ ລ ະ ໃ ນ ເ ວ ລ າ ດ ຽ ວ ກ ັ ນ ກ ໍ ່ ຈ ະ ທ ຳ ລ າ ຍ ທ ່ າ ແ ຮ ງ ການ ພ ັ ດ ທ ະ ນ າ ມ ະ ນ ຸ ດ.

ລ ັ ກ ສ ະ ນ ະ ທ ີ ່ ສ າ ມ ທ ີ ່ ສ ຳ ຄ ັ ນ ຂ ອ ງ ສ ິ ່ ງ ທ້ ຳ ທ າ ຍ ການ ປ ່ ຽ ນ ແ ປ ງ ດ ິ ນ ຟ ້ າ ອ າ ກ າ ດ ແ ມ ່ ນ ມ ັ ນ ເ ປ ັ ນ ປ ະ

ເດັນລະດັບໂລກ. ຊັ້ນບັນຍາກາດຂອງໜ່ວຍໂລກ ບໍ່ໄດ້ຈຳແນກອາຍພິດເຮືອນແກ້ວ ໂດຍອີງໃສ່ ປະເທດທີ່ປ່ອຍອອກ. ອາຍພິດເຮືອນແກ້ວ 1 ໂຕນ ທີ່ມາຈາກປະເທດຈີນ ມີນ້ຳໜັກເທົ່າກັບ 1 ໂຕນ ຄືກັບອາຍພິດເຮືອນແກ້ວ ຈາກອາເມລິກາ ແລະ ການປ່ອຍອາຍພິດ ຂອງປະເທດໜຶ່ງ ຈະແມ່ນ ບັນຫາການປ່ຽນແປງດິນຟ້າອາກາດ ຂອງປະເທດ ອື່ນ. ສິ່ງທີ່ຕິດຕາມມາແມ່ນບໍ່ມີປະເທດໃດປະເທດ ໜຶ່ງ ສາມາດເອົາຊະນະການປ່ຽນແປງດິນຟ້າອາ ກາດດ້ວຍການດຳເນີນງານພຽງປະເທດດຽວ ໂດຍ ລຳພັງ. ການດຳເນີນການຮ່ວມກັນນັ້ນບໍ່ແມ່ນທາງ ເລືອກແຕ່ເປັນສິ່ງທີ່ຫຼີກລ້ຽງບໍ່ໄດ້. ໃນເວລາທີ່ ເບັນຈາມິນ ແຟຮງລິນ ເຊັນຄຳຖະແຫຼງການ ອາເມລິກາ ໃນການປະກາດອິດສະຫຼະພາບ ໃນປີ 1776, ເພິ່ນໄດ້ມີຄຳເຫັນວ່າ "ພວກເຮົາຕ້ອງຢູ່ນຳ ກັນ, ຫຼື ບໍ່ດັ່ງນັ້ນແນ່ນອນທີ່ສຸດ, ພວກເຮົາທັງໝົດ ຄວນຢູ່ແຍກກັນ". ໃນໂລກທີ່ບໍ່ເທົ່າທຽມກັນຂອງ ພວກເຮົາ, ບາງຄົນ - ໂດຍສະເພາະຄົນທຸກຈົນ - ອາດຈະຢູ່ຮ່ວມກັນດ່ວນກວ່າຄົນອື່ນ ໂດຍສະ ເພາະໃນເວລາທີ່ບໍ່ມີການແກ້ໄຂບັນຫາຮ່ວມກັນ. ແຕ່ໃນທ້າຍທີ່ສຸດແລ້ວ, ນີ້ແມ່ນວິກິດທີ່ສາມາດ ປ້ອງກັນໄດ້ ທີ່ເປັນໄພຂົ່ມຂູ່ຜູ້ຄົນທັງໝົດ ແລະ ທຸກໆປະເທດ. ພວກເຮົາເຊັ່ນດຽວກັນມີທາງເລືອກ ລະຫວ່າງຢູ່ຮ່ວມກັນ ແລະ ວາງວິທີການແກ້ໄຂ ຮ່ວມກັນຕໍ່ກັບບັນຫາທີ່ມີນຳກັນ ຫຼືວ່າ ຈະຢູ່ແຍກ ກັນ.

ການຍາດແຍ່ງເອົາກາລະໂອກາດ-ປີ 2012 ແລະ ປີຕໍ່ໜ້າ

ການຜະເຊີນກັບບັນຫາທີ່ໜັກໜ່ວງຄື ການປ່ຽນ ແປງດິນຟ້າອາກາດ, ການຍອມຈຳນົນ ທີ່ອາດຈະ ຄ້າຍກັບວ່າ ເປັນການໂຕ້ຕອບ ທີ່ມີເຫດມີຜົນ. ຢ່າງໃດກໍ່ຕາມ ການຍອມຈຳນົນເປັນສິ່ງທີ່ຟຸ່ມ ເຟືອຍທີ່ຜູ້ທຸກຈົນໃນໂລກ ແລະ ລຸ້ນຄົນໃນອະນາ ຄົດບໍ່ສາມາດຍອມຮັບໄດ້ - ແລະ ເຮົາຍັງມີທາງ ເລືອກອື່ນໆອີກ.

ມັນມີສາຍເຫດ ໃນການເບິ່ງໂລກໃນແງ່ດີ. 5ປີ ທີ່ຜ່ານມາ, ໂລກຍັງຄົງມີການໂຕ້ຖຽງວ່າ: ການ ປ່ຽນແປງ ດິນຟ້າອາກາດຈະເກີດຂຶ້ນ ຫຼື ບໍ່ ແລະ ມັນເກີດຈາກມະນຸດ ຫຼື ບໍ່? ຄວາມສົງໃສການປ່ຽນ ແປງດິນຟ້າອາກາດໄດ້ກາຍເປັນອຸດສາຫະກຳທີ່ ຂະຫຍາຍຕົວຢ່າງກວ້າງຂວາງ. ມື້ນີ້ການໂຕ້ຖຽງ ແມ່ນໄດ້ຜ່ານໄປແລ້ວ ແລະ ຄວາມສົງໃສເລື່ອງ ດິນຟ້າອາກາດ ກາຍເປັນກິດຈະກຳເສີມທີ່ເພີ່ມ ຂຶ້ນ. ການທົບທວນການປະເມີນຄັ້ງທີ່ 4 ຂອງກອງ ປະຊຸມສາກົນ ກ່ຽວກັບການປ່ຽນແປງດິນຟ້າ ອາກາດ ໄດ້ມີການເຫັນດີເປັນເອກະພາບທາງ ດ້ານວິທະຍາສາດຢ່າງໜັກແໜ້ນວ່າ ການປ່ຽນ ແປງດິນຟ້າອາກາດ ເປັນຄວາມຈິງ ແລະ ເກີດ ຈາກການກະທຳຂອງມະນຸດ. ລັດຖະບານເກືອບ ທັ້ງໝົດເຫັນດີເປັນເອກະພາບ. ໂດຍອີງຕາມບົດ ກວດຄືນຂອງ Stern ກ່ຽວກັບ *ເສດຖະກິດ ຂອງການປ່ຽນແປງດິນຟ້າອາກາດ*, ລັດຖະບານ ສ່ວນໃຫຍ່ ຍອມຮັບເຊັ່ນກັນວ່າ ມີຄວາມສາມາດ ແກ້ໄຂບັນຫາ ການປ່ຽນແປງ ດິນຟ້າອາກາດໄດ້ ໃນເລື່ອງງົບປະມານ - ແລະ ສາມາດແກ້ໄຂໄດ້ດີ ກວ່າ ແທນທີ່ຕ້ອງເສຍຄ່າໃຊ້ຈ່າຍ ຈາກການທີ່ ພວກເຮົາບໍ່ເຮັດຫຍັງ ເລີຍຕໍ່ກັບບັນຫານີ້.

ການເຄື່ອນໄຫວທາງດ້ານການເມືອງກໍ່ເປັນ ໄປຕາມແຕ່ລະກ້າວເຊັ່ນກັນ. ຫຼາຍໆລັດຖະບານ ກໍ່ໄດ້ມີເປົ້າໝາຍທີ່ຈະແຈ້ງ ເພື່ອຕັດທອນການ ປ່ອຍອາຍພິດເຮືອນແກ້ວລົງ. ການບັນເທົາການ ປ່ຽນແປງດິນຟ້າອາກາດ ໄດ້ມີການຮັບຮອງຢ່າງ ໜັກແໜ້ນວ່າ ເປັນຫົວຂໍ້ໜຶ່ງໃນກຸ່ມ 8 ປະເທດນຳ ໜ້າດ້ານ ອຸດສະຫະກຳ (G8) ແລະ ການເຈລະຈາ ລະຫວ່າງປະເທດພັດທະນາແລ້ວ ແລະ ກຳລັງພັດ

ທະນາໄດ້ຮັບການເສີມສ້າງຂຶ້ນຢ່າງເຂັ້ມແຂງ. ທັງໝົດນີ້ລ້ວນແລ້ວແຕ່ແມ່ນຂ່າວດີ. ຜົນໄດ້ຮັບ ຕົວຈິງແມ່ນມີຄວາມໜ້າປະທັບໃຈໜ້ອຍກວ່າ. ໃນເວລາທີ່ລັດຖະບານອາດຍອມຮັບຄວາມເປັນ ຈິງຂອງພາວະໂລກຮ້ອນ, ການເຄື່ອນໄຫວທາງ ດ້ານການເມືອງ ຍັງຄົງໄກຈາກຄວາມຕ້ອງການ ຕ່ຳສຸດໃນການແກ້ໄຂບັນຫາ ການປ່ຽນແປງດິນ ຟ້າອາກາດ. ຊ່ອງว่างລະຫว่างຫຼັກຖານທາງ ດ້ານວິທະຍາສາດ ແລະ ການດຳເນີນການທາງ ດ້ານການເມືອງແມ່ນຍັງຄົງມີຫຼາຍ. ໃນປະເທດ ພັດທະນາ, ບາງປະເທດຍັງບໍ່ທັນໄດ້ຕັ້ງເປົ້າໝາຍ ທີ່ຈະແจ້ງສຳລັບການຕັດທອນການປ່ອຍອາພິດ ເຮືອນແກ້ວ. ປະເທດອື່ນໆ ໄດ້ຕັ້ງເປົ້າໝາຍສຳລັບ ການຕັດການປ່ອຍອາຍພິດເຮືອນແກ້ວ ໂດຍປາດ ສະຈາກ ການປະຕິຮູບນະໂຍບາຍ ທາງດ້ານພະ ລັງງານທີ່ມີຄວາມຈຳເປັນເພື່ອໃຫ້ບັນລຸເປົ້າໝາຍ ນັ້ນ. ບັນຫາທີ່ເລິກເຊິ່ງກວ່ານັ້ນ ແມ່ນໂລກເຮົາ ບໍ່ທັນມີກອບວຽກ ສົນທິສັນຍາພາຄີ ໄລຍະຍາວ ທີ່ເຊື່ອຖືໄດ້ ແລະ ມີຄວາມຈະແจ້ງ ທີ່ໄດ້ລະບຸເຖິງ ວິທີທາງຕ່າງໆ ເພື່ອຫຼີກລ້ຽງການປ່ຽນແປງດິນຟ້າ ອາກາດທີ່ມີຄວາມອັນຕະລາຍ-ວິທີທາງທີ່ເອົາ ການແບ່ງແຍກ ລະຫว่างຮອບວຽນທາງດ້ານ ການເມືອງ ແລະ ຮອບວຽນ ອາຍຄາບອນ.

ໃນທ່າມກາງທີ່ອະນຸສັນຍາ ກຽວໂຕ ກຳລັງ ຈະສິ້ນສຸດລົງ ໃນປີ 2012, ຊຸມຊົນສາກົນຍັງມີ ໂອກາດທີ່ຈະເຮັດໃຫ້ແຜນງານນີ້ປະກົດເປັນຈິງ. ການຍາດແຍ່ງເອົາ ໂອກາດນັ້ນຮຽກຮ້ອງໃຫ້ມີ ການນຳພາທີ່ຈະແจ້ງ. ຈາກການພາດໂອກາດນັ້ນ ຈະຍູ້ດັນໃຫ້ໂລກເຮົາ ເຂົ້າສູ່ເສັ້ນທາງອັນຕະລາຍ ຈາກການປ່ຽນແປງດິນຟ້າອາກາດຫຼາຍຂຶ້ນ.

ປະເທດພັດທະນາແລ້ວ ຕ້ອງເປັນຜູ້ນຳພາ. ພວກເຂົາຈະເປັນຜູ້ແບກຫາບພາລະຄວາມຮັບ ຜິດຊອບຄັ້ງປະຫວັດສາດນີ້ ໃນການແກ້ໄຂບັນຫາ ການປ່ຽນແປງດິນຟ້າອາກາດ. ແລະ ເຂົາເຈົ້າຕ້ອງ ມີແຫຼ່ງທຶນ ແລະ ຄວາມສາມາດທາງດ້ານເຕັກນິກ ເພື່ອລິເລີ່ມ ການຕັດທອນການປ່ອຍອາຍພິດຢ່າງ ໄວວາ ແລະ ຢ່າງເຖິງຖອງ. ການຄິດໄລ່ເປັນມູນຄ່າ ສຳລັບການປ່ອຍອາຍຄາບອນ ແມ່ນຕ້ອງເຮັດ ໂດຍຜ່ານການເສຍພາສີ ຫຼື ລະບົບການກຳນົດຂີດ ຈຳກັດ-ແລະ-ຂາຍ ແມ່ນເປັນຈຸດເລີ່ມຕົ້ນ. ແຕ່ວ່າ ການຄິດໄລ່ເປັນມູນຄ່າ ທາງດ້ານຕະຫຼາດພຽງ ຢ່າງດຽວ ແມ່ນບໍ່ພຽງພໍ. ການພັດທະນາລະບົບ ກົດລະບຽບກົດໝາຍຕ່າງໆ ແລະ ການຮ່ວມມືລະ ຫว่างພາກລັດ ແລະ ເອກະຊົນ ສຳລັບການປ່ຽນ ແປງເຮັດໃຫ້ອາຍຄາບອນໜ້ອຍລົງ ແມ່ນຖືເປັນ ບູລິມະສິດ.

ຫຼັກການ "ຄືກັນ ແຕ່ຄວາມຮັບຜິດຊອບແຕກ ຕ່າງກັນ" ແມ່ນເປັນໜຶ່ງໃນສິ່ງພື້ນຖານ ຂອງກອບ ວຽກກຽວໂຕ-ບໍ່ໄດ້ໝາຍຄວາມວ່າ ບັນດາປະເທດ ກຳລັງພັດທະນາ ບໍ່ຄວນຈະເຮັດຫຍັງເລີຍ. ຄວາມ ໜ້າເຊື່ອຖື ຂອງບັນດາຂໍ້ຕົກລົງຫຼາຍຝ່າຍ ຈະຂຶ້ນ ກັບການປະກອບສ່ວນຂອງຜູ້ປ່ອຍອາຍພິດຕົ້ນຕໍ ໃນໂລກຂອງປະເທດກຳລັງພັດທະນາ. ຢ່າງໃດກໍ່ ຕາມ ຫຼັກການພື້ນຖານ ຂອງຄວາມເທົ່າທຽມກັນ ແລະ ສິ່ງທີ່ຫຼີກລ້ຽງບໍ່ໄດ້ ຂອງການພັດທະນາ ມະນຸດນັ້ນແມ່ນ ຕ້ອງມີຄວາມຕ້ອງການພະລັງ ງານທີ່ຫຼາຍຂຶ້ນ ແລະ ປະເທດກຳລັງພັດທະນາ ຕ້ອງມີຄວາມຢືດຢຸ່ນ ໃນການຜັນປ່ຽນໄປສູ່ເສັ້ນ ທາງການຂະຫຍາຍຕົວ ທີ່ປ່ອຍອາຍຄາບອນໃນ ລະດັບຕ່ຳ ແລະ ມີອັດຕາ ທີ່ສອດຄ່ອງກັບຄວາມ ສາມາດຂອງເຂົາເຈົ້າ.

ການຮ່ວມມືສາກົນມີບົດບາດທີ່ສຳຄັນໃນ ຫຼາຍໆລະດັບ. ຄວາມພະຍາມໃນການບັນເທົາໃນ ລະດັບໂລກ ຈະມີການເສີມສ້າງຢ່າງຕັ້ງໜ້າ ຖ້າ ກອບວຽກ ກຽວໂຕ ຫຼັງປີ 2002 ໄດ້ລວມກົນໄກ ຕ່າງໆທາງດ້ານການເງິນ ແລະ ການຖ່າຍທອດ

ທາງດ້ານເຕັກ ໂນໂລຊີເຂົ້າກັນ. ບັນດາກົນໄກ ເຫຼົ່ານີ້ ສາມາດຊ່ວຍກຳຈັດບັນດາຂໍ້ຂັດຂວາງຕໍ່ຄ່າ ໃຊ້ຈ່າຍ ເຂົ້າໃນການນຳໃຊ້ເຕັກໂນໂລຊີທີ່ຜະລິດ ອາຍຄາບອນໜ້ອຍ ເຊິ່ງມີຄວາມຈຳເປັນເພື່ອຫຼີກ ລ້ຽງການປ່ຽນແປງດິນຟ້າອາກາດ ທີ່ອັນຕະລາຍ. ການຮ່ວມມື ເພື່ອສະໜັບສະໜູນ ການປົກປັກຮັກ ສາ ແລະ ການບໍລິຫານແບບຍືນຍົງຂອງ ປ່າໄມ້ ເຂດຮ້ອນ ຈະຊ່ວຍເສີມສ້າງຄວາມເຂັ້ມແຂງ ຂອງ ຄວາມພະຍາຍາມ ໃນການບັນເທົາບັນ ຫາເຊັ່ນ ກັນ.

ບູລິມະສິດໃນການດັດປັບ ກໍ່ຕ້ອງມີການຊີ້ ແຈງ. ເປັນເວລາດົນນານສົມຄວນແລ້ວ ທີ່ການ ດັດປັບ ຂອງການປ່ຽນແປງດິນຟ້າອາກາດໄດ້ຮັບ ຄວາມເອົາໃຈແບບເບົາບາງ, ແທນທີ່ຈະເປັນພາກ ສ່ວນຫຼັກ ຂອງຫົວຂໍ້ ການຫຼຸດຜ່ອນຄວາມທຸກຍາກ ໃນສາກົນ. ການບັນເທົາບັນຫາ ແມ່ນເປັນສິ່ງ ທີ່ຫຼີກລ້ຽງບໍ່ໄດ້ ຍ້ອນມັນຈະກຳນົດໂອກາດ ເພື່ອ ຫຼີກລ້ຽງການປ່ຽນແປງດິນຟ້າອາກາດ ທີ່ອັນຕະ ລາຍໃນອະນາຄົດ. ແຕ່ຜູ້ທຸກຈົນ ໃນໂລກກໍ່ບໍ່ ສາມາດຖືກປະຖິ້ມໃຫ້ຈົມນ້ຳ ຫຼື ລອຍນ້ຳ ດ້ວຍ ຫຼັກແຫຼ່ງຂອງຕົວເຂົາເຈົ້າເອງ ໃນຂະນະທີ່ ບັນດາ ປະເທດຮັ່ງມີ ປົກປ້ອງປະຊາຊົນຂອງເຂົາເຈົ້າໄວ້ ໃນປ້ອມປ້ອງກັນຈາກການປ່ຽນແປງດິນຟ້າອາ ກາດ. ຄວາມຍຸດຕິທຳທາງດ້ານສັງຄົມ ແລະ ການ ເຄົາລົບສິດທິມະນຸດ ຮຽກຮ້ອງໃຫ້ມີການໃຫ້ຄຳ ໝັ້ນ ກ່ຽວກັບການປັບປຸງ ທີ່ເຂັ້ມແຂງກວ່ານີ້.

ມໍລະດົກຕົກທອດຂອງເຮົາ

ຫຼັງປີ 2010 ຂອງກອບວຽກ ກຽວໂຕ ສ້າງໂອກາດ ຢ່າງເຕັມສ່ວນ ໃນການຫຼີກລ້ຽງ ການປ່ຽນແປງ ດິນຟ້າອາກາດ- ແລະ ສຳລັບການຮັບມືກັບການ ປ່ຽນແປງດິນຟ້າອາກາດ ທີ່ໃນປັດຈຸບັນ ບໍ່ສາມາດ ຫຼີກລ້ຽງໄດ້. ການເຈລະຈາຕ່າງໆ ກ່ຽວກັບກອບ ວຽກ ນັ້ນຍັງຂຶ້ນກັບລັດຖະບານ ທີ່ມີກຳລັງໃນການ ເຈລະຈາ ໃນລະດັບທີ່ແຕກຕ່າງກັນ. ສຳລັບຜູ້ທີ່ ສົນໃຈ ດ້ານສິດ ແລະ ອຳນາດ ໃນລະດັບພະນັກ ງານຊັ້ນສູງ ກໍ່ຈະໄດ້ອອກຄຳຄິດຄຳເຫັນ. ເມື່ອ ລັດຖະບານມີການເຈລະຈາ ສຳລັບອະນຸສັນຍາ ກຽວໂຕ ກ່ອນປີ 2012, ມັນມີຄວາມສຳຄັນ ທີ່ ເຂົາເຈົ້າໄດ້ສະທ້ອນໃຫ້ເຫັນເຖິງ 2 ພາກສ່ວນ ທີ່ມີສິດມີສຽງທີ່ຈຳກັດ ແຕ່ມີພາລະກຳລັງໃນການ ຮ້ອງຮຽນຕໍ່ກັບ ຄວາມຍຸດຕິທຳໃນສັງຄົມ ແລະ ຄວາມເຄົາລົບຕໍ່ກັບສິດທິມະນຸດ: ຜູ້ນັ້ນກໍ່ຄື ຜູ້ທຸກ ຍາກໃນໂລກ ແລະ ລຸ້ນຄົນ ໃນອະນາຄົດ.

ຜູ້ຄົນທີ່ຮ່ວມໃນການຕໍ່ສູ້ໃນແຕ່ລະມື້ ເພື່ອປັບ ປຸງຊີວິດການເປັນຢູ່ຂອງເຂົາເຈົ້າໃນເວລາທຸກຈົນ ແລະ ອຶດຫິວ ຕ້ອງໄດ້ຖືກຮຽກຮ້ອງໃນເບື້ອງຕົ້ນ ໃຫ້ມີຄວາມເປັນອັນໜຶ່ງອັນດຽວກັນ. ແນ່ນອນທີ່ ສຸດ ເຂົ້າເຈົ້າສົມຄວນໄດ້ຮັບສິ່ງອື່ນ ຫຼາຍກວ່າ ບັນດາຜູ້ນຳທາງດ້ານການເມືອງ ຜູ້ທີ່ເຂົ້າຮ່ວມ ກອງປະຊຸມສຸດຍອດ, ຜູ້ທີ່ຕັ້ງເປົ້າໝາຍ ການພັດ ທະນາທີ່ສູງ ແລະ ມີຫຼັກການ ແລະ ໃນຂະນະດຽວ ກໍ່ທຳລາຍຄວາມສຳເລັດ ຂອງທຸກໆເປົ້າໝາຍ ໂດຍການບໍ່ເຮັດຫຍັງ ກ່ຽວກັບ ການປ່ຽນແປງ ດິນຟ້າອາກາດ. ລູກຂອງເຮົາ ແລະ ລູກຂອງ ເຂົາເຈົ້າ ມີສິດທີ່ຈະຍົກພວກເຮົາຂຶ້ນໃຫ້ເປັນຜູ້ຮັບ ຜິດຊອບຢ່າງເຕັມທີ່ ເມື່ອອະນາຄົດຂອງເຂົາເຈົ້າ -ແລະ ອາດຈະແມ່ນ ຄວາມຢູ່ລອດ ຂອງເຂົາເຈົ້າ- ແມ່ນຂຶ້ນຢູ່ກັບຄວາມສົມດູນ. ເຂົາເຈົ້າສົມຄວນໄດ້ ຮັບບາງສິ່ງບາງຢ່າງ ຫຼາຍກວ່າລຸ້ນຄົນ ທີ່ເປັນຜູ້ ນຳພາທາງດ້ານການເມືອງ ຜູ້ທີ່ກຳລັງເບິ່ງຄວາມ ທ້າທາຍທີ່ຍິ່ງໃຫຍ່ ທີ່ມະນຸດໄດ້ເຄີຍພົບພໍ້ ແຕ່ບໍ່ ເຮັດຫຍັງກັບມັນເລີຍ. ເວົ້າແບບງ່າຍດາຍ, ຜູ້ທຸກ ຍາກໃນໂລກ ແລະ ລຸ້ນຄົນໃນອະນາຄົດ ທົນບໍ່ໄດ້ ທີ່ຈະໃຫ້ຄວາມພໍອົກພໍໃຈ ຫຼື ການຫຼີກລ້ຽງດັ່ງກ່າວ ນັ້ນສືບຕໍ່ ກຳນົດລັກສະນະ ການເຈລະຈາສາກົນ

ຜູ້ທຸກຈົນໃນໂລກ ແລະ ລຸ້ນຄົນ ໃນອະນາຄົດ ທົນບໍ່ໄດ້ທີ່ຈະ ໃຫ້ຄວາມພໍອົກພໍໃຈ ຫຼື ການຫຼີກ ລ້ຽງດັ່ງກ່າວນັ້ນສືບຕໍ່ກຳນົດລັກ ສະນະ ການເຈລະຈາສາກົນ ກ່ຽວກັບການປ່ຽນແປງ ດິນຟ້າອາກາດ

ຮູບພາບທີ 2 ຮ່ອງຮອຍສະສົມຂອງອາຍຄາບອນ ທີ່ຫຼວງຫຼາຍຂອງບັນດາປະເທດອັງມີ



ແຫລ່ງຂໍ້ມູນ: CDIAC 2007.

ກ່ຽວກັບການປ່ຽນແປງດິນຟ້າອາກາດ. ເຂົາເຈົ້າບໍ່ສາມາດ ໃຫ້ມີຊ່ອງຫວ່າງຫຼາຍ ລະຫວ່າງສິ່ງທີ່ບັນດາຜູ້ນຳ ໃນປະເທດພັດທະນາແລ້ວ ໄດ້ເວົ້າກ່ຽວກັບໄພຂົ່ມຂູ່ຈາກການປ່ຽນແປງດິນຟ້າອາກາດ ແລະ ສິ່ງທີ່ເຂົາເຈົ້າເຮັດ ໃນບັນດານະໂຍບາຍພະລັງງານຂອງເຂົາເຈົ້າ.

20 ປີທີ່ຜ່ານມາ ຊິໂກ ເມນເດສ, ນັກສິ່ງແວດລ້ອມ ຊາວບຼາຊິນ, ຕາຍຈາກການພະຍາຍາມ ປົກປ້ອງຜືນປ່າອະເມຊອນ ເພື່ອບໍ່ໃຫ້ຖືກທຳລາຍ. ກ່ອນທີ່ລາວຈະຕາຍ, ລາວໄດ້ເວົ້າອອກເຖິງສິ່ງທີ່ຜູກມັດການຕໍ່ສູ້ ໃນທ້ອງຖິ່ນຂອງລາວ ເຂົ້າກັບການເຄື່ອນໄຫວໃນໂລກ ສຳລັບຄວາມເປັນທຳໃນສັງຄົມ: "ຕອນທຳອິດ ຂ້ອຍຄິດວ່າ ຂ້ອຍກຳລັງຕໍ່ສູ້ເພື່ອປົກປ້ອງຕົ້ນໄມ້ຢາງ, ຈາກນັ້ນຂ້ອຍກຳລັງຕໍ່ສູ້ເພື່ອປົກປ້ອງຜືນປ່າ ອະເມຊອນ. ຕອນນີ້ຂ້ອຍເຂົ້າໃຈແລ້ວວ່າ ຂ້ອຍກຳລັງຕໍ່ສູ້ເພື່ອມະນຸດຊາດ."

ການຕໍ່ສູ້ ຕ້ານກັບ ຄວາມອັນຕະລາຍຈາກການປ່ຽນແປງດິນຟ້າອາກາດແມ່ນ ເປັນສ່ວນໜຶ່ງຂອງການຕໍ່ສູ້ເພື່ອມະນຸດ. ສະຖານະການ ການຕໍ່ສູ້ນັ້ນຈະຮຽກຮ້ອງໃຫ້ມີການປ່ຽນແປງ ໃນຫຼາຍໆ ລະດັບ -ການບໍລິໂພກ, ໃນວິທີຜະລິດ ແລະ ໃຫ້ຄິດໄລ່ລາຄາ ພະລັງງານ, ແລະ ໃນການຮ່ວມມືສາກົນ. ເໜືອກว่าສິ່ງທັງໝົດນັ້ນ, ເຖິງແມ່ນວ່າມັນມີຄວາມຕ້ອງການ ໃຫ້ມີການປ່ຽນແປງຫຼວງຫຼາຍ ທາງດ້ານຄວາມຄິດ ຂອງພວກເຮົາ ກ່ຽວກັບການເພິ່ງພາເຊິ່ງກັນ ແລະ ກັນ ທາງດ້ານນິເວດວິດທະຍາ, ກ່ຽວກັບຄວາມເປັນທຳ ທາງສັງຄົມ ສຳລັບຄົນທຸກຍາກໃນໂລກ, ແລະ ກ່ຽວກັບ ສິດທິມະນຸດ ແລະ ຄວາມຈະເລີນຮຸ່ງເຮືອງຂອງລຸ້ນຄົນ ໃນອະນາຄົດ.

ຄວາມທ້າທາຍ ຂອງການປ່ຽນແປງດິນຟ້າອາກາດ ໃນສັດຕະວັດທີ 21

ພາວະໂລກຮ້ອນໄດ້ເກີດຂຶ້ນແລ້ວ. ອຸນຫະພູມຂອງໂລກໄດ້ເພີ່ມຂຶ້ນແລ້ວ ປະມານ 0.7 ອົງສາເຊັນຕິເກດ ຕັ້ງແຕ່ການປະຕິວັດ ອຸດສາຫະກຳ ແລະ ອັດຕາການເພີ່ມຂຶ້ນຢ່າງໄວວາ. ມີຫຼັກຖານທີ່ພຽງພໍ ທີ່ສະແດງເຖິງການກ່ຽວພັນ ຂອງການເພີ່ມຂຶ້ນຂອງອຸນຫະພູມ ແລະ ຄວາມເຂັ້ມຂຸ້ນຂອງອາຍພິດເຮືອນແກ້ວ ໃນຊັ້ນບັນຍາກາດ ຂອງໂລກ.

ມັນບໍ່ມີເສັ້ນແບ່ງທີ່ແນ່ນອນ ແລະ ວ່ອງໄວ ທີ່ແບ່ງການປ່ຽນແປງດິນຟ້າອາກາດ ທີ່ເປັນ "ອັນຕະລາຍ" ແລະ "ປອດໄພ". ຜູ້ຄົນທີ່ທຸກຈົນທີ່ສຸດ ໃນໂລກ ຫຼາຍໆຄົນ ແລະ ລະບົບນິເວດວິທະຍາ ທີ່ມີຄວາມບອບບາງທີ່ສຸດ ກຳລັງຖືກບັງຄັບໃຫ້ປັບ ໃຫ້ເຂົ້າກັບ ການປ່ຽນແປງດິນຟ້າອາກາດ ທີ່ອັນຕະລາຍ. ຢ່າງໃດກໍ່ຕາມ, ການຂອບເຂດ 2 ອົງສາ ເຊັນຕິເກດ ຈະເກີດຄວາມສ່ຽງທີ່ເຮັດໃຫ້ການ ພັດທະນາ ມະນຸດຖືກຖອຍຫຼັງຄືນ ແລະ ຄວາມ ຫາຍະນະ ທາງດ້ານນິເວດວິທະຍາ ທີ່ບໍ່ສາມາດ ກັບຄືນສູ່ສະພາບເດີມໄດ້ນັ້ນ ຈະເພີ່ມຂຶ້ນຢ່າງຫຼວງ ຫຼາຍ.

ແນວທາງ ທີ່ເປັນປົກກະຕິ ຂອງທຸລະກິດຈະ ນຳໃຫ້ໂລກຂອງເຮົາດີຂຶ້ນ ການຂອບເຂດອັນຕະ ລາຍດັ່ງກ່າວ. ເພື່ອເຮັດໃຫ້ມີໂອກາດ 50:50 ໃນ ການຈຳກັດ ການເພີ່ມຂຶ້ນຂອງອຸນຫະພູມ 2 ອົງສາ ເຊັນຕິເກດ ເມື່ອທຽບໃສ່ ລະດັບກ່ອນການມີ ອຸດສະຫະກຳ ຈະຮຽກຮ້ອງໃນການເຮັດໃຫ້ຄວາມ ເຂັ້ມຂຸ້ນ ຂອງອາຍພິດເຮືອນແກ້ວຄົງຕົວ ໃນລະ ດັບປະມານ 450 ppm CO_2e. ການເຮັດໃຫ້ ຄົງຕົວໃນລະດັບ 550 ppm CO_2e ຈະເພີ່ມຄວາມ ເປັນໄປໄດ້ທີ່ຈະການຂອບເຂດອັນຕະລາຍ 80%. ໃນຊີວິດການເປັນຢູ່ສ່ວນຕົວ ຂອງເຂົາເຈົ້າ, ຄົນ ສ່ວນໜ້ອຍ ຈະດຳເນີນກິດຈະກຳທີ່ມີຄວາມສ່ຽງ ໄດ້ຢ່າງຮ້າຍແຮງ ໃນລະດັບນີ້. ໃນຊຸມຊົນລະດັບ

ໂລກ, ພວກເຮົາມີຄວາມສ່ຽງທີ່ສູງຕໍ່ກັບຜົນໂລກ. ສະຖານະການ ສຳລັບສັດຕະວັດທີ 21 ໄດ້ຊີ້ໃຫ້ເຫັນວ່າຈຸດຄົງຕົວທີ່ມີທ່າແຮງ ທີ່ກາຍກວ່າ 750 ppm CO_2e, ຈະເຮັດໃຫ້ມີຄວາມເປັນໄປໄດ້ໃນການປ່ຽນແປງອຸນຫະພູມ ຫຼາຍກວ່າ 5 ອົງສາ.

ສະຖານະການ ກ່ຽວກັບອຸນຫະພູມ ບໍ່ໄດ້ຮັບຄວາມສົນໃຈ ທາງດ້ານຜົນກະທົບການພັດທະນາມະນຸດທີ່ມີທ່າແຮງ. ການປ່ຽນແປງສະເລັ່ຍທາງດ້ານອຸນຫະພູມໃນລະດັບ ທີ່ຄາດການໃນສະຖານະການ ທາງດ້ານທຸລະກິດປົກກະຕິ ຈະເປັນຕົວເລີ່ມໃຫ້ມີ ການປັ້ນກັບຄືນຢ່າງຫຼວງຫຼາຍໃນການພັດທະນາມະນຸດ, ທຳລາຍການດຳເນີນຊີວິດການເປັນຢູ່ ແລະ ເຮັດໃຫ້ເກີດການຍ້າຍຖິ່ນຖານຢ່າງຫຼວງຫຼາຍ. ໃນຕອນທ້າຍ ຂອງສັດຕະວັດທີ 21, ລັກສະນະຂອງຜົນກະທົບ ທາງດ້ານນິເວດວິທະຍາທີ່ຫາຍະນະ ຈະປ່ຽນຈາກສິ່ງທີ່ເປັນໄປໄດ້ທີ່ຈະເກີດຂຶ້ນ ມາເປັນສິ່ງທີ່ແນ່ນອນທີ່ຈະເກີດຂຶ້ນ. ຫຼັກຖານ ໃນມໍ່ໆນີ້ກ່ຽວກັບ ການລະລາຍຂອງແຜ່ນນ້ຳກ້ອນທີ່ເລັ່ງທະວີຂຶ້ນ ໃນອານຕາກຕິກ ແລະ ກຼີນແລນ, ຝົນອາຊິດຂອງມະຫາສະໝຸດ, ການເສື່ອມຖອຍ ຂອງລະບົບປ່າໄມ້ ແລະ ການລະລາຍຂອງນ້ຳກ້ອນໃນອາກຕິກ ທັງໝົດມີທ່າແຮງ-ແບບແຍກກັນ ຫຼື ຮ່ວມກັນ-ທີ່ຈະພາໄປເຖິງ "ຈຸດຜັນປ່ຽນ".

ປະເທດຕ່າງໆ ໄດ້ປ່ອຍອາຍພິດໃນລະດັບທີ່ແຕກຕ່າງກັນ ທີ່ເຮັດໃຫ້ຊັ້ນບັນຍາກາດສະສົມອາຍພິດເຮືອນແກ້ວ. 15% ຂອງປະຊາກອນໃນໂລກ, ປະເທດຮັ່ງມີ ແມ່ນປ່ອຍອາຍຄາບອນເຄິ່ງໜຶ່ງໃນໂລກ. ປະລິມານທີ່ສູງແມ່ນ ປະເທດຈີນ ແລະ ອິນເດຍ ທີ່ພາໄປເຖິງການກໍ່ຕົວເປັນລຳດັບທີ່ເປັນ "ກ້ອນ" ຂອງອາຍພິດ. ຢ່າງໃດກໍ່ຕາມ, ຮ່ອງຮອຍສະສົມຂອງອາຍຄາບອນຕໍ່ຫົວຄົນ ແມ່ນມີຈຳກັດຫຼາຍກວ່າ. ຮ່ອງຮອຍຂອງອາຍຄາບອນ ໃນອາເມລິກາ ມີຫຼາຍກວ່າ 5 ເທື່ອຂອງປະເທດຈີນ ແລະ ຫຼາຍກວ່າ 15 ເທື່ອ ຂອງປະເທດອິນເດຍ. ໃນເອທິໂອເປຍ, ຮ່ອງຮອຍສະສົມຂອງອາຍຄາບອນຕໍ່ຫົວຄົນ ສະເລັ່ຍແມ່ນ 0.1 ໂຕນ ໃນຂະນະດຽວກັນ ໃນປະເທດ ການາດາ ແມ່ນ 20 ໂຕນ. (ຮູບທີ່ 2 ແລະ ແຜນທີ່ 1).

ໂລກຕ້ອງເຮັດຫຍັງແດ່ໃນການປ່ອຍອາຍພິດ ເພື່ອຫຼີກລ້ຽງ ການປ່ຽນແປງດິນຟ້າອາກາດ ທີ່ອັນຕະລາຍ? ພວກເຮົາໄດ້ຊີ້ແຈງບັນຫານີ້ ໂດຍການແຕ້ມເປັນການຈຳລອງຮູບແບບ ດິນຟ້າອາກາດ. ການຈຳລອງເຫຼົ່ານີ້ ກຳນົດຂອບເຂດປະລິມານການປ່ອຍອາຍຄາບອນສຳລັບ ສັດຕະວັດທີ 21.

ຖ້າທຸກໆຢ່າງເທົ່າກັນ, ລະດັບອາຍຄາບອນຂອງໂລກ ສຳລັບການປ່ອຍອາຍພິດ ທີ່ກ່ຽວພັນກັບພລັງງານ ຈະມີປະມານ 14.5 Gt CO_2 ໃນແຕ່ລະປີ. ອາຍພິດໃນປັດຈຸບັນ ແມ່ນມີ 2 ເທົ່າຂອງລະດັບນີ້. ຂ່າວທີ່ບໍ່ດີແມ່ນ ອາຍພິດ ຢູ່ໃນແນວໂນ້ມເພີ່ມຂຶ້ນ. ຜົນສຸດທ້າຍ: ຂອບເຂດປະລິມານການປ່ອຍອາຍຄາບອນທີ່ມີຢູ່ ສຳລັບທັງໝົດສັດຕະວັດທີ 21 ຈະໝົດລົງຢ່າງໄວໃນປີ 2032 (ຮູບທີ່ 3). ຈາກຜົນກະທົບ, ພວກເຮົາກຳລັງກ້າວໄປສູ່ໜີ້ສິນ ທາງດ້ານນິເວດວິທະຍາທີ່ບໍ່ມີຄວາມຍືນຍົງ ທີ່ຈະກັກຂັງຄົນລຸ້ນອະນາຄົດ ໄວ້ໃນການປ່ຽນແປງດິນຟ້າອາກາດທີ່ເປັນອັນຕະລາຍ.

ການວິເຄາະຂອບເຂດປະລິມານ ການປ່ອຍອາຍຄາບອນ ເຮັດໃຫ້ເຫັນຈະແຈ້ງກ່ຽວກັບພາກສ່ວນການປ່ອຍອາຍພິດ ຂອງປະເທດກຳລັງພັດທະນາ ໃນການປ່ອຍອາຍພິດເຮືອນແກ້ວ ຂອງໂລກ. ໃນຂະນະທີ່ພາກສ່ວນນັ້ນກຳລັງເພີ່ມຂຶ້ນ ແຕ່ມັນບໍ່ຄວນຈະຫັນເຫຄວາມສົນໃຈ ຈາກຄວາມຮັບຜິດຊອບ ຂອງປະເທດທີ່ຮັ່ງມີ. ຖ້າທຸກໆຄົນໃນໂລກກຳລັງພັດທະນາ ມີຂອບເຂດປະລິມານການປ່ອຍອາຍຄາບອນຄືກັບຄົນທີ່ຢູ່ໃນປະເທດ ເຢັຍ

ລະມັນ ຫຼື ອັງກິດ, ອາຍພິດຂອງໂລກ ໃນປັດຈຸບັນ ຈະແມ່ນ 4 ເທື່ອ ຂອງເຂດທີ່ໄດ້ກຳນົດ ວ່າມີຄວາມຍືນຍົງ, ສູງຂຶ້ນ 9 ເທື່ອ ຖ້າປະເທດ ກຳລັງພັດທະນາ ໄດ້ເພີ່ມຂອບເຂດຕໍ່ຫົວຄົນ ຂຶ້ນຮອດລະດັບເທົ່າກັບ ປະເທດ ການາດາ ຫຼື ອາເມລິກາ.

ການປ່ຽນແປງຮູບພາບນີ້ ຈະຮຽກຮ້ອງໃຫ້ມີ ການປັບປຸ່ງນຢ່າງເລິກເຊິ່ງ. ຖ້າໂລກເຮົາ ເປັນ ປະເທດດຽວ ມັນຈະຕ້ອງມີການຕັດທອນ ການ ປ່ອຍອາຍພິດເຮືອນແກ້ວ ລົງເຄິ່ງໜຶ່ງ ຈົນຮອດ ປີ 2025 ປຽບທຽບກັບລະດັບປີ 1990, ມີການ ຫຼຸດລົງຢ່າງເປັນປົກກະຕິ ຈົນຮອດທ້າຍສັດຕະວັດ ທີ 21 (ຮູບທີ່ 4). ຢ່າງໃດກໍ່ຕາມ, ໂລກເຮົາ ບໍ່ແມ່ນປະເທດດຽວ. ໂດຍການນຳໃຊ້ການສົມມຸດ ຕິຖານ ທີ່ມີເຫດມີຜົນ, ພວກເຮົາຄາດຄະເນວ່າ ການຫຼີກລ້ຽງ ການປ່ຽນແປງດິນຟ້າອາກາດ ທີ່ມີ ຄວາມອັນຕະລາຍ ຈະຮຽກຮ້ອງໃຫ້ ປະເທດຮັ່ງມີ ຕັດທອນ ການປ່ອຍອາຍພິດ ຢ່າງໜ້ອຍສຸດ 80%, ໂດຍການຕັດທອນ 30% ໃນປີ 2020. ການປ່ອຍ ອາຍພິດ ຈາກປເທດກຳລັງພັດທະນາ ຈະຮອດຈຸດ ສູງສຸດ ປະມານປີ 2020, ທີ່ຕັດທອນ 20% ໃນປີ 2050.

ເປົ້າໝາຍທີ່ເຮັດໃຫ້ມັນຄົງຕົວ ແມ່ນເຄັ່ງຄັດ ແຕ່ສາມາດເຮັດໄດ້. ລະຫວ່າງຕອນນີ້ ແລະ ປີ 2030, ມູນຄ່າໃຊ້ຈ່າຍປະຈຳປີ ຈະມີ 1.6% ຂອງ GDP. ນີ້ບໍ່ແມ່ນການລົງທຶນທີ່ບໍ່ມີຄວາມສຳຄັນ. ແຕ່ມັນໜ້ອຍກວ່າ 2 ສ່ວນ 3 ຂອງການນຳໃຊ້ທາງ ດ້ານການທະຫານຂອງໂລກ. ຄ່າໃຊ້ຈ່າຍຂອງ ການທີ່ບໍ່ໄດ້ ເຮັດຫຍັງເລີຍ ແມ່ນຍິ່ງສູງກວ່າ. ໂດຍ ອີງໃສ່ບົດກວດຄືນຂອງ Stern, ມັນອາດຈະຮອດ 5-20% ຂອງ GDP ຂອງໂລກ, ຂຶ້ນກັບພວກເຮົາ ຈະວັດມູນຄ່າແນວໃດ.

ເບິ່ງຄືນແນວໂນ້ມ ການປ່ອຍອາຍພິດ ໄດ້ສະ ແດງຢ່າງຈະແจ້ງ ຂະໜາດຂອງຄວາມທ້າທາຍໃນ

ແຜນທີ່ 1 ການປ່ອຍອາຍຄາບອນ ຂອງບັນດາປະເທດຕ່າງໆ ໃນໂລກ



ໝາຍເຫດ: ບັນດາຂອບເຂດ ແລະ ຊື່ທີ່ສະແດງ ແລະ ເຄື່ອງໝາຍຕ່າງໆ ທີ່ໃຊ້ໃນແຜນທີ່ນີ້ ບໍ່ໄດ້ໝາຍຄວາມວ່າ ໄດ້ຮັບການຮັບຮອງ ຫຼື ອະນຸມັດຢ່າງເປັນທາງການ ໂດຍ ສະຫະປະຊາຊາດ. ເສັ້ນຂາດຕ່າງໆ ສະແດງ ໃຫ້ເຫັນເຖິງ ເສັ້ນຄວບຄຸມ ໃນຈັມມູ (Jummu) ແລະ ຄັສເມັຍ (Kashmir) ທີ່ໄດ້ຮັບການເຫັນດີຈາກ ອິນເດຍ ແລະ ປາກິດສະຖານ. ສະຖານະພາບສຸດທ້າຍຂອງ ຮັດມູ ແລະ ຄັສເມຍ ບໍ່ທັນໄດ້ຮັບການເຫັນດີເທື່ອຈາກ ພາກສ່ວນຕ່າງໆ.

ຂໍ້ມູນ: ແຜນທີ່ໂລກ 2007, ພື້ນຖານຂໍ້ມູນຈາກ CDIAC.

ຕໍ່ໜ້າ (ຕາຕະລາງ ຕິດຄັດ). ການປ່ອຍອາຍພິດ CO_2 ທີ່ກ່ຽວຂ້ອງກັບພະລັງງານ ໄດ້ເພີ່ມຂຶ້ນຢ່າງຫຼວງຫຼາຍຕັ້ງແຕ່ປີ 1990, ເຊິ່ງແມ່ນປີອ້າງອີງສຳລັບການ ຫຼຸດຜ່ອນ ທີ່ໄດ້ຕົກລົງກັນ ພາຍໃຕ້ອະນຸສັນຍາ ກຽວໂຕ. ບໍ່ແມ່ນປະເທດພັດທະນາທັງໝົດ ໃຫ້ຄຳໝັ້ນຕໍ່ກັບເປົ້າໝາຍ ຂອງອະນຸສັນຍາ, ທີ່ຈະ ຫຼຸດການປ່ອຍອາຍພິດປະມານ 5%. ສ່ວນຫຼາຍ ແລ້ວ ບໍ່ໄດ້ບັນລຸຜົນຕາມທີ່ຕົກລົງໄວ້. ແລະ ສ່ວນ ໜຶ່ງທີ່ໄປຕາມທີ່ຕົກລົງໄວ້ ໄດ້ອ້າງວ່າ ໄດ້ຫຼຸດການ ປ່ອຍອາຍພິດ ທີ່ມີຜົນມາຈາກການຕັດສິນໃຈ ທາງດ້ານນະໂຍບາຍ ກ່ຽວກັບການບັນເທົາ ການ ປ່ຽນແປງດິນຟ້າອາກາດ. ອະນຸສັນຍາ ກຽວໂຕ ບໍ່ໄດ້ກຳນົດຂໍ້ຈຳກັດ ທາງດ້ານປະລິມານຂອງ ການປ່ອຍອາຍພິດ ຈາກປະເທດກຳລັງພັດທະນາ. ຖ້າໃນ15ປີຕໍ່ໜ້າເປັນໄປໃນແນວໂນ້ມເສັ້ນຊື່ຂອງ 15 ປີທີ່ຜ່ານມາ, ການປ່ຽນແປງດິນຟ້າອາກາດ ທີ່ເປັນອັນຕະລາຍ ຈະບໍ່ສາມາດຫຼີກລ້ຽງໄດ້.

ການຄາດໝາຍ ສຳລັບການນຳໃຊ້ພະລັງງານ ຊີ້ເຫັນຢ່າງຊັດເຈນ ໃນແນວທາງນີ້, ຫຼື ຮ້າຍແຮງ ກວ່ານີ້. ຮູບແບບການລົງທຶນປັດຈຸບັນ ໄດ້ມີສິ່ງ ກໍ່ສ້າງພື້ນຖານໂຄງລ່າງ ທີ່ນຳໃຊ້ພະລັງງານ ທີ່ມີ ອາຍຄາບອນຫຼາຍ, ເຊິ່ງແມ່ນຖ່ານຫິນ ທີ່ເປັນ ພະລັງງານຕົ້ນຕໍ. ບົນພື້ນຖານ ຂອງບັນດາແນວ ໂນ້ມໃນປັດຈຸບັນ ແລະ ບັນດານະໂຍບາຍ ໃນປັດຈຸບັນ, ການປ່ອຍອາຍຄາບອນ ທີ່ກ່ຽວຂ້ອງ ກັບພະລັງງານ ເພີ່ມຂຶ້ນຫຼາຍກວ່າ 50% ຂອງລະ ດັບ ປີ 2005 ພາຍໃນປີ 2030. ຈຳນວນເງິນ 20 ລ້ານລ້ານໂດລາ ໄດ້ຖືກຄາດວ່າຈະນຳໃຊ້ ລະຫວ່າງປີ 2004 ແລະ 2030 ເພື່ອຕອບສະ ໜອງໄດ້ຕໍ່ຄວາມຕ້ອງການພະລັງງານ ຈະສາມາດ ເປັນອຸປະສັກ ແລະ ເຮັດໃຫ້ໂລກຂອງເຮົາ ເຂົ້າສູ່ ເສັ້ນທາງທີ່ບໍ່ມີຄວາມຍືນຍົງໄດ້. ທາງເລືອກອື່ນໆ ແມ່ນ: ການລົງທຶນໃໝ່ທີ່ສາມາດຊ່ວຍ ເຮັດໃຫ້ ເສດຖະກິດມີການເຕີບໂຕ ໂດຍປາດສະຈາກ ອາຍຄາບອນ.

ຮູບພາບທີ 3 ຂອບເຂດປະລິມານການປ່ອຍອາຍຄາບອນສຳລັບສັດຕະວັດທີ່ 21 ໄດ້ຖືກຕັ້ງໄວ້ເພື່ອຈະ ໝົດລົງຢ່າງໄວວາ



ໝາຍເຫດ: **ສະຖານະການ IPCC** ເວົ້າເຖິງ ທິດທາງຂອງການເຕີບໃຫຍ່ຂະຫຍາຍຕົວ ຂອງປະຊາກອນ, ເສດຖະກິດ, ການປ່ຽນແປງທາງ ດ້ານເຕັກໂນโลຊີ ຊຶ່ງກ່ຽວຂ້ອງກັບ ການປ່ອຍອາຍຄາບອນ ທີ່ຈະເກີດຂຶ້ນ ໃນອະນາຄົດຢ່າງມີເຫດຜົນ. **ສະຖານະການ A1** ສັນນິຖານວ່າ ທັງການຂະຫຍາຍຕົວຂອງປະຊາກອນ ແລະ ເສດຖະກິດຢ່າງໄວວາ ຂຶ້ນຢູ່ກັບການນຳໃຊ້ ນ້ຳມັນເຊື້ອໄຟ (A1FL), ພະລັງງານທີ່ບໍ່ໄດ້ມາ ຈາກນ້ຳມັນເຊື້ອໄຟ (ຫຼື ພະລັງງານທາງເລືອກ) (A1T), ຫຼື ທັງສອງຢ່າງລວມກັນ (A1B). **ສະຖານະການ A2** ສັນນິຖານວ່າ ເສດຖະກິດ ເຕີບໃຫຍ່ຂະຫຍາຍຕົວໃນລະດັບຕ່ຳ, ການຂະຫຍາຍຕົວ ໄປທົ່ວໂລກຢູ່ໃນລະດັບໜ້ອຍ ແລະ ປະຊາກອນ ຍັງສືບຕໍ່ຂະຫຍາຍຕົວ. **ສະຖານະການ B1** ແລະ **B2** ສະແດງເຖິງການຈຳກັດການປ່ອຍອາຍຄາບອນ ໂດຍຜ່ານການເພີ່ມຫະວິການນຳໃຊ້ ແຫຼ່ງຊັບພະຍາກອນ ຢ່າງມີປະສິດທິພາບ ແລະ ເຕັກໂນโลຊີທີ່ໄດ້ຮັບການ ພັດທະນາໃຫ້ດີຂຶ້ນ (B1) ແລະ ໂດຍການແກ້ໄຂບັນຫາໃນປະເທດໃດໜຶ່ງຫຼາຍ ຂຶ້ນ (B2).

ແຫຼ່ງຂໍ້ມູນ: Meinshausen 2007.

ສິ່ງທີ່ເປັນໜ້າຕົກໃຈທາງດ້ານດິນຟ້າອາກາດ: ຄວາມສ່ຽງ ແລະ ຄວາມບໍ່ໝັ້ນຄົງ ໃນໂລກທີ່ບໍ່ມີ ຄວາມສະເໝີພາບ

ສິ່ງທີ່ເປັນໜ້າຕົກໃຈ ທາງດ້ານດິນຟ້າອາກາດ ໄດ້ ປະກົດຕົວຂຶ້ນຢ່າງເຫັນໄດ້ຈະແจ້ງແລ້ວ ຢູ່ໃນການ ດຳລົງຊີວິດ ຂອງຜູ້ທຸກຍາກ. ເຫດການຕ່າງໆ ເຊັ່ນ ໄພແຫ້ງແລ້ງ, ນ້ຳຖ້ວມ, ພະຍຸ ໄດ້ກາຍເປັນປະສົບ ການທີ່ເປັນຕາຢ້ານກົວ ສຳລັບຜູ້ທີ່ຖືກກະທົບ: ສະພາບດິນຟ້າອາກາດດັ່ງກ່າວ ບໍ່ພຽງແຕ່ຂົ່ມຂູ່ ການດຳລົງຊີວິດ ແລະ ເຮັດໃຫ້ຜູ້ຄົນມີຄວາມຮູ້ສຶກ ຫວາດກົວ ແລະ ບໍ່ປອດໄພ ແຕ່ຍັງທຳລາຍ ໂອກາດ ຂອງການພັດທະນາມະນຸດ, ເຮັດໃຫ້

ຫຼຸດຜ່ອນສະມັດຕະພາບການຜະລິດ ແລະ ທຳ ລາຍຄວາມຮູ້ຄວາມສາມາດ ຂອງມະນຸດຊາດ ລົງ ເທື່ອລະໜ້ອຍໃນໄລຍະຍາວ. ສະພາບດິນຟ້າອາ ກາດແບບນີ້ ບໍ່ສາມາດຈະອ້າງວ່າເປັນຍ້ອນ ການ ປ່ຽນແປງ ດິນຟ້າອາກາດ. ເຖິງຢ່າງໃດກໍ່ຕາມ, ການປ່ຽນແປງ ດິນຟ້າອາກາດກໍ່ເປັນ ໝາກລໍ້ ເຫຼື້ອງທີ່ຊຸກດັນ ໃຫ້ມີຄວາມສ່ຽງ ແລະ ຄວາມ ອ່ອນແອເພີ່ມຂຶ້ນ ເຊິ່ງກາຍເປັນບັນຫາ ຂອງຄົນ ທຸກຍາກ. ສະພາບແບບນີ້ ໄດ້ເຮັດໃຫ້ເກີດຄວາມ ເຄັ່ງຕຶງ ໃນການຊອກຫາກິນໄກ ເພື່ອແກ້ໄຂບັນ ຫາ ແລະ ເຮັດໃຫ້ປະຊາຊົນ ຕົດຢູ່ໃນວົງວຽນ ຂອງການສູນເສຍ ທີ່ນັບມື້ນັບໜັກໜ່ວງ.

ສະພາບຄວາມບໍ່ໝັ້ນຄົງ ຕໍ່ສິ່ງທີ່ເປັນໜ້າຕົກ ໃຈ ທາງດ້ານດິນຟ້າອາກາດ ແມ່ນແຜ່ກະຈາຍ ໄປທົ່ວ ແບບບໍ່ສະໝ່ຳສະເໝີ. ລົມພະຍຸເຮີລິເຄນ ຄັດຕຣິນາ ໄດ້ເຕືອນສະຕິຢ່າງ ເຫັນໄດ້ຈະແจ້ງ ເຖິງຄວາມອ່ອນແອຂອງມະນຸດ ຕໍ່ໜ້າສະພາບ ການປ່ຽນແປງດິນຟ້າອາກາດ ແມ້ແຕ່ໃນປະເທດ ຮັ່ງມີທີ່ສຸດ-ໂດຍສະເພາະແລ້ວ ເມື່ອຜົນກະທົບ ສະທ້ອນ ເຖິງການປະຕິບັດ ແບບບໍ່ສະເໝີພາບຕໍ່ ກຸ່ມຄົນຕ່າງໆ. ໃນໂລກທີ່ພັດທະນາແລ້ວ, ຄວາມ ກັງວົນ ຂອງມະຫາຊົນ ຕໍ່ຄວາມສ່ຽງຕ່າງໆ ທີ່ເກີດ ມາຈາກການປ່ຽນແປງ ສະພາບດິນຟ້າອາກາດ ທີ່ຮຸນແຮງ ຖືເປັນບັນຫາໜັກໃຈ. ຕໍ່ອຸທົກກະໄພ, ລົມພະຍຸ ແລະ ຄື້ນຄວາມຮ້ອນ ທີ່ເກີດຂຶ້ນທຸກໆຄັ້ງ ຄວາມກັງວົນ ນັ້ນນັບມື້ນັບເພີ່ມທະວີຂຶ້ນ. ໃນຂະ ນະດຽວກັນໄພພິບັດທາງດ້ານດິນຟ້າອາກາດ ຍິ່ງ ເປັນສິ່ງທີ່ໜ້າໜັກໃຈ ແລະ ເປັນໄປໄດ້ສູງສຳລັບ ປະເທດທີ່ທຸກຍາກ. ປະມານ 262 ລ້ານຄົນ ໄດ້ຮັບຜົນກະທົບຈາກໄພພິບັດ ທາງດ້ານດິນຟ້າ ອາກາດ ໃນແຕ່ລະປີ ຈາກປີ 2000 ເຖິງ 2004, ຫຼາຍກວ່າ 98% ຂອງຈຳນວນດັ່ງກ່າວ ຢູ່ໃນ ປະເທດ ທີ່ກຳລັງພັດທະນາ. ຢູ່ໃນບັນດາປະເທດ ທີ່ເປັນສະມາຊິກ ຂອງອົງການຮ່ວມມື ແລະ ພັດ ທະນາທາງດ້ານເສດຖະກິດ (OECD) 1 ໃນ ທຸກໆ 1,500 ຄົນ ແມ່ນຖືກກະທົບຈາກໄພພິບັດ ທາງດ້ານດິນຟ້າອາກາດ. ເມື່ອສົມທຽບໃສ່ ຕົວ ເລກສຳລັບປະເທດ ທີ່ກຳລັງພັດທະນາ ແມ່ນ 1 ໃນ 19 ຄົນ ຖືກກະທົບ ຈາກໄພພິບັດດັ່ງກ່າວ-ເມື່ອສົມທຽບຕົວເລກແລ້ວອັດຕາຄວາມແຕກຕ່າງ ຕໍ່ຄວາມສ່ຽງດັ່ງກ່າວແມ່ນ 79 ເທື່ອ.

ຄວາມທຸກຍາກທີ່ຢູ່ໃນລະດັບສູງ ແລະ ລະດັບ ການພັດທະນາຊັບພະຍາກອນມະນຸດທີ່ຕ່ຳ ໄດ້ຈຳ ກັດຄວາມສາມາດຂອງຄອບຄົວ ທີ່ທຸກຍາກໃນ ການຮັບມືກັບຄວາມສ່ຽງ ທີ່ເກີດມາຈາກການປ່ຽນ ແປງດິນຟ້າອາກາດ. ດ້ວຍຂອດຈຳກັດໃນການ ເຂົ້າເຖິງລະບົບປະກັນສັງຄົມ ຂອງພາກລັດ, ລາຍ ໄດ້ຕ່ຳ ແລະ ທຶນຮອນ ຫຼື ຊັບສິນທີ່ໜ້ອຍ, ຄອບ ຄົວທີ່ທຸກຍາກ ຕ້ອງໄດ້ຮັບມືກັບຄວາມຕື່ນຕົກໃຈ ທີ່ພົວພັນເຖິງດິນຟ້າອາກາດ ພາຍໃຕ້ເງື່ອນໄຂທີ່ ຈຳກັດທີ່ສຸດ.

ຍຸດທະສາດສຳລັບການແກ້ໄຂຄວາມສ່ຽງ ຕ່າງໆທີ່ເກີດຈາກ ດິນຟ້າອາກາດ ສາມາດເສີມກຳ ລັງໃຫ້ແກ່ການແກ້ໄຂບັນຫາໄດ້. ຜູ້ຜະລິດໃນເຂດ ທີ່ແຫ້ງແລ້ງຈະຮູ້ໄດ້ດີວ່າຈະປູກພືດພັນແນວໃດ ແລະ ເກັບກ່ຽວຜົນຜະລິດໄດ້ໃນຍາມໃດ ເພື່ອຈະ ເພີ່ມລາຍຮັບ ແລະ ເພື່ອຫຼຸດຜ່ອນຄວາມສ່ຽງ, ຊຶ່ງອາດຈະປູກອັນໃດອັນໜຶ່ງ ເຖິງວ່າຈະໃຫ້ຜົນ ຕອບແທນທາງດ້ານ ເສດຖະກິດໜ້ອຍກວ່າ, ແຕ່ ສາມາດທົນແລ້ງໄດ້ດີກວ່າ. ເມື່ອເວລາທີ່ໄດ້ຮັບ ຜົນກະທົບຈາກ ການປ່ຽນແປງດິນຟ້າອາກາດ, ປະຊາຊົນທີ່ທຸກຍາກສ່ວນຫຼາຍແລ້ວ ຈະຖືກບັງ ຄັບໃນຕົວໃຫ້ຂາຍຊັບສິນທີ່ເປັນຜົນຜະລິດ ຂອງ ເຂົາເຈົ້າ ດ້ວຍຄວາມຫວັງວ່າ ຈະສາມາດຟື້ນຕົວ ໄດ້, ເພື່ອປົກປ້ອງການມີຢູ່ມີກິນ. ແລະ ເມື່ອມັນ ຍັງມີຄວາມຂາດເຂີນຢູ່, ຄອບຄົວທຸກຍາກຈະແກ້

ຮູບພາບທີ 4 ການຫຼຸດລົງເຄິ່ງໜຶ່ງ ຂອງປະລິມານການປ່ອຍອາຍຄາບອນ ພາຍໃນປີ 2005 ອາດຈະສາມາດຫຼີກລ້ຽງອັນຕະລາຍ ທີ່ເກີດຈາກການປ່ຽນແປງດິນຟ້າອາກາດ



ໝາຍເຫດ: **ສະຖານະການ IPCC** ເວົ້າເຖິງ ທິດທາງຂອງການເຕີບໃຫຍ່ຂະຫຍາຍຕົວ ຂອງປະຊາກອນ, ເສດຖະກິດ, ການປ່ຽນແປງທາງດ້ານ ເຕັກໂນໂລຊີ ຊຶ່ງກ່ຽວຂ້ອງ ກັບການປ່ອຍອາຍຄາບອນ ທີ່ຈະເກີດຂຶ້ນ ໃນອະນາຄົດຢ່າງມີເຫດຜົນ. **ສະຖານະການ A1** ສັນນິຖານວ່າ ທັງການຂະຫຍາຍຕົວຂອງປະຊາກອນ ແລະ ເສດຖະກິດ ຢ່າງໄວວາ ຂຶ້ນຢູ່ກັບການນຳໃຊ້ ນ້ຳມັນເຊື້ອໄຟ (A1FL), ພະລັງງານທີ່ບໍ່ໄດ້ມາຈາກນ້ຳມັນເຊື້ອໄຟ (ຫຼື ພະລັງງານທາງເລືອກ) (A1T), ຫຼື ທັງສອງຢ່າງລວມກັນ (A1B). **ສະຖານະການ A2** ສັນນິຖານວ່າ ເສດຖະກິດເຕີບໃຫຍ່ ຂະຫຍາຍຕົວໃນລະດັບຕ່ຳ, ການຂະຫຍາຍຕົວ ໄປທົ່ວໂລກຢູ່ໃນ ລະດັບໜ້ອຍ ແລະ ປະຊາກອນຍັງສືບຕໍ່ ຂະຫຍາຍຕົວ. **ສະຖານະການ B1** ແລະ **B2** ສະແດງເຖິງການຈຳກັດການປ່ອຍອາຍຄາບອນ ໂດຍຜ່ານການເພີ່ມທະວີການນຳໃຊ້ ແຫຼ່ງຊັບພະຍາກອນຢ່າງມີປະສິດທິ ພາບ ແລະ ເຕັກໂນໂລຊີທີ່ໄດ້ຮັບການ ພັດທະນາໃຫ້ດີຂຶ້ນ (B1) ແລະ ໂດຍການແກ້ໄຂບັນຫາໃນປະເທດໃດໜຶ່ງຫຼາຍຂຶ້ນ (B2).

ແຫຼ່ງຂໍ້ມູນ: Meinshausen 2007.

ໄຂດ້ວຍວິທີອື່ນໆ ເຊັ່ນ: ຫຼຸດຜ່ອນຄາບເຂົ້າ, ຫຼຸດ ຜ່ອນຄ່າໃຊ້ຈ່າຍໃນການປິ່ນປົວ, ການຮັກສາສຸຂະ ພາບ, ແລະ ເອົາລູກອອກຈາກໂຮງຮຽນ. ອັນນີ້ ແມ່ນມາດຕະການແກ້ໄຂຂອງຄົນທີ່ສິ້ນຫວັງ ຊຶ່ງ ສາມາດສ້າງວົງຈອນທີ່ ເຮັດໃຫ້ເຂົາເຈົ້າວົນວຽນ ຢູ່ນຳຄວາມທຸກຍາກຢ່າງຍາວນານ, ເຮັດໃຫ້ຄອບ ຄົວມີສະພາບທີ່ບໍ່ໝັ້ນຄົງ ເຂົ້າສູ່ສະພາບທີ່ຈົມຢູ່ ໃນກັບດັກທີ່ບໍ່ສາມາດພັດທະນາຕົນເອງໄດ້.

ການຄົ້ນຄວ້າທີ່ດຳເນີນໃນການສ້າງບົດລາຍ ງານສະບັບນີ້ ໄດ້ພະຍາຍາມຊອກຄົ້ນວ່າ ກັບດັກ ດັ່ງກ່າວນີ້ຈະມີອິດທິພົນຫຼວງຫຼາຍແນວໃດ. ໂດຍ ນຳໃຊ້ຂໍ້ມູນກ່ຽວກັບລະດັບການເງິນ ຂອງຄອບ ຄົວ ພວກເຮົາຈະສາມາດ ຕີລາຄາຜົນສະທ້ອນ ທີ່ເກີດຂຶ້ນຈາກຜົນກະທົບ ກ່ຽວກັບສະພາບການ ປ່ຽນແປງດິນຟ້າອາກາດ ຂອງການດຳລົງຊີວິດ ຂອງຄົນທຸກຍາກໃນໄລຍະຍາວ. ຢູ່ປະເທດ ເອທິ ໂອເປັຍ ແລະ ເຄນຍາ, ສອງປະເທດທີ່ແຫ້ງແລ້ງ-ກັນດານທີ່ສຸດໃນໂລກ, ເດັກນ້ອຍອາຍຸແຕ່ 5 ປີ ຫຼື

ນ້ອຍກວ່າ ປະມານ 36% ແລະ 50% ຕາມລຳດັບ ສ່ວນຫຼາຍແລ້ວຈະກາຍເປັນເດັກ ທີ່ຂາດອາຫານ ຖ້າຫາກว່າເຂົາເຈົ້າຫາກໄດ້ເກີດໃນລະຫว่າງໄລ ຍະມີໄພແຫ້ງແລ້ງ. ສຳລັບປະເທດ ເອທິໂອເປັຍ, ສາມາດຕີລາຄາໄດ້ว่ามีเดักขาดอาหาน ปะมาน 2 ล้านคิน ในปี 2005. ยู่ปะเทด ไนเจ (Niger), ເດັກອາຍຸລະຫว่າງ ສອງປີ ຫຼື ນ້ອຍກว่า ນີ້ທີ່ເກີດໃນປີທີ່ແຫ້ງແລ້ງ ປະມານ 72% ຈະກາຍ ເປັນເດັກທີ່ບໍ່ເຕີບໃຫຍ່ຕາມປົກປະຕິ. ແລະ ແມ່ຍິງ ອິນເດຍ ທີ່ເກີດໃນປີທີເກີດອຸທົກກະໄພ ໃນຊຸມປີ 1970 ຈະມີພຽງແຕ່ປະມານ 19% ໄດ້ເຂົ້າຮຽນໃນ ຂັ້ນປະຖົມສົມບູນ.

ຄວາມເສຍຫາຍໄລຍະຍາວ ຕໍ່ກັບການພັດ ທະນາມະນຸດ ຍ້ອນຈາກຜົນກະທົບ ການປ່ຽນແປງ ດິນຟ້າອາກາດບໍ່ທັນໄດ້ຍົກຂຶ້ນມາໃຫ້ເຫັນຢ່າງ ພຽງພໍເທື່ອ. ສື່ມວນຊົນ ທີ່ລາຍງານກ່ຽວກັບໄພ ພິບັດຕ່າງໆ ທີ່ກ່ຽວຂ້ອງກັບດິນຟ້າອາກາດ ຈະ ເປັນຜູ້ທີ່ມີພາລະບົດບາດສຳຄັນ ໃນການສະແດງ ຂໍ້ມູນຂ່າວສານ-ແລະ ການຖ່າຍທອດສະພາບທີ່ ມະນຸດໄດ້ທົນທໍລະມານ ກັບການໄດ້ຮັບຜົນກະ ທົບຈາກການປ່ຽນແປ່ງສະພາບ ດິນຟ້າອາກາດ. ເຖິງຢ່າງໃດກໍ່ຕາມ, ມັນຍັງຍົກສູງສະຕິ ແລະ ເຕືອນພວກເຮົາໃຫ້ເຂົ້າໃຈກ່ຽວກັບ ປະສົບການ ທີ່ເກີດຂຶ້ນว่า “ຢູ່ນີ້-ມື້ນີ້-ຈາກໄປ-ມື້ອື່ນ” ພວກ ເຮົາຈະເຮັດແນວໃດ, ຊຶ່ງເປັນການທັນຄວາມສົນ ໃຈຂອງພວກເຮົາໃສ່ ຜົນກະທົບທີ່ເກີດຂຶ້ນຢ່າງ ຍາວນານຕໍ່ມະນຸດພວກເຮົາ ຊຶ່ງເປັນຜົນກະທົບ ມາຈາກໄພແຫ້ງແລ້ງ ແລະ ໄພນ້ຳຖ້ວມ.

ການປ່ຽນແປງສະພາບດິນຟ້າອາກາດ ຈະບໍ່ ໄດ້ປ່າວປະກາດຕົນເອງກ່ອນ ຫຼື ເປີດເຜີຍໃຫ້ ພວກເຮົາເຫັນว่ามันจะปุ่งแปง ຊຶ່ງມີຜົນຕໍ່ ການດຳລົງຊີວິດຂອງຄົນທຸກຍາກ. ການກຳນົດ ສາຍເຫດ ໂດຍກົງທີເກີດຂຶ້ນຈາກເຫດການສະ ເພາະໃດໜຶ່ງ ว่าเป็นสายเหดเธัดให้ ดินฟ้า ອາກາດມີການປ່ຽນແປງ ແມ່ນເປັນໄປບໍ່ໄດ້. ເຖິງ ຢ່າງໃດກໍ່ຕາມ, ການປ່ຽນແປງດິນຟ້າອາກາດ ຈະເຮັດໃຫ້ມີຜົນກະທົບ ຕໍ່ຄົນທີ່ທຸກຍາກ ແລະ ຄອບຄົວ ທີ່ອ່ອນແອບໍ່ໝັ້ນຄົງ ນັບມື້ນັບເພີ່ມຂຶ້ນ ແລະ ກໍ່ຈະເພີ່ມຄວາມກົດດັນ ໃຫ້ແກ່ການຊອກ ຫາຊ່ອງທາງ ຫຼື ຍຸດທະສາດໃນການແກ້ໄຂບັນຫາ ຊຶ່ງຕະຫຼອດເວລາ ສາມາດກັດເຊາະຄວາມສາ ມາດຂອງມະນຸດຊາດຢ່າງບໍ່ລົດລະ (ຕາຕະລາງ 5).

ເຮົາກຳນົດ 5 ຈຸດສຳຄັນຂອງກົນໄກການຂັບ ເຄື່ອນທີ່ການປ່ຽນແປງ ດິນຟ້າອາກາດອາດສາ ມາດຢຸດສະງັກ ແລະ ຈາກນັ້ນພວກເຮົາກໍ່ສາມາດ ກັບຄືນສູ່ການພັດທະນາມະນຸດໄດ້ຄື:

- *ການຜະລິດກະສິກຳ ແລະ ການຮັບປະກັນ ສະບຽງອາຫານ.* ການປ່ຽນແປງສະພາບດິນ ຟ້າອາກາດ ຈະກະທົບຕໍ່ການຕົກຂອງຝົນ, ອຸນ ຫະພູມ ແລະ ຄວາມກັກເກັບນ້ຳ ສຳລັບການ ກະສິກຳ {ເບິ່ງຕາຕະລາງ} ໃນເຂດທີ່ສູ່ງ. ຕົວຢ່າງ, ໄພແຫ້ງແລ້ງ ກະທົບເຂດຕ່າງໆ ທີ່ຢູ່ອ້ອມແອ້ມເຂດທະເລຊາຍ ຊາຮາລາ, ທະວີບ ອາຟາລິກາ ອາດຈະຂະຫຍາຍຕົວ ປະມານ 60-90 ລ້ານ ເຮັກຕາ, ຊຶ່ງປະຊາຊົນ ໃນເຂດທີ່ດິນແຫ້ງແລ້ງດັ່ງກ່າວ ຈະທົນທຸກກັບ ການສູນເສຍປະມານ 26 ຕື້ໂດລາສະຫະລັດ ພາຍໃນປີ 2060 (ຂໍ້ມູນລາຄາ ປີ 2003), ຊຶ່ງຈະເກີນຂອບເຂດ ການຊ່ວຍເຫຼືອ ຈາກ ຕ່າງປະເທດ ແບບທະວີພາຄີ ໃຫ້ເຂດດັ່ງກ່າວ. ພາກພື້ນອື່ນໆ ຂອງບັນດາປະເທດ ທີ່ກຳລັງ ພັດທະນາ-ລວມທັງທະວີບ ລາຕິນອາເມລິກາ ແລະ ອາຊີໃຕ້ ກໍ່ຈະປະສົບບັນຫາການສູນ ເສຍໃນການຜະລິດກະສິກຳ, ຊຶ່ງຈະເປັນສິ່ງ ທີ່ທ້າທາຍຕໍ່ກັບ ຄວາມພະຍາຍາມ ໃນການຕໍ່

ຮູບພາບທີ 5 ຄວາມສ່ຽງຈາກໄພພິບັດມີທ່າອ່ຽງຕໍ່ປະເທດທີ່ກຳລັງພັດທະນາ



ແຫຼ່ງຂໍ້ມູນ: HDRO ຄິດໄລບົນພື້ນຖານ OFDA ແລະ CRED 2007.

ສູ້ກັບຄວາມທຸກຍາກຂອງປະຊາຊົນຢູ່ເຂດຊົນນະບົດຂອງພາກພື້ນ ດັ່ງກ່າວ. ຈຳນວນຕົວເລກຜູ້ທີ່ໄດ້ຮັບຜົນກະທົບ ຈາກການຂາດອາຫານອາດຈະເພີ່ມຂຶ້ນເປັນ 600 ຕໍ່ຄົນ ພາຍໃນປີ 2080 (ຕາຕະລາງ 6).

- *ຄວາມວິຕົກກັງວົນກ່ຽວກັບນ້ຳ ແລະ ການຮັບປະກັນນ້ຳ.* ການປ່ຽນແປງໄດ້ເຮັດໃຫ້ແບບແຜນການປ່ຽນແປງ ແລະ ການລະລາຍຂອງນ້ຳແຂງຈະແຮງເພີ່ມໃຫ້ມີການປ່ຽນແປງທາງດ້ານລະບົບນິເວດ, ສ້າງຜົນກະທົບຕໍ່ກັບລະບົບຊົນລະປະທານນ້ຳ ແລະ ຂະບວນການຍ້າຍຖິ່ນຖານຂອງມະນຸດ (ຕາຕະລາງ7). ປະມານ 1.8 ຕື້ຂອງປະຊາກອນ ອາດຈະດຳລົງຊີວິດຢູ່ ໃນສະພາບແວດລ້ອມທີ່ຂາດແຄນນ້ຳ ພາຍໃນປີ 2080. ເຂດອາຊີກາງ, ພາກເໜືອຂອງປະເທດຈີນ ແລະ ພາກເໜືອຂອງອາຊີຕາເວັນອອກສຽງໃຕ້ ຈະປະສົບບັນຫາ ຄວາມສ່ຽງຢ່າງໃຫຍ່ໂຕມະໂຫລານ ທີ່ພົວພັນເຖິງ ການລະລາຍຂອງນ້ຳແຂງ-ໃນລະດັບ 10-15 ແມັດຕໍ່ປີ ໃນເຂດພູຫິມາລະຍາ. ລະບົບແມ່ນ້ຳ 7 ສາຍ ຂອງທະວີບອາຊີຈະປະສົບບັນຫາການໄຫຼທີ່ໄວ ແລະ ແຮງຂຶ້ນ ໃນເວລາສັ້ນໆໃດໜຶ່ງ, ຈາກນັ້ນອ່ອນແຮງລົງ ຊຶ່ງເປັນຜົນມາຈາກການລະລາຍຂອງນ້ຳແຂງ. ໃນເຂດ ພູເຂົາແອນດິສ ໃນທະວີບອາຟາລິກາໃຕ້ ກໍ່ຈະປະສົບກັບບັນຫາການຮັບປະກັນນ້ຳທີ່ກຳລັງຈະເກີດຂຶ້ນ ຊຶ່ງເປັນໄພຂົ່ມຂູ່ມາຈາກການລະລາຍ ຫຼື ການພັງທະລາຍຂອງນ້ຳແຂງໃນເຂດຮ້ອນ. ຫຼາຍໆປະເທດ ໄດ້ປະສົບກັບບັນຫາການຂາດແຄນນ້ຳຢ່າງໜັກແລ້ວ ເຊັ່ນ: ໃນເຂດຕາເວັນອອກກາງ ອາດຈະປະສົບບັນຫາການສູນເສຍການກັກເກັບນ້ຳ ຢ່າງໜັກໜ່ວງ.
- *ລະດັບນ້ຳທະເລທີ່ເພີ່ມຂຶ້ນ ແລະ ການປະສົບໄພພິບັດຈາກການປ່ຽນແປງດິນຟ້າອາກາດ.* ລະດັບນ້ຳທະເລ ສາມາດເພີ່ມຂຶ້ນຢ່າງໄວວາ

ຮູບພາບທີ 6 ການປ່ຽນແປງດິນຟ້າອາກາດຈະກະທົບຕໍ່ການກະສິກຳຂອງບັນດາປະເທດ ທີ່ກຳລັງພັດທະນາ



ແຫຼ່ງຂໍ້ມູນ: Cline 2007.

ຍ້ອນການລະລາຍຂອງນ້ຳແຂງ. ອຸນຫະພູມ ທົ່ວໂລກຈະເພີ່ມຂຶ້ນ 3-4 ອົງສາ ເຊັນຕິເກຼດ ຊຶ່ງຈະມີຜົນກະທົບໃຫ້ຜູ້ຄົນ 330 ຕື້ຄົນ ຖືກຍົກຍ້າຍຢ່າງຖາວອນ ຫຼື ຊົ່ວຄາວ ຍ້ອນໄພນ້ຳຖ້ວມ ຫຼື ອຸທົກກະໄພ. ຫຼາຍກວ່າ 70 ລ້ານຄົນ ຢູ່ປະເທດ ບັງກະລາເທດ, 6 ລ້ານຄົນ ຢູ່ພາກໃຕ້ ຂອງປະເທດອີຢິບ ແລະ 22 ລ້ານຄົນຢູ່ ປະເທດຫວຽດນາມ ອາດໄດ້ຮັບຜົນກະທົບອັນນີ້. ບັນດາລັດ ນ້ອຍໆ ທີ່ເປັນເກາະເປັນດອນ ໃນເຂດທະເລ ຄາລິບຽນ ແລະ ປາຊີຟິກ ອາດປະສົບກັບ ຄວາມສູນເສຍ ທີ່ເປັນໄພອັນໃຫຍ່ຫຼວງ. ອຸນ ຫະພູມ ທີ່ເພີ່ມຂຶ້ນຂອງນ້ຳທະເລ ຈະເຮັດໃຫ້ ເກີດພາຍຸຫຼາຍຂຶ້ນ ແລະ ມີຄວາມຮຸນແຮງ ຫຼາຍຂຶ້ນກະທົບບັນດາປະເທດໃນເຂດຮ້ອນ, ຊຶ່ງຫຼາຍກວ່າ 344 ລ້ານຄົນ ໃນປັດຈຸບັນ ຈະປະສົບກັບ ພະຍຸຫຼາຍໆຄັ້ງ, ມີຄວາມຮຸນ ແຮງຫຼາຍຂຶ້ນ ຊຶ່ງອາດຈະເຮັດໃຫ້ມີຜົນກະທົບ ທີ່ສ້າງຄວາມສູນເສຍຢ່າງໃຫຍ່ຫຼວງ ສຳລັບ ກຸ່ມຄົນໃຫຍ່ໆ ຢູ່ໃນເຂດດັ່ງກ່າວນີ້. ປັດຈຸບັນ ນີ້, ປະຊາຊົນ 1 ຕື້ຄົນ ອາໄສຢູ່ໃນເຂດຊຸມຊົນ ແອອັດ ໃນເມືອງທີ່ຢູ່ອາໄສຢູ່ໃນບ້ານເຮືອນ ທີ່ບໍ່ແຂງແຮງຕາມສັນພູ ຊຶ່ງອາດຈະເຈື່ອນ ໄດ້ງ່າຍ ຫຼື ຕາມແຄມແມ່ນ້ຳ ທີ່ຖືກນ້ຳຖ້ວມ ໄດ້ງ່າຍ ກຳລັງປະສົບກັບຄວາມສ່ຽງທີ່ສາຫັດ

- *ລະບົບນິເວດ ແລະ ຊີວະນາໆພັນ. ການປ່ຽນ ແປງສະພາບດິນຟ້າອາກາດແມ່ນໄດ້ປ່ຽນ ແປງລະບົບນິເວດແລ້ວ.* ປະມານເຄິ່ງໜຶ່ງ ຂອງລະບົບປະກາລັງຂອງໂລກ ໄດ້ປະສົບ ກັບບັນຫາ "ການຟອກຂາວ" (ປະກົດການ ປະກາລັງຕາຍ) ຊຶ່ງມີຜົນມາຈາກອຸນຫະພູມ ທີ່ເພີ່ມຂຶ້ນຂອງນ້ຳທະເລ. ການເພີ່ມຂຶ້ນຂອງ ສານສີ້ມ ຫຼື ຄວາມເປັນກົດໃນມະຫາສະມຸດ ກໍ່ເປັນບັນຫາໄລຍະຍາວອີກຢ່າງໜຶ່ງ ທີ່ຂົ່ມຂູ່ ລະບົບນິເວດຂອງສັດ ແລະ ພືດໃນທະເລ. ລະບົບນິເວດຂອງສັດ ແລະ ພືດທີ່ຢູ່ໃນເຂດ ນ້ຳແຂງ ໄດ້ປະສົບບັນຫາກັບການທຳລາຍ ຢ່າງຮ້າຍແຮງ ເນື່ອງມາຈາກ ການປ່ຽນແປງ ສະພາບດິນຟ້າອາກາດ, ໂດຍສະເພາະໃນເຂດ ອາກຕິກ. ໃນຂະນະ ທີ່ສັດບາງປະເພດ ແລະ ພືກສາບາງຊະນິດ ຈະສາມາດປັບຕົວໄດ້, ແຕ່ສຳລັບສັດບາງ ປະເພດ ແລະ ພືກສາ ບາງຊະນິດບໍ່ສາມາດ ຮັບໄດ້ ກັບການປ່ຽນແປງຢ່າງໄວວາແບບນີ້: ລະບົບດິນຟ້າອາກາດ ໄດ້ມີການເຄື່ອນໄຫວ ໝູນວຽນໄວກວ່າເກົ່າ ເກີນກວ່າທີ່ພວກສັດ ແລະ ພືດຈະສາມາດນຳທັນໄດ້. ອຸນຫະພູມ ທີ່ເພີ່ມຂຶ້ນ 3 ອົງສາ, ປະມານ 20-30% ຂອງສັດ ແລະ ພືດ ບາງຊະນິດ ທີ່ອາໄສຢູ່ ເທິງບົກ ອາດຈະສູນພັນໄດ້.
- *ສຸຂະພາບຂອງມະນຸດ.* ປະເທດທີ່ຮັ່ງມີ ໄດ້ກະ ກຽມລະບົບການຮັກສາສຸຂະພາບຂອງປະຊາ ຊົນເຂົາເຈົ້າແລ້ວ ເພື່ອຮັບມືກັບຜົນກະທົບ ຈາກການປ່ຽນແປງ ສະພາບດິນຟ້າອາກາດ ໃນອະນາຄົດ, ເຊັ່ນການຮັບມືກັບສະພາບຄື້ນ ຄວາມຮ້ອນທີ່ເກີດໃນເຂດເອີລົບໃນປີ 2003 ແລະ ສະພາບຮ້ອນໂພດໃນລະດູຮ້ອນ ແລະ ໜາວໂພດໃນລະດູໜາວ. ເຖິງຢ່າງໃດກໍ່ຕາມ, ຜົນກະທົບຕໍ່ສຸຂະພາບທີ່ໃຫຍ່ຫຼວງ ຈະເກີດ ຂຶ້ນກັບປະຊາຊົນ ຢູ່ໃນປະເທດ ທີ່ກຳລັງ ພັດທະນາ ຍ້ອນວ່າ ລະດັບຄວາມທຸກຍາກ ຍັງຢູ່ໃນລະດັບສູງຢູ່ ແລະ ຄວາມສາມາດ ທີ່ຈຳກັດໃນການ ສະໜອງລະບົບເບິ່ງແຍງ ຮັກສາສຸຂະພາບ. ບັນດາພະຍາດທີ່ເປັນອັນ ຕະລາຍຮ້າຍແຮງຕໍ່ຊີວິດ ອາດຈະຂະຫຍາຍ ຕົວເປັນວົງກວ້າງກວ່າເກົ່າ. ຕົວຢ່າງ, ອາດ

ຮູບພາບທີ 7 ປະລິມານການລະລາຍຂອງນ້ຳແຂງ ຂອງລາຕິນອາເມລິກາ



ແຫຼ່ງຂໍ້ມູນ: Painter 2007, ຄິດໄລ່ບົນພື້ນຖານຈາກ ຊຸນຊິນຕາມເທືອກເຂົາແອນດີສ

ຈະມີການເພີ່ມຂຶ້ນປະມານ 220 - 400 ລ້ານຄົນ ເປັນໄຂ້ມາເລເລຍ - ພະຍາດທີ່ຂ້າຊີວິດຄົນປະມານ 1 ລ້ານຄົນ ຕໍ່ປີ. ຈຳນວນຜູ້ທີ່ເສຍຊີວິດຈາກໄຂ້ເລືອດອອກ ທີ່ເພີ່ມຂຶ້ນກໍ່ເປັນຫຼັກຖານອັນຈະແจ້ງວ່າ ເປັນພະຍາດທີ່ຢູ່ໃນລະດັບ ເປັນອັນຕະລາຍຮ້າຍແຮງຂຶ້ນກວ່າເກົ່າ, ໂດຍສະເພາະ ຢູ່ທະວີບ ລາຕິນ ອາເມລິກາ ແລະ ຫຼາຍພາກສ່ວນຂອງອາຊີ ຕາເວັນອອກ. ການປ່ຽນແປງສະພາບດິນຟ້າ ອາກາດ ອາດເຮັດໃຫ້ການຕິດແປດພະຍາດ ເຫຼົ່ານີ້ ຫຼາຍຂຶ້ນໃນອະນາຄົດ.

ຈະເຫັນໄດ້ວ່າ 5 ຈຸດສຳຄັນດັ່ງກ່າວ ບໍ່ໄດ້ເຄື່ອນໄຫວແຍກຈາກກັນແຕ່ຢ່າງໃດເລີຍ. ພວກມັນຈະເຄື່ອນໄຫວຢ່າງປະສານກົມກຽວກັນ ຊຶ່ງຈະກະທົບຂະບວນການ ທາງດ້ານສັງຄົມ, ເສດຖະກິດ, ລະບົບນິເວດ ໃນວົງກວ້າງ ຊຶ່ງຈະເປັນການບັນທອນໂອກາດ ໃນການພັດທະນາມະນຸດ. ໂດຍບໍ່ສາມາດຫຼີກລ້ຽງໄດ້, ການປະສົມປະສານກັນຢ່າງຖືກຕ້ອງພໍດີ ຂອງກົນໄກຂັບເຄື່ອນ ຈາກການປ່ຽນແປງສະພາບດິນຟ້າອາກາດ ໄປສູ່ການພັດທະນາມະນຸດ ຈະເກີດຂຶ້ນຜ່ານປະເທດໜຶ່ງ ໄປສູ່ປະເທດໜຶ່ງ ແລະ ພາຍໃນປະເທດຕ່າງໆ. ແຕ່ກໍ່ຍັງມີຂອບເຂດທີ່ບໍ່ແນ່ນອນ ທີ່ກວ້າງຂວາງຢູ່. ສິ່ງທີ່ແນ່ນອນແມ່ນ ຄວາມເປັນອັນຕະລາຍຂອງການປ່ຽນແປງ ສະພາບດິນຟ້າອາກາດ ໄດ້ເຮັດໃຫ້ເກີດທ່າແຮງ ທີ່ສິ່ງຜົນກະທົບ ທີ່ເປັນລະບົບທີ່ມີອິດທິພົນ ຕໍ່ການພັດທະນາມະນຸດ ພວກເຮົາທົ່ວທຸກກຸ່ມຄົນຕ່າງໆ ຂອງປະເທດຕ່າງໆ. ໃນການປຽບທຽບ ໃຫ້ເຫັນຄວາມແຕກຕ່າງ ຕໍ່ກັບຜົນກະທົບທາງດ້ານເສດຖະກິດ ຊຶ່ງຈະມີຜົນສະທ້ອນເຮັດໃຫ້ອັດຕາເງິນເຟີ້ເພີ່ມຂຶ້ນ, ການພັດທະນາມະນຸດຊາດຈະໄດ້ຮັບຜົນກະທົບ-ຈາກການສູນເສຍໂອກາດ ໄດ້ຮັບການຮັກສາສຸຂະພາບ ແລະ ການສຶກສາ, ຫຼຸດຜ່ອນສະມັດທະພາບໃນການຜະລິດ, ແຕ່ກໍ່ສາມາດແກ້ໄຂໄດ້, ແຕ່ການສູນເສຍລະບົບນິເວດ ທີ່ຈຳເປັນທີ່ສຸດກັບການດຳລົງຊີວິດຂອງມະນຸດ ແມ່ນຖືວ່າ ອາດຈະບໍ່ສາມາດຟື້ນຄືນໄດ້ເລີຍ.

ການຫຼີກລ້ຽງອັນຕະລາຍ ຈາກການປ່ຽນແປງສະພາບດິນຟ້າອາກາດ: ຍຸດທະສາດ ໃນການຫຼຸດຜ່ອນໄພພິບັດ

ການຫຼີກລ້ຽງໄພຂົ່ມຂູ່ ທີ່ບໍ່ເຄີຍມີມາກ່ອນ ທີ່ເກີດມາຈາກອັນຕະລາຍ ຈາກການປ່ຽນແປງດິນຟ້າອາກາດ ຮຽກຮ້ອງໃຫ້ມີການປະຕິບັດຮ່ວມກັນໂດຍບໍ່ມີການຈຳແນກ ໃນເວທີການຮ່ວມມືຂອງສາກົນ. ການເຈລະຈາໃນການຈຳກັດການປ່ອຍອາຍພິດ ສຳລັບຫຼັງຈາກອະນຸສັນຍາ ກຽວໂຕ ໃນປີ 2012 ໄດ້ຮຽກຮ້ອງພັນທະປະຕິບັດ - ແລະ ຕ້ອງ -ກຳນົດປະລິມານການປ່ອຍອາຍ ກາກໂບນິກ ໃນໂລກ. ເຖິງຢ່າງໃດກໍ່ຕາມ, ເສັ້ນທາງໃນການປ່ອຍອາຍພິດທີ່ມີປະລິມານຄົງທີ່ ຈະມີຄວາມໝາຍ ຖ້າຫາກว่า ມັນໄດ້ຖືກຜັນຂະຫຍາຍລົງໃນຍຸດທະສາດຂອງແຕ່ລະປະເທດ - ແລະ ຂອບເຂດກຳນົດປະລິມານການປ່ອຍອາຍຄາບອນ ຂອງແຕ່ລະປະເທດ. ການຫຼຸດຜ່ອນການປ່ຽນແປງດິນຟ້າອາກາດ ແມ່ນກ່ຽວຂ້ອງກັບການປ່ຽນແປງວິທີ ທີ່ພວກເຮົາຜະລິດ ແລະ ນຳໃຊ້ພະລັງງານ. ແລະ ມັນກ່ຽວຂ້ອງກັບ ການດຳລົງຊີວິດ ຢູ່ໃນຂອບເຂດຂອງການປົກປັກຮັກສາລະບົບນິເວດ ຢ່າງຍືນຍົງ.

ການກຳນົດເປົ້າໝາຍສິນເຊື່ອ ອາຍຄາບອນ ທີ່ພົວພັນເຖິງການຫຼຸດຜ່ອນອາຍຄາບອນໃນໂລກ ແມ່ນເປັນຈຸດໜຶ່ງຂອງການເລີ່ມຕົ້ນ ສຳລັບການປ່ຽນແປງໄປສູ່ທິນທາງແຫ່ງການຫຼຸດຜ່ອນການປ່ອຍອາຍຄາບອນທີ່ຍືນຍົງ. ເປົ້າໝາຍດັ່ງກ່າວນີ້ ສາມາດກຳນົດພື້ນຖານສຳລັບ ການປ່ອຍອາຍຄາບອນໃນຕົວຈິງ ຊຶ່ງເປັນການກຳນົດຂີດຄວາມສາມາດຈາກປັດຈຸບັນ ໄປສູ່ອະນາຄົດ ໂດຍຜ່ານແຜນການຕ່າງໆ ເປັນຂັ້ນເປັນຕອນ. ເຖິງຢ່າງໃດກໍ່ຕາມເປົ້າໝາຍສິນເຊື່ອ ອາຍຄາບອນ ຄວນຈະມີນະ�โยบายທີ່ຈະແຈ້ງຊຸກຍູ້. ຈາກສະຖິຕິທີ່ມີໃນປັດຈຸບັນ ໃນວຽກງານຂົງເຂດນີ້ ສະແດງໃຫ້ເຫັນว่า ຍັງບໍ່ທັນມີການສົ່ງເສີມຊຸກຍູ້ຢ່າງແທ້ຈິງເທື່ອ. ບັນຫາປະເທດທີ່ພັດທະນາແລ້ວ ກໍ່ລົ້ມເຫຼວໃນການກຳນົດເປົ້າໝາຍພາຍໃຕ້ອະນຸສັນຍາ ກຽວໂຕ: ປະເທດການາດາ ເປັນຕົວຢ່າງທີ່ເດັ່ນທີ່ສຸດໃນຈຸດນີ້. ໃນບາງກໍລະນີ, ຄວາມພະຍາຍາມອັນໃຫຍ່ຫຼວງໃນການກຳນົດເປົ້າໝາຍຕາມ "ກຽວໂຕ-ບວກ" ໄດ້ຖືກຮັບຮອງແລ້ວ. ສະຫະພາບ ເອີລົບ ແລະ ລາດຊະອານາຈັກອັງກິດ ໄດ້ຮັບເອົາເປົ້າໝາຍດັ່ງກ່າວແລ້ວ. ຍ້ອນເຫດຜົນແຕກຕ່າງກັນ, ປະເທດເຫຼົ່ານັ້ນ ກໍ່ເບິ່ງຄືว่า ຈະລົ້ມເຫຼວຄືກັນ ຍົກເວັ້ນເຂົາເຈົ້າຫາກກຳນົດເອົາ ການຫຼຸດຜ່ອນການປ່ອຍອາຍຄາບອນ ເປັນໃຈກາງຢ່າງໄວໃນການປະຕິຮູບນະ�โยบายພະລັງງານ. (ຕາຕະລາງ 2).

ສອງປະເທດຕົ້ນຕໍຂອງ OECD ບໍ່ໄດ້ປະຕິບັດພັນທະ ກຳນົດອັດຕາປ່ອຍອາຍ ຄາບອນ ຕາມອະນຸສັນຍາ ກຽວໂຕ. ປະເທດອິດສະຕຣາລີ ໄດ້ເລືອກເອົາການລິເລີ່ມການປະຕິບັດ ດັ່ງກ່າວ ໃນຂອບເຂດ ທີ່ກວ້າງຂວາງ ດ້ວຍຄວາມສະໝັກໃຈ, ຊຶ່ງເຮັດໃຫ້ມີຜົນໄດ້ຮັບແບບປະສົມ. ປະເທດສະຫະລັດອາເມລິກາ ບໍ່ໄດ້ກຳນົດເປົ້າໝາຍໃນການຫຼຸດຜ່ອນອາຍຄາບອນ ຂອງລັດຖະບານກາງ. ແທນທີ່ຈະກຳນົດລະອຽດ, ປະເທດສະຫະລັດອາເມລິກາ ໄດ້ກຳນົດເປົ້າໝາຍຫຼຸດຜ່ອນ "ລະດັບຄວາມໜາແໜ້ນ-ອາຍຄາບອນ" ຊຶ່ງເປັນການວັດແທກຄວາມມີປະສິດທິພາບ. ບັນຫາແມ່ນ ຜົນຂອງການວັດຄວາມມີປະສິດທິພາບນັ້ນ ບໍ່ໄດ້ເຮັດໃຫ້ມີການຫຼຸດຜ່ອນປ່ອຍ ອາຍຄາບອນ ຈຳນວນມະຫາສານໃນບັນຍາກາດ ກົງກັນຂ້າມ ພັດມີການເພີ່ມທະວີຂຶ້ນ. ເມື່ອບໍ່ມີການກຳນົດກົດໝາຍຂອງລັດຖະບານກາງ, ບັນດາລັດຕ່າງໆ ຂອງປະເທດສະຫະລັດ ອາເມລິກາ ຈຶ່ງໄດ້ກຳນົດເປົ້າໝາຍຫຼຸດຜ່ອນອາຍຄາບອນຂອງຕົນເອງ. ກົດ

ໝາຍວ່າດ້ວຍການແກ້ໄຂບັນຫາພາວະໂລກຮ້ອນ ຂອງລັດຄາລິຟໍເນຍ ປີ 2006 ແມ່ນຄວາມພະຍາຍາມຄັ້ງໃຫຍ່ ໃນການກຳນົດເປົ້າໝາຍຫຼຸດຜ່ອນການປ່ອຍອາຍພິດເຮືອນແກ້ວ ຊຶ່ງມີຜົນເຮັດໃຫ້ມີການປະຕິຮູບນະ�โยบาย ພະລັງງານ.

ການກຳນົດເປົ້າໝາຍຫຼຸດຜ່ອນອາຍຄາບອນ ແມ່ນບາດກ້າວທຳອິດທີ່ສຳຄັນ. ການຂັນຂະຫຍາຍເປົ້າໝາຍດັ່ງກ່າວເຂົ້າໃນນະ�โยบาย ແມ່ນກາຍເປັນບັນຫາທ້າທາຍ ທາງດ້ານການເມືອງຫຼາຍ. ເລີ່ມຈາກຈຸດ: ການກຳນົດລາຄາ ຂອງອາຍຄາບອນ ທີ່ປ່ອຍ. ການປ່ຽນແປງ ໂຄງສ້າງນະ�โยบายຊຸກຍູ້ ແມ່ນເງື່ອນໄຂ ທີ່ສຳຄັນຫຼາຍ ສຳລັບການເພີ່ມທະວີການປ່ຽນແປງໄປສູ່ການຫຼຸດຜ່ອນການປ່ອຍອາຍຄາບອນ. ໃນສະຖານະການທີ່ດີທີ່ສຸດໜຶ່ງ, ລາຄາຂອງອາຍຄາບອນ ອາດຈະກາຍເປັນລາຄາທົ່ວໂລກ. ອັນນີ້ແມ່ນການກຳນົດທີ່ບໍ່ເປັນຈິງທີ່ສຸດ ໃນໄລຍະຍາວ ຍ້ອນວ່າໂລກເຮົາຂາດລະບົບທີ່ດີໃນການຈັດການ ບັນຫາດັ່ງກ່າວ. ທາງເລືອກໜຶ່ງ ທີ່ເປັນໄປໄດ້ທີ່ສຸດ ແມ່ນສຳລັບປະເທດທີ່ຮັ່ງມີ ພັດທະນາໂຄງສ້າງລາຄາອາຍຄາບອນ. ເມື່ອໂຄງສ້າງລາຄາດັ່ງກ່າວ ມີການພັດທະນາຂຶ້ນ, ບັນດາປະເທດທີ່ກຳລັງພັດທະນາ ອາດຈະເຊື່ອມສານເອົາໂຄງສ້າງດັ່ງກ່າວ ຕາມເງື່ອນໄຂທີ່ເຂົາເຈົ້າສາມາດເຮັດໄດ້.

ມີວິທີທາງສອງວິທີ ທີ່ຈະກຳນົດລາຄາຂອງອາຍຄາບອນ. ວິທີທີ່ໜຶ່ງ ແມ່ນການກຳນົດພາສີ ອາຍຄາບອນໂດຍກົງ. ມັນມີຄວາມສຳຄັນວ່າ ພາສີອາຍຄາບອນ ຈະບໍ່ຖືວ່າເປັນການເພີ່ມພາສີ ໃຫ້ແກ່ທຸກໆສິ່ງ. ລາຍໄດ້ທີ່ເກັບໄດ້ຈາກພາສີ ດັ່ງກ່າວ ສາມາດນຳໃຊ້ໃນວິທີການທີ່ເປັນກາງ ເພື່ອຊຸກຍູ້ການປະຕິຮູບພາສີ ທີ່ກ່ຽວຂ້ອງກັບສິ່ງແວດລ້ອມໄດ້ຢ່າງກວ້າງຂວາງ - ຕົວຢ່າງ, ການຫຼຸດຜ່ອນພາສີແຮງງານ ແລະ ການລົງທຶນ. ລະດັບຄວາມດຸ່ນດ່ຽງ ຂອງພາສີຈະຮຽກຮ້ອງໃຫ້ມີການປັບໃຫ້ສອດຄ່ອງ ຢູ່ໃນແງ່ຂອງແນວโน้มການປ່ອຍອາຍພິດເຮືອນແກ້ວ. ວິທີການທີໜຶ່ງ, ເປັນວິທີການທີ່ມີຄວາມສອດຄ່ອງ ກັບວິທີການປ່ອຍອາຍຄາບອນ ທີ່ໝັ້ນຄົງ ຊຶ່ງນຳມາເປັນການກຳນົດລະດັບ ຂອງພາສີ ອາຍຄາບອນ ໃນລະຫວ່າງ 10 - 20 ໂດລາສະຫະລັດ/ໂຕນ ຂອງອາຍ ຄາບອນ ໃນປີ 2010, ຊຶ່ງເພີ່ມຂຶ້ນຈາກ 5 - 10 ໂດລາສະຫະລັດ/ໂຕນ ຂອງອາຍຄາບອນ ຕໍ່ປີ, ເພື່ອກ້າວໄປສູ່ອັດຕາ 60 - 100 ໂດລາສະຫະລັດ/ໂຕນ ຂອງອາຍຄາບອນ. ວິທີການດັ່ງກ່າວນີ້ ຈະກຳນົດໃຫ້ນັກລົງທຶນ ແລະ ຕະຫຼາດ ໄດ້ກຳນົດ ແຜນການລົງທຶນໃນອະນາຄົດທີ່ຈະແຈ້ງ ແລະ ສາມາດຄາດຄະເນໄດ້ໃນຕໍ່ໜ້າ. ແລະມັນອາດຈະເປັນນະ�โยบายທີ່ແຂງແຮງ ໃນການຊຸກຍູ້ການປ່ຽນແປງການຫຼຸດຜ່ອນອາຍຄາບອນໃຫ້ຢູ່ໃນລະດັບຕ່ຳ.

ວິທີທາງທີສອງໃນການກຳນົດລາຄາອາຍຄາບອນ ແມ່ນການກຳນົດຂີດຈຳກັດ-ແລະ-ຂາຍ. ພາຍໃຕ້ລະບົບການກຳນົດຂີດຈຳກັດ-ແລະ-ຂາຍ, ລັດຖະບານກຳນົດລະດັບການປ່ອຍອາຍຄາບອນທົ່ວໄປ ແລະ ອະນຸຍາດໃຫ້ມີການຊື້ຂາຍ ອັດຕາການປ່ອຍອາຍຄາບອນ ຊຶ່ງອະນຸຍາດໃຫ້ ຂະແໜງທຸລະກິດໄດ້ສາມາດປ່ອຍຕາມອັດຕາທີ່ກຳນົດ. ຂະແໜງທຸລະກິດໃດທີ່ສາມາດຫຼຸດຜ່ອນການປ່ອຍອາຍຄາບອນໄດ້ຖືກກວ່າ ກໍ່ຈະສາມາດ ຂາຍອັດຕາອາຍຄາບອນທີ່ຕົນໄດ້ຮັບອະນຸຍາດ ໃຫ້ປ່ອຍ. ດ້ານຫຍໍ້ທໍ້ຢ່າງໜຶ່ງຂອງການກຳນົດ-ແລະ-ຂາຍແມ່ນລາຄາພະລັງງານນັ້ນ ບໍ່ມີຄວາມແນ່ນອນ. ແຕ່ດ້ານດີຂອງມັນແມ່ນມີສິ່ງແວດລ້ອມ ທີ່ຍືນຍົງແນ່ນອນ: ການກຳນົດເປັນເພດານຂອງ ປະລິມານທີ່ນຳໃຊ້ສຳລັບການປ່ອຍຄາບອນ, ຊຶ່ງການວາງແຜນ ການກຳນົດຂີດຈຳກັດ-ແລະ-

ຕາຕະລາງ ທີ 2 **ເປົ້າໝາຍການຫຼຸດຜ່ອນການປ່ອຍອາຍຄາບອນ ທີ່ຕ່າງກັນຕາມຂີດຄວາມບຸກຍືນ**

ເປົ້າໝາຍຫຼຸດຜ່ອນອາຍແກດເຮືອນແກ້ວ ແລະ ຂໍ້ສະເໜີ	ໄລຍະສັ້ນ (2012-2015)	ໄລຍະກາງ (2020)	ໄລຍະຍາວ (2050)
HDR ວິທີການຫຼຸດ ຜ່ອນອາຍຄາບອນທີ່ຍືນຍົງ (ສຳລັບປະເທດ ທີ່ພັດທະນາແລ້ວ)	ຈຸດສູງສຸດຂອງການປ່ອຍອາກາໂບນິກ	30%	ຢ່າງໜ້ອຍ 80%
ປະເທດທີ່ກຳນົດ			
	ເປົ້າໝາຍຕາມ ອະນຸສັນຍາກຽວໂຕ[a] (2008-2012)	ພາຍຫຼັງອະນຸສັນຍາກຽວໂຕ	
ສະຫະພາບເອີລົບ[b]	8%	20% (ປະເທດໃດ ໜຶ່ງ) ຫຼື 30% (ຕາມສິນທິສັນ ຍາ/ຂໍ້ຕົກລົງສາກົນ)	60-80% (ຕາມສິນທິ ສັນຍາ /ຂໍ້ຕົກລົງສາກົນ)
ຟລັ່ງ	0%	–	75%
ເຢຍລະມັນ	21%	40%	–
ອິຕາລີ	6.5%	–	–
ສະວີເດັນ	4% ເພີ່ມຂຶ້ນ (4% ເປັນເປົ້າໝາຍຫຼຸດ ຜ່ອນແຫ່ງຊາດ) (ພາຍໃນ 2010)	25%	–
ອັງກິດ	12.5% (20% ເປົ້າ ໝາຍ ແຫ່ງຊາດ)	26–32%	60%
ອິດສະຕຣາລີ[c]	8% ເພີ່ມຂຶ້ນ	–	–
ການາດາ	6%	20% ສຳພັນກັບປີ 2006	60%-70% ສຳພັນກັບປີ 2006
ຍີ່ປຸ່ນ	6%	–	50%
ນໍເວ	1% ເພີ່ມຂຶ້ນ (10% ເປົ້າໝາຍແຫ່ງຊາດ)	30% (ພາຍໃນປີ 2030)	100%
ສະຫະລັດອາເມລິກາ[c]	7%	–	–
ບາງລັດຂອງສະຫະລັດອາເມລິກາ-ຂໍ້ສະເໜີລະດັບຫຼຸດຜ່ອນ			
ລັດອາລີໂຊນາ	–	ລະດັບ ປີ2000	50% ຕ່ຳກວ່າລະດັບປີ 2000 (ພາຍໃນປີ 2040)
ລັດຄາລິຟໍເນຍ	ລະດັບປີ 2000 (ພາຍໃນປີ 2010)	ລະດັບປີ 1990	80% ຕ່ຳກວ່າ ລະດັບປີ 1990
ລັດນິວເມັກຊິກໂກ	ລະດັບປີ 2000 (ພາຍໃນປີ 2012)	10% ຕ່ຳກວ່າລະດັບປີ 2000	75% ຕ່ຳກວ່າລະດັບປີ 2000
ນິວຢອກ	5% ຕ່ຳກວ່າລະດັບປີ 1990 (ພາຍໃນປີ 2010)	10% ຕ່ຳກວ່າລະດັບປີ 1990	–
ການລິເລີ່ມຫຼຸດຜ່ອນອາຍແກັດເຮືອນແກ້ວ ພາກພື້ນ[d]	ຮັກສາລະດັບໃຫ້ໝັ້ນຄົງ ຢູ່ໃນລະດັບປີ 2002-2004 (ພາຍໃນ ປີ 2015)	10% ຕ່ຳກວ່າລະດັບປີ 2002-2004 (ພາຍ ໃນປີ 2019)	–
ຂໍ້ສະເໜີທີ່ຄັດເລືອກ ທີ່ຖືກສະເໜີໂດຍສະພາສູງຂອງສະຫະລັດອາເມລິກາ			
ກົດໝາຍວ່າດ້ວຍປົກປ້ອງດິນຟ້າອາກາດ ແລະ ນະວັດຕະກຳໃໝ່	ລະດັບປີ 2004 (ພາຍໃນປີ 2012)	ລະດັບປີ 1990	60% ຕ່ຳກວ່າ ລະດັບປີ 1990
ກົດໝາຍວ່າດ້ວຍການຫຼຸດຜ່ອນ ມົນລະພາວະທີ່ສົ່ງຜົນໃຫ້ໂລກຮ້ອນ	–	2% ຕໍ່ປີຈາກການຫຼຸດຜ່ອນ ຈາກປີ 2010-2020	80% ຕ່ຳກວ່າລະດັບໃນປີ 1990
ກົດໝາຍວ່າດ້ວຍການປົກປ້ອງດິນ ຟ້າອາກາດ	ລະດັບປີ 2006 (ພາຍໃນ 2012)	ລະດັບປີ 1990	70% ຕ່ຳກວ່າ ລະດັບປີ 1990
ກົດໝາຍວ່າດ້ວຍດິນຟ້າອາກາດ ທີ່ປອດໄພ ຂອງປີ 2007	ລະດັບປີ 2009 (ພາຍໃນປີ 2010)	2% ຕໍ່ປີຈາກການຫຼຸດຜ່ອນ ຈາກປີ 2011-2020	80% ຕ່ຳກວ່າ ລະດັບປີ 1990
ຂໍ້ສະເໜີຂອງບັນດາອົງການຈັດຕັ້ງ ທີ່ບໍ່ສັງກັດລັດຖະບານສະຫະລັດອາເມລິກາ			
ການມີສ່ວນຮ່ວມໃນການປົກປ້ອງ ດິນຟ້າອາກາດຂອງສະຫະລັດອາເມລິກາ	0-5% ເພີ່ມຂຶ້ນ ຈາກລະດັບໃນປັດຈຸບັນ (ພາຍໃນປີ 2012)	0-10% ຕ່ຳກວ່າ "ລະດັບໃນປັດຈຸບັນ" (ພາຍໃນປີ 2017)	60-80% ຕ່ຳກວ່າ "ລະດັບໃນປັດຈຸບັນ"

a. ເປົ້າໝາຍຫຼຸດຜ່ອນຕາມອະນຸສັນຍາກຽວໂຕ ໂດຍທີ່ວໄປແມ່ນບໍ່ກົງກັບລະດັບການປ່ອຍອາຍຄາບອນໃນປີ 1990 ສຳລັບແຕ່ລະປະເທດ ພາຍໃນປີ 2008-2012, ຍົກເວັ້ນສຳລັບບາງ ອາຍພິດເຮືອນແກ້ວ (ຮາຍໂດຣ ຟລູໂອຄາບອນ, ເປີ ຟລູໂອຄາບອນ ແລະ ຊຸນຟາດ ເຮັກຊາ ຟລູໂອຄາບອນ) ບາງປະເທດສາມາດເລືອກເອົາລະດັບ ໃນປີ 1995 ເປັນພື້ນຖານກຳນົດຂອງເຂົາເຈົ້າ.

b. ອະນຸສັນຍາກຽວໂຕ ມີແຕ່ອ້າງອີງໃສ່ 15 ປະເທດ ເທົ່ານັ້ນ ຊຶ່ງເປັນສະມາຊິກຂອງສະຫະພາບເອີລົບໃນເວລານັ້ນ ຊຶ່ງເປັນເວລາທີ່ສະຫະພາບເອີລົບລົງນາມອະນຸສັນຍາ ດັ່ງກ່າວ ໃນປີ 1997.

c. ລົງນາມ ໃນອະນຸສັນຍາ ແຕ່ບໍ່ໄດ້ໃຫ້ສັດຕະຍາບັນ, ສະນັ້ນຈຶ່ງບໍ່ມີພັນທະຕ້ອງປະຕິບັດຕາມ.

d. ບັນດາລັດທີ່ເຂົ້າຮ່ວມລວມມີ: ລັດຄອນເນັກຕິກັດ, ເດລາແວ, ແມນ, ເມລີແລນ, ແມດຊາຈູແຊດ, ນິວແຮມເຊັຍ, ນິວເจີຊີ, ນິວຢອກ, ໂລດໄອແລນ ແລະ ເວີເມີ.

ແຫຼ່ງຂໍ້ມູນ: ສະພາສະຫະພາບເອີລົບປີ 2007; ລັດຖະບານປະເທດອິສະຕາລີ ປີ 2007; ລັດຖະບານຂອງລັດ ຄາລິຟໍເນັຍປີ 2005; ລັດຖະບານ ການາດາ ປີ 2005; ລັດຖະບານຟລັ່ງ ປີ 2007; ລັດຖະບານເຢຍລະມັນ ປີ 2007; ລັດຖະບານນໍເວ ປີ 2007; ລັດຖະບານສະວີເດັນ ປີ 2006; ສູນ Pew Center ກ່ຽວກັບການປ່ຽນແປງ ດິນຟ້າອາກາດ ປີ 2007c; RGGI ປີ 2005; ໜັງສືພິມ ເຈເປນທາມສ 2007; UNFCCC 1998; USCAP 2007.

ຂາຍ ຈະມີພາລະບົດບາດອັນສຳຄັນໃນການຫຼຸດ ຜ່ອນການປ່ອຍອາຍຄາບອນ.

ແຜນການຊື້ຂາຍການປ່ອຍ ອາຍຄາບອນ ຂອງສະຫະພາບເອີລົບ (The European Union's Emissions Trading Scheme ETS) ແມ່ນເປັນແຜນການກຳນົດຂີດຈຳກັດ-

ແລະ-ຂາຍທີ່ໃຫຍ່ທີ່ສຸດໃນໂລກ. ໃນຂະນະທີ່ໄດ້ປະສົບຜົນສຳເລັດຫຼາຍດ້ານ, ມັນຍັງມີບັນຫາໜັກໜ່ວງ ທີ່ຕ້ອງແກ້ໄຂ. ຂີດຈຳກັດໃນການປ່ອຍອາຍຄາບອນ ແມ່ນຖືກກຳນົດໄວ້ສູງໂພດ, ທັງນີ້ກໍ່ຍ້ອນຄວາມລົ້ມເຫຼວ ຂອງບັນດາລັດສະມາຊິກຂອງສະຫະພາບເອີລົບ ໃນການຕ້ານກັບຄວາມພະຍາມໃນການລ້ອບບີ້ ຫຼື ໂນ້ມນ່ຽວ ຂອງພາກສ່ວນທີ່ມີອຳນາດ. ບາງຂະແໜງການອຸດສະຫະກຳ-ສັງເກດເຫັນໄດ້ຈະແจ້ງ-ຂະແໜງພະລັງງານ ໄດ້ມີລາຍຮັບພິເສດຢ່າງບໍ່ຄາດຫວັງ ໃນການໃຊ້ຈ່າຍຂອງພາກລັດ. ແລະ ມີພຽງແຕ່ສ່ວນນ້ອຍໜ້ອຍດຽວເທົ່ານັ້ນ ຂອງການອະນຸຍາດຕາມ ETS -ໜ້ອຍກວ່າ 10% ໃນໄລຍະທີສອງ-ສາມາດນຳມາປະມູນໄດ້ຂາຍໄດ້, ເຮັດໃຫ້ລັດຖະບານຂາດລາຍໄດ້ ເນື່ອງຈາກການປະຕິຮູບ ພາສີອາກອນ ແລະ ເປີດປະຕູສູ່ການບິດເບືອນປອມແປງຕົວເລກ ແລະ ເຮັດໃຫ້ມີການນຳໃຊ້ຢ່າງບໍ່ມີປະສິດທິຜົນ. ການກຳນົດ ແລະ ແບ່ງປັນໂຄຕ້າຕາມ ETS ໃນຂອບເຂດທີ່ເປັນພັນທະ ຂອງສະຫະພາບເອີລົບ ໃນລະຫວ່າງ 20-30% ໃນການຫຼຸດຜ່ອນການປ່ອຍ ອາຍຄາບອນ ພາຍໃນປີ 2020 ອາດຈະຊ່ວຍໃຫ້ ມີການຈັດສັນຕະຫຼາດອາຍຄາບອນ ໃຫ້ເຂົ້າກັບເປົ້າໝາຍການຫຼຸດຜ່ອນອາຍຄາບອນ.

ຕະຫຼາດອາຍຄາບອນ ແມ່ນເງື່ອນໄຂຈຳເປັນສຳລັບການປ່ຽນແປງ ໄປສູ່ເສດຖະກິດ ທີ່ປ່ອຍອາຍຄາບອນໃນລະດັບຕ່ຳ. ແຕ່ການມີຕະຫຼາດດັ່ງກ່າວກໍ່ບໍ່ແມ່ນສິ່ງທີ່ເປັນເງື່ອນໄຂພຽງພໍ. ບັນດາລັດຖະບານ ຕ່າງມີພາລະບົດບາດອັນສຳຄັນໃນການວາງມາດຕະຖານ, ມາດຕະການ ແລະ ຊຸກຍູ້ການຄົ້ນຄວ້າ, ພັດທະນາ ແລະ ຈັດຕັ້ງປະຕິບັດເພື່ອຫຼຸດຜ່ອນອາຍຄາບອນ.

ຕົວຢ່າງໃນແງ່ບວກແມ່ນມີຫຼວງຫຼາຍ. ການນຳໃຊ້ພະລັງງານທົດແທນ ແມ່ນໄດ້ຮັບການຂະຫຍາຍຕົວ ໃນພາກສ່ວນໃດໜຶ່ງ ຍ້ອນວ່າ ມີການສົ່ງເສີມໂດຍຜ່ານລະບຽບກົດໝາຍ. ຢູ່ປະເທດເຢຍລະມັນ, ພາສີ “Feed in ຫຼື ຕອບສະໜອງ” ໄດ້ເພີ່ມທະວີສ່ວນ ແບ່ງຂອງການສະໜອງພະລັງງານທົດແທນ ໃນລະບົບສາຍສົ່ງ ໄຟຟ້າແຫ່ງຊາດ. ສະຫະລັດອາເມລິກາໄດ້ນຳໃຊ້ການຫຼຸດຜ່ອນ ພາສີອາກອນຢ່າງປະສົບຜົນສຳເລັດ ໃນການຊຸກຍູ້ການພັດທະນາ ອຸດສາຫະກຳ ພະລັງງານລົມ. ເຖິງຢ່າງໃດກໍ່ຕາມ, ໃນຂະນະທີ່ການນຳໃຊ້ພະລັງງານທົດແທນ ເຕີບໃຫຍ່ຂະຫຍາຍຕົວ ແລະ ຖືກຊຸກຍູ້ສົ່ງເສີມ, ຄວາມຄືບໜ້າໂດຍທົ່ວໄປແລ້ວ ແມ່ນຍັງຫ່າງໄກຈາກສິ່ງທີ່ເປັນໄປໄດ້ຢູ່- ແລະ ຍັງຫ່າງໄກຈາກສິ່ງທີ່ຮຽກຮ້ອງໃຫ້ມີການຫຼຸດຜ່ອນ ສຳລັບການປ່ຽນແປງ ດິນຟ້າອາກາດ. ບັນດາປະເທດ OECD ມີທ່າແຮງ ໃນການຊຸກຍູ້ສ່ວນແບ່ງ ໃນການນຳໃຊ້ພະລັງງານທົດແທນ ໃນການຜະລິດພະລັງງານຂອງເຂົາເຈົ້າ ຢ່າງໜ້ອຍ 20%.

ການສົ່ງເສີມ ການນຳໃຊ້ພະລັງງານ ຢ່າງມີປະສິດທິພາບ ຈະເຮັດໃຫ້ມີທ່າແຮງ ເຮັດໃຫ້ມີ “ຜົນໄດ້ຮັບສອງເທົ່າ”. ມັນຈະຊ່ວຍໃຫ້ຫຼຸດຜ່ອນການປ່ອຍອາຍຄາບອນ ແລະ ຫຼຸດຜ່ອນການສິ້ນເປືອງພະລັງງານ ຖ້າຫາກว່າເຄື່ອງໃຊ້ໄຟຟ້າທັງໝົດ ທີ່ໃຊ້ຢູ່ໃນບັນດາປະເທດ OECD ໃນປີ 2005 ໄດ້ຖືກຜະລິດຖືກຕ້ອງຕາມມາດຕະຖານການນຳໃຊ້ພະລັງງານຢ່າງມີປະສິດທິພາບ, ມັນຈະຊ່ວຍໃຫ້ຫຼຸດຜ່ອນການປ່ອຍ ອາຍຄາບອນ ປະມານ 322 Mt CO_2 ພາຍໃນປີ 2010-ທຽມເທົ່າກັບການນຳເອົາລົດຍົນປະມານ 100 ລ້ານຄັນອອກຈາກຖະໜົນ.ການຊົມໃຊ້ເຄື່ອງໃຊ້ໄຟຟ້າ ໃນຄົວເຮືອນອາດຈະຫຼຸດລົງ ໜຶ່ງສ່ວນສາມ.

ການຄົມມະນາຄົມສ່ວນບຸກຄົນ ກໍ່ເປັນຂົງເຂດໜຶ່ງ ທີ່ການວາງຂໍ້ກຳນົດກົດລະບຽບ ເພື່ອກຳ

ນິດມາດຕະຖານ ກໍ່ຈະສາມາດເຮັດໃຫ້ມີຜົນໄດ້ຮັບສອງເທົ່າຄືກັນ. ຂະແໜງຍານພະຫານະຄິດໄລ່ແລ້ວປະມານ 30% ຂອງອາຍພິດເຮືອນແກ້ວໃນບັນດາປະເທດທີ່ພັດທະນາແລ້ວ ແລະ ອັດຕາສ່ວນນີ້ກໍ່ນັບມື້ນັບເພີ່ມຂຶ້ນ. ການກຳນົດມາດຕະຖານ ຖືເປັນສິ່ງທີ່ຈຳເປັນຍ້ອນວ່າ ມັນສາມາດມີອິດທິພົນ ຕໍ່ການນຳໃຊ້ຍານພະຫານະຢ່າງມີປະສິດທິພາບ, ຫຼື ການກຳນົດຂອບເຂດອັດຕາການປະຢັດນ້ຳມັນ ກາລອນ (gallon) ຕໍ່ໄມ (mile) (ແລະ ສະນັ້ນຈະຊ່ວຍໃຫ້ຫຼຸດຜ່ອນອາຍຄາບອນ). ໃນປະເທດສະຫະລັດອາເມລິກາ, ມາດຕະຖານການນຳໃຊ້ນ້ຳມັນເຊື້ອໄຟ ຢ່າງມີປະສິດທິພາບມີອອກມາຕະຫຼອດເວລາ. ດຽວນີ້ ມາດຕະຖານດັ່ງກ່າວ ຕ່ຳກວ່າຂອງຈີນ. ການກຳນົດມາດຕະຖານ ໂດຍ 20 ໄມ ຕໍ່ ກາລອນ ຈະຊ່ວຍໃຫ້ຫຼຸດຜ່ອນການນຳໃຊ້ ນ້ຳມັນເຊື້ອໄຟ ປະມານ 3.5 ບາແລນຕໍ່ມື້ ແລະ ຊ່ວຍໃຫ້ຫຼຸດຜ່ອນການປ່ອຍ ອາຍຄາບອນ 400 Mt ຕໍ່ປີ - ຫຼາຍກວ່າຈຳນວນອາຍຄາບອນທີ່ປ່ອຍອອກຕໍ່ປີ ຂອງປະເທດໄທ. ຄວາມພະຍາຍາມ ທີ່ຈະຍົກມາດຕະຖານການນຳໃຊ້ພະລັງງານຢ່າງມີປະສິດທິພາບ ສ່ວນຫຼາຍຈະຖືກຕອບໂຕ້ ຍ້ອນມີການປຽບທຽບສ່ວນໄດ້ສ່ວນເສຍ. ໃນທະວີບເອີລົບ, ຕົວຢ່າງ, ສະຫະພາບເອີລົບ ສະເໜີໃຫ້ເພີ່ມມາດຕະຖານດັ່ງກ່າວ ແຕ່ກໍ່ຖືກຕອບໂຕ້ ຈາກກຸ່ມຜູ້ຜະລິດລົດຍົນ. ປະເທດສະມາຊິກ ຫຼາຍໆປະເທດ ປະຕິເສດມາດຕະຖານດັ່ງກ່າວ, ນີ້ເປັນການຕັ້ງຄຳຖາມຕໍ່ຄວາມສາມາດຂອງສະຫະພາບເອີລົບ ໃນການກຳນົດເປົ້າໝາຍການປ່ຽນແປງດິນຟ້າອາກາດ ເຂົ້າໃນນະ�โยบายທີ່ແທ້ຈິງ.

ການຄ້າສາກົນ ກໍ່ສາມາດມີພາລະບົດບາດຢ່າງໃຫຍ່ຫຼວງກວ່າເກົ່າ ໃນການຂະຫຍາຍຕະຫຼາດສຳລັບພະລັງງານທາງເລືອກ ຫຼື ພະລັງງານທົດແທນ. ປະເທດຍີ່ປຸ່ນ ມີປະສິດທິພາບຫຼາຍກວ່າ ທັງສະຫະພາບເອີລົບ ແລະ ສະຫະລັດອາເມລິກາ ໃນການຜະລິດເອຕາໂນນ (ethanol). ນອກຈາກນີ້, ເອຕາໂນນ ທີ່ຜະລິດຈາກນ້ຳຕານຈະມີປະສິດທິພາບຫຼາຍ ກວ່າໃນການຫຼຸດຜ່ອນອາຍຄາບອນ. ບັນຫາແມ່ນວ່າ ການນຳເຂົ້າເອຕາໂນນ ຈາກຍີ່ປຸ່ນ ແມ່ນຖືກຈຳກັດດ້ວຍພາສີອາກອນອັດຕາສູງ. ການຍົກເລີກ ພາສີອາກອນນີ້ຈະຊ່ວຍໃຫ້ມີຜົນໄດ້ຮັບບໍ່ສະ ເພາະແຕ່ສຳລັບປະເທດ ຍີ່ປຸ່ນເອງ ແຕ່ຍັງຊ່ວຍ ໃຫ້ມີການຫຼຸດຜ່ອນການປ່ຽນແປງດິນຟ້າອາກາດ.

ການພັດທະນາຢ່າງວ່ອງໄວ ແລະ ການພັດທະນາເຕັກໂນໂລຊີ ການປ່ອຍອາຍຄາບອນຕ່ຳ ແມ່ນມີຄວາມສຳຄັນຫຼາຍ ຕໍ່ກັບການບັນເທົາການປ່ຽນແປງດິນຟ້າອາກາດ. ການເລືອກເອົາເຕັກໂນໂລຊີທີ່ດີທີ່ສຸດ ແມ່ນເລື່ອງທີ່ເປັນການສ່ຽງ. ທາງທີ່ດີທີ່ສຸດ ລັດຖະບານອາດຈະເລືອກການນຳໃຊ້ແບບປະສົມ. ເຖິງຢ່າງໃດກໍ່ຕາມ, ການປະເຊີນໜ້າກັບໄພຂົ່ມຂູ່ໃນລະດັບປະເທດ ແລະ ສາກົນກ່ຽວກັບຂອບເຂດ ຂອງການປ່ຽນແປງ ດິນຟ້າອາກາດ, ເຮັດໃຫ້ລັດຖະບານ ບໍ່ສາມາດຈະຢືນລໍຖ້າໃຫ້ຕະຫຼາດນຳສະເໜີເຕັກໂນໂລຊີ ທີ່ດີທີ່ສຸດ. ນະ�โยบายพะลังงาน ກໍ່ເປັນຂົງເຂດໜຶ່ງ ທີ່ມີການລົງທຶນເບື້ອງຕົ້ນ, ຂອບເຂດກຳນົດເວລາ, ແລະ ຄວາມບໍ່ແນ່ນອນ ປະກອບກັບຄວາມຮັບປະກັນຂອງຕະຫຼາດ ທີ່ຈະຮັບປະກັນການສິ່ງເຕັກໂນໂລຊີ ທີ່ຖືກຕ້ອງຕາມເງື່ອນໄຂ ໃນການຈຳກັດການປ່ອຍອາຍຄາບອນ. ໃນມໍ່ໆນີ້, ການແກ້ໄຂບັນຫາ ທາງດ້ານເຕັກໂນໂລຊີຫຼາຍປະການ ໄດ້ປະຕິບັດຕາມນະ�โยบาย ຂອງລັດຖະບານ: ໂຄງການແມນຫັດຕັນ ແລະ ໂຄງການອາວະກາດ ຂອງສະຫະລັດອາເມລິກາ ກໍ່ເປັນຕົວຢ່າງທີ່ດີ.

ການເກັບ ແລະ ຮັກສາອາຍຄາບອນ

ຮູບພາບທີ 8 **ການນຳໃຊ້ຖ່ານຫີນ ທີ່ເພີ່ມປະລິມານການປ່ອຍ CO_2 ໃນຂະແໜງຜະລິດໄຟຟ້າ**



ພາຍເຫດ: ການປ່ອຍອາຍຄາບອນ ໃນປີ 2030 ອ້າງອີງຕາມສະຖານະການ ອ້າງອີງ IEA ຕາມທີ່ກຳນົດໄວ້ໃນ IEA 2006c.

ແຫຼ່ງຂໍ້ມູນ: IEA 2006c

(Carbon Capture and Storage - CCS) ກໍ່ແມ່ນການແກ້ໄຂບັນຫາ ທາງດ້ານເຕັກໂນໂລຊີ. ຖ່ານຫີນ ແມ່ນແຫຼ່ງສຳລັບຜະລິດພະລັງງານໄຟຟ້າໃນທົ່ວໂລກ. ມັນໄດ້ກາຍເປັນພະລັງງານສຳຮອງ ຢ່າງກວ້າງຂວາງ. ຍ້ອນການເພີ່ມລາຄາຂອງທັງນ້ຳມັນເຊື້ອໄຟ ແລະ ອາຍແກ້ສທຳມະຊາດ, ຈຶ່ງເປັນເຫດຜົນວ່າ ເປັນຫຍັງຖ່ານຫີນຍັງຖືກນຳໃຊ້ຢ່າງຫຼວງຫຼາຍໃນປັດຈຸບັນ ແລະ ຖືກວາງແຜນໃນການນຳໃຊ້ ໃນບັນດາປະເທດທີ່ປ່ອຍອາຍຄາບອນໃຫຍ່ໆ ເຊັ່ນ ສ ປ ຈີນ, ອິນເດຍ, ແລະ ສະຫະລັດອາເມລິກາ (ຮູບພາບ 8). CCS ມີຄວາມສຳຄັນ ຍ້ອນວ່າ ມັນສາມາດຊ່ວຍໃຫ້ຮັກສາຄຳໝັ້ນສັນຍາ ຂອງຂະແໜງຜະລິດ ພະລັງງານ ໂດຍໃຫ້ຖ່ານຫີນ ເຮັດໃຫ້ການປ່ອຍອາຍຄາບອນ ໃຫ້ຢູ່ໃນລະດັບເກືອບເທົ່າກັບສູນ. ກັບໂຄງການການລົງທຶນທີ່ເປັນຮູບປະທຳ ໂດຍພາກລັດ-ເອກະຊົນ, ພ້ອມກັບການກຳນົດລາຄາອາຍກາກໂບນິກ, ເຕັກໂນໂລຊີ CCS ອາດຈະສາມາດພັດທະນາ ແລະ ນຳໃຊ້ໄດ້ຢ່າງໄວວາກວ່ານີ້. ທັງສະຫະພາບເອີລົບ ແລະ ສະຫະລັດອາເມລິກາ ຕ່າງກໍ່ມີຄວາມສາມາດ ໃນການຕິດຕັ້ງຢ່າງໜ້ອຍ 30 ໂຮງງານຜະລິດໄຟຟ້າ ຈາກຖ່ານຫີນທີ່ນຳໃຊ້ເຕັກໂນໂລຊີດັ່ງກ່າວ ພາຍໃນປີ 2015.

ການນຳໃຊ້ພະລັງງານ ຢ່າງມີປະສິດທິພາບ ທີ່ຢູ່ໃນລະດັບຕ່ຳ ໃນບັນດາປະເທດກຳລັງ ພັດທະນາ ໃນປັດຈຸບັນ ເປັນໄພຂົ່ມຂູ່ຕໍ່ຄວາມພະຍາຍາມ ໃນການຫຼຸດຜ່ອນການປ່ຽນແປງ ດິນຟ້າອາກາດ. ການເພີ່ມລະດັບການນຳໃຊ້ພະລັງງານທີ່ມີປະສິດທິພາບ ໂດຍຜ່ານການຮ່ວມມື ຂອງສາກົນ ອາດຈະເຮັດໃຫ້ມີການປ່ຽນແປງໄພຂົ່ມຂູ່ດັ່ງກ່າວ ໄປສູ່ໂອກາດ, ສ້າງຜົນໄດ້ຮັບ ທີ່ໃຫຍ່ຫຼວງໃຫ້ແກ່ການພັດທະນາມະນຸດຊາດ ໃນການດຳເນີນ ການຜະລິດ. ພວກເຮົາຈະສະແດງໃຫ້ເຫັນ ໂດຍການຕີລາຄາຜົນກະທົບ ຂອງການປ່ອຍ ອາຍຄາບອນ ທີ່ເຂົ້າໃນໂຄງການນຳໃຊ້ເຕັກໂນໂລຊີ ຖ່າຍໂອນ ສຳລັບຂະແໜງຖ່ານຫີນ ຢູ່ ສ ປ ຈີນ. ສຳລັບ ສ ປ ຈີນ ຜູ້ດຽວ, ການປ່ອຍ ອາຍຄາບອນ ໃນປີ 2030 ອາດຈະມີເຖິງ 1.8 Gt CO_2 ຕ່ຳກວ່າ ລະດັບທີ່ຄາດຄະເນໄວ້ ໂດຍອົງການພະລັງງານສາກົນ (the International Energy Agency) (ຮູບສະແດງ 9). ຕົວເລກດັ່ງກ່າວນັ້ນ ແມ່ນທຽບເທົ່າປະມານ ເຄິ່ງໜຶ່ງ ຂອງການປ່ອຍ ອາຍຄາບອນ ທັງໝົດ ຂອງສະຫະພາບເອີລົບ. ປະໂຫຍດຈາກການນຳໃຊ້ພະລັງງານທີ່ມີປະສິດທິພາບກໍ່ຈະມີຄວາມໝັ້ນຄົງໃນຂົງເຂດອື່ນຄືກັນ.

ການສົ່ງເສີມ ການນຳໃຊ້ພະລັງງານ ຢ່າງມີປະສິດທິພາບ ແມ່ນສະຖານະການຕ່າງຝ່າຍຕ່າງ

ໄດ້ຮັບຜົນ ຄື ຊະນະ-ຊະນະ. ບັນດາປະເທດທີ່ກຳລັງພັດທະນາ ມີຈຸດຍືນທີ່ຈະໄດ້ປະໂຫຍດ ຈາກການປັບປຸງ ການນຳໃຊ້ພະລັງງານ ຢ່າງມີປະສິດທິພາບ ແລະ ມີລະດັບການສ້າງມົນລະພິດ ຕໍ່ສິ່ງແວດລ້ອມໃນລະດັບຕ່ຳ. ທຸກໆປະເທດມີຈຸດຍືນທີ່ຈະໄດ້ປະໂຫຍດ ຈາກການຫຼຸດຜ່ອນ ອາຍຄາບອນ. ແຕ່ໜ້າເສຍດາຍ, ໂລກໃນປັດຈຸບັນນີ້ຍັງຂາດກົນໄກທີ່ສາມາດປະຕິບັດໄດ້ ຢ່າງມີປະສິດທິພາບ ເພື່ອເຮັດໃຫ້ພວກເຮົາບັນລຸ ສະຖານະການ ຊະນະ-ຊະນະ ນີ້ໄດ້. ພວກເຮົາ ສະເໜີ ການພັດທະນາ, ຄວາມຄ່ອງຕົວຂອງການຫຼຸດຜ່ອນການປ່ຽນແປງ ດິນຟ້າອາກາດ (Climate Change Mitigation Facility CCMF) ພາຍໃຕ້ກົນໄກຫຼັງປີ 2012 ຂອງອະນຸສັນຍາ ກຽວໂຕ ເພື່ອຫຼຸດຊ່ອງຫว่າງອັນນີ້. CCMF ຈະຊ່ວຍລະດົມທຶນ ປະມານ 25-50 ຕື້ໂດລາ ສະຫະລັດອາເມລິກາ ຕໍ່ປີ ເພື່ອຊຸກຍູ້ການລົງທຶນ ການຜະລິດພະລັງງານ ທີ່ປ່ອຍອາຍ ຄາບອນ ໃນລະດັບຕ່ຳ ໃນປະເທດທີ່ກຳລັງພັດທະນາ. ການ ຊຸກຍູ້ສິ່ງເສີມທາງດ້ານການເງິນ ຈະຊ່ວຍໃຫ້ມີ ການເຊື່ອມຕໍ່ສະຖານະການ ຂອງປະເທດໃດໜຶ່ງ, ກັບທຶນຊ່ວຍເຫຼືອ, ການຊຸກຍູ້ ແລະ ການຮັບປະ ກັນຄວາມສ່ຽງ. ການຊຸກຍູ້ອາດຈະຢູ່ໃນຮູບ ຂອງ ໂຄງການຊ່ວຍເຫຼືອ. ມັນຈະກວມເອົາຄ່າສົ້ນເປືອງ ຄ່າໃຊ້ຈ່າຍທີ່ເພີ່ມຂຶ້ນ ໃນການບັນລຸເປົ້າໝາຍ ການຫຼຸດຜ່ອນການປ່ອຍອາຍ ຄາບອນ ທີ່ກຳນົດ ໄວ້ ໂດຍການກຳນົດຂອບເຂດໃນນະໂຍບາຍ ພະລັງງານ ຂອງປະເທດຕົນເອງ ໃນທຸກຂົງເຂດ ເຊັ່ນ ນະໂຍບາຍໃນການນຳໃຊ້ພະລັງງານກັບ ຄືນໃໝ່ ຫຼື ພະລັງງານທົດແທນ, ນະໂຍບາຍຖ່ານ ຫີນສະອາດ ແລະ ການສິ່ງເສີມມາດຕະຖານ ທີ່ມີ ປະສິດທິພາບ ສຳລັບການຄົມມະນາຄົມ ແລະ ການກໍ່ສ້າງ.

ການຕັດໄມ້ທຳລາຍປ່າ ກໍ່ເປັນຂົງເຂດໜຶ່ງ ທີ່ຮຽກຮ້ອງການຮ່ວມມືສາກົນ. ປັດຈຸບັນນີ້, ໂລກ ກຳລັງສູນເສຍຊັບສິນທີ່ໃຊ້ດູດເກັບ ອາຍຄາບອນ ຢູ່ໃນບັນດາປະເທດເຂດປ່າຝົນ ໃນອັດຕາສ່ວນ ນ້ອຍໜຶ່ງຂອງລາຄາຕະລາດ ໂດຍສະເພາະທຽບ ກັບ ອາຍຄາບອນທີ່ຢູ່ໃນລາຄາຕ່ຳ. ຢູ່ປະເທດ ອິນໂດເນເຊຍ, ທຸກໆ 1 ໂດລາສະຫະລັດ ອາເມລິກາ ທີ່ມາຈາກການຕັດໄມ້ທຳລາຍປ່າ ເພື່ອປູກຕົ້ນ ປາມນ້ຳມັນ ອາດຈະເຮັດໃຫ້ສູນເສຍ 50 - 100 ໂດລາສະຫະລັດ ຖ້າຫາກว่າ ຄວາມສາ ມາດໃນການຫຼຸດຜ່ອນ ອາຍຄາບອນ ອາດຈະຊື້ ຂາຍໄດ້ ຕາມກົນໄກ ETS ຂອງສະຫະພາບ ເອີລົບ. ບົນພື້ນຖານການລົ້ມເຫຼວ ຂອງຕະຫຼາດ ແບບນີ້, ການສູນເສຍຂອງປ່າຝົນ ສະແດງໃຫ້ເຫັນ ການທຳລາຍ ແຫຼ່ງຊັບພະຍາກອນໄປເທື່ອລະ ໜ້ອຍ ຊຶ່ງມີພາລະບົດບາດອັນສຳຄັນ ໃນການ ດຳລົງຊີວິດຂອງປະຊາຊົນທຸກຍາກ, ໃນການປົກ ປັກຮັກສາລະບົບນິເວດ ແລະ ຊີວະນາໆພັນຢ່າງ ຍືນຍົງ.

ຍັງມີຂອບເຂດ ໃນການຊອກຄົ້ນທ່າແຮງຂອງ ຕະຫຼາດ ອາຍຄາບອນ ໃນການສ້າງນະໂຍບາຍ ຊຸກຍູ້ຕ່າງໆ ເພື່ອຫຼີກລ້ຽງການຕັດໄມ້ ທຳລາຍປ່າ. ເວົ້າຢ່າງກວ້າງ, ການຊຸກຍູ້ທາງດ້ານ ການເງິນ ອາດຈະຊ່ວຍໃຫ້ຊຸກຍູ້ ໃຫ້ມີການຟື້ນຟູ ທົ່ງຫຍ້າ ທີ່ເສື່ອມສະພາບ, ທີ່ຈະສ້າງຜົນປະ�โຫຍດຕໍ່ການ ຫຼຸດຜ່ອນ ການປ່ຽນແປງດິນຟ້າອາກາດ, ຊ່ວຍໃຫ້ ປັບຕົວໄດ້ ແລະ ຊຸກຍູ້ຄວາມຍືນຍົງ ຂອງສິ່ງແວດ ລ້ອມ.

ການປັບຕົວເຂົ້າຫາສິ່ງທີ່ຫຼີກລ້ຽງບໍ່ໄດ້: ແຜນປະຕິ ບັດງານແຫ່ງຊາດ ແລະ ການຮ່ວມມືສາກົນ

ໂດຍປາດສະຈາກການຮຽກຮ້ອງ ໃຫ້ມີການຫຼຸດ ຜ່ອນ ອາຍຄາບອນ ຢ່າງຮີບດ່ວນ ໂລກບໍ່ສາມາດ

ຈະຫຼີກລ້ຽງ ການປ່ຽນແປງດິນຟ້າອາກາດທີ່ເປັນ ອັນຕະລາຍໄດ້. ແຕ່ເຖິງວ່າ ຈະມີການຫຼຸດຜ່ອນ ອາຍຄາບອນ ຢ່າງເຂັ້ມງວດກໍ່ຕາມ ກໍ່ຍັງບໍ່ທັນ ພຽງພໍກັບການຫຼີກລ້ຽງ ຜົນກະທົບທີ່ສຳຄັນ ຕໍ່ການ ພັດທະນາມະນຸດໄດ້. ໂລກໄດ້ເຮັດໃຫ້ອຸນຫະພູມ ຮ້ອນຂຶ້ນແລ້ວ ຍ້ອນว່າ ຄວາມແຮງອີ້ງຕົ້ງໄດ້ກໍ່ ຕົວຂຶ້ນໃນລະບົບດິນຟ້າອາກາດ ແລະ ການ ຊັກຊ້າໃນການເອົາໃຈໃສ່ຕໍ່ບັນຫາ ລະຫว່າງການ ຫຼຸດຜ່ອນ ແລະ ຜົນທີ່ໄດ້ຮັບ. ສຳລັບເວລາເຄິ່ງໜຶ່ງ ຂອງສັດຕະວັດທີ 21 ນີ້ ມັນຍັງບໍ່ໄດ້ມີການກຳນົດ ທາງເລືອກ ສຳລັບການປັບຕົວ ເຂົ້າສູ່ການປ່ຽນ ແປງດິນຟ້າອາກາດເທື່ອ.

ປະເທດທີ່ຮັ່ງມີ ໄດ້ຮັບຮອງຄຳສັ່ງໃນການປັບ ຕົວແລ້ວ. ຫຼາຍໆປະເທດກຳລັງລົງທຶນຢ່າງຫຼວງ ຫຼາຍໃສ່ການພັດທະນາ ພື້ນຖານໂຄງລາງທີ່ຕ້ານ ທານຕໍ່ດິນຟ້າອາກາດໄດ້. ຍຸດທະສາດແຫ່ງຊາດ ຕ່າງໆ ກຳລັງຖືກກຳນົດຂຶ້ນ ເພື່ອກະກຽມສຳລັບ ການປ່ຽນແປງລັກສະນະ ຂອງດິນຟ້າອາກາດ ແບບຮຸນແຮງ ແລະ ບໍ່ແນ່ນອນທີ່ຈະເກີດຂຶ້ນໃນ ອະນາຄົດ. ລາດຊະອານາຈັກອັງກິດໄດ້ໃຊ້ເງິນ 1.2 ຕື້ໂດລາສະຫະລັດ ຕໍ່ປີ ໃນການປ້ອງກັນໄພ ນ້ຳຖ້ວມ (ຮູບພາບທີ 10). ໃນປະເທດ ເນເທີແລນ, ປະຊາຊົນກຳລັງລົງທຶນໃສ່ເຮືອນ ທີ່ ສາມາດລອຍຢູ່ໜ້ານ້ຳໄດ້. ອຸດສາຫະກຳ ສະກີ ຂອງສະວິສ ກໍ່ກຳລັງລົງທຶນໃສ່ການຄົ້ນຄວ້າເຄື່ອງ ສ້າງຫິມະປອມ.

ບັນດາປະເທດທີ່ກຳລັງພັດທະນາ ປະສົບບັນ ຫາທີ່ທ້າທາຍທີ່ສຸດໃນການປັບຕົວ. ສິ່ງທ້າທາຍ ເຫຼົ່ານັ້ນຕ້ອງໄດ້ຮັບການແກ້ໄຂ ໂດຍຜ່ານການ ດຳເນີນງານຂອງລັດຖະບານ ທີ່ມີຂອດຈຳກັດ ທາງດ້ານການເງິນທີ່ໜັກໜ່ວງ, ແລະ ໂດຍ ປະຊາຊົນທີ່ທຸກຍາກດ້ວຍໂຕຂອງເຂົາເຈົ້າເອງ. ໃນເຂດແຫຼມອະຟາລິກາ, "ການປັບຕົວ" ໝາຍ

ຮູບພາບທີ 9 ການເພີ່ມສະມັດທະພາບໃນການນຳໃຊ້ຖ່ານຫີນ ອາດຈະຫຼຸດຜ່ອນ ການປ່ອຍອາຍຄາບອນ



a. ບົນພື້ນຖານ ນະໂຍບາຍທາງເລືອກ IEA ແຕ່ສັນນິຖານว່າ 45% ຂອງລະດັບການນຳໃຊ້ ທີ່ມີປະສິດທິພາບ ໃນໂຮງງານຜະລິດກະແສ ໄຟຟ້າທີ່ນຳໃຊ້ ຖ່ານຫີນ ແລະ 20% ການເກັບ ແລະ ຮັກສາອາຍຄາບອນ Carbon Capture and Storage (CCS) ສຳລັບໂຮງງານ ໃໝ່ (2015-2030)

ແຫຼ່ງຂໍ້ມູນ: Watson 2007.

ຄວາມว່າ ແມ່ຍິງ ແລະ ເດັກຍິງຕ້ອງໄດ້ຍ່າງໄປ ຕັກນ້ຳໄກກວ່າເກົ່າ. ໃນເຂດແມ່ນ້ຳ ສາມລ່ຽມ ແມ່ນ້ຳ ຄົງຄາ, ປະຊາຊົນຕັ້ງເຮືອນຕູບດ້ວຍໄມ້ໄຜ່ ເພື່ອກັນນ້ຳຖ້ວມ. ແລະ ໃນເຂດສາມລ່ຽມ ປາກແມ່ນ້ຳ ຂອງ ປະຊາຊົນກຳລັງປູກປ່າຊາຍ ເລນເພື່ອປ້ອງກັນຄື້ນສູງທີ່ເກີດຈາກພະຍຸ, ແມ່ຍິງ ແລະ ເດັກນ້ອຍກໍ່ກຳລັງຖືກສອນໃຫ້ລອຍນ້ຳເປັນ.

ຄວາມບໍ່ສະເໝີພາບໃນຄວາມສາມາດ ທີ່ຈະ ປັບຕົວໃຫ້ເຂົ້າກັບ ການປ່ຽນແປງ ດິນຟ້າອາກາດ ໄດ້ກາຍເປັນສິ່ງທີ່ເຫັນໄດ້ຢ່າງຈະແจ້ງ ນັບມື້ນັບ ເພີ່ມທະວີ. ສຳລັບສ່ວນໜຶ່ງ ຂອງໂລກ - ສ່ວນທີ່ ຮັ່ງມີກວ່າ - ການປັບຕົວແມ່ນເປັນເລື່ອງກ່ຽວຂ້ອງ ກັບການສ້າງພື້ນຖານໂຄງລ່າງ ການປ້ອງກັນການ ປ່ຽນແປງ ດິນຟ້າອາກາດ ທີ່ລະອຽດລະອໍ, ແລະ ການສ້າງເຮືອນ ຊຶ່ງສາມາດ "ລອຍຢູ່" ເທິງໜ້າ ນ້ຳໄດ້. ໃນພາກສ່ວນອື່ນໆ ຂອງໂລກ, ການປັບ ຕົວໝາຍເຖິງ ປະຊາຊົນເອງຕ້ອງຮຽນ ທີ່ຈະ "ລອຍຢູ່" ນ້ຳໄດ້ເມື່ອມີນ້ຳຖ້ວມ. ໂດຍແຕກຕ່າງ ຈາກປະຊາຊົນ ທີ່ດຳລົງຊີວິດຢູ່ຫຼັງລະບົບປ້ອງກັນ

ນ້ຳຖ້ວມຂອງ ກຸງລອນດອນ ແລະ ລອດສແອນ ເຈີລິສ, ຍິງໜຸ່ມຈາກ ແຫຼມອາຟະລິກາ ແລະ ປະຊາຊົນ ໃນເຂດສາມລ່ຽມແມ່ນ້ຳ ຄົງຄາ. ຢູ່ເມືອງ ແດສມອນ ຕູຕູ (Desmond Tutu), ຜູ້ທີ່ເຄີຍດຳລົງຕຳແໜ່ງຫົວໜ້າສັງຄະລາດ ສາດສະໜາຄຼິສ ຂອງ ນະຄອນເຄບທາວ (Cape Town) ໄດ້ຖິກຖຽງว่า ພວກເຮົາກຳລັງ ລອຍໄປ ຕາມກະແສ ຂອງໂລກໃນການປັບຕົວເຂົ້າ ກັບ ການແບ່ງແຍກຜິວພັນຢູ່ອາຟະລິກາ.

ການວາງແຜນ ສຳລັບການປັບຕົວເຂົ້າກັບ ການປ່ຽນແປງ ດິນຟ້າອາກາດ ເປັນສິ່ງທີ່ທ້າທາຍ ລັດຖະບານ ໃນບັນດາປະເທດທີ່ກຳລັງພັດທະນາ ຊຶ່ງເປັນສິ່ງທີ່ທ້າທາຍໃນຫຼາຍລະດັບ. ສິ່ງທີ່ທ້າ ທາຍເຫຼົ່ານີ້ ໄດ້ກາຍເປັນໄພຂົ່ມຂູ່ທີ່ເປັນລະບົບ. ຢູ່ປະເທດອີຢິບ, ນ້ຳຖ້ວມຕາມສາມລ່ຽມປາກນ້ຳ ພັດເປັນຜົນດີ ຊຶ່ງສ້າງເງື່ອນໄຂອັນດີສຳລັບ ການ ຜະລິດກະສິກຳ ຍ້ອນໄດ້ຝຸ່ນທຳມະຊາດ. ການ ປ່ຽນແປງທາງດ້ານທໍລະນີຕາມ ຊາຍຝັ່ງຂອງ ອາຟະລິກາໃຕ້ ອາດຈະເປັນຜົນດີໃຫ້ຂະແໜງ ປະມົງຂອງປະເທດ ນາມິເບຍ ໃນອະນາຄົດ. ການ ຜະລິດກະແສໄຟຟ້າ ຈາກພະລັງງານນ້ຳ ອາດຈະ ມີຜົນກະທົບຢູ່ຫຼາຍໆປະເທດ.

ການຮັບມືກັບການປ່ຽນແປງ ດິນຟ້າອາກາດ ຈະຮຽກຮ້ອງໃຫ້ມີການປັບຕົວ ແບບປະສົມປະ ສານຢ່າງຮອບດ້ານ ຂອງນະ�โยบายพัดทะนา ແລະ ການວາງແຜນເພື່ອການຫຼຸດຜ່ອນຄວາມທຸກ ຍາກ. ເຖິງຢ່າງໃດກໍ່ຕາມ, ການວາງແຜນ ແລະ ຄວາມສາມາດໃນການຈັດຕັ້ງປະຕິ ບັດ ກໍ່ມີຈຳກັດ ໃນແງ່:

- *ຂໍ້ມູນຂ່າວສານ.* ບັນດາປະເທດທີ່ທຸກຍາກທີ່ ສຸດໃນໂລກ ຂາດແຄນຄວາມສາມາດ ແລະ ແຫຼ່ງຊັບພະຍາກອນ ໃນການຕີລາຄາປະເມີນ ຜົນກະທົບຄວາມສ່ຽງ ຈາກການປ່ຽນແປງ ດິນຟ້າອາກາດ ໃນເຂດອ້ອມແອ້ມ ທະເລ ຊາຍຊາຣາລາ ທະວີບອາຟະລິກາ, ຄວາມ ທຸກຍາກ ຂອງປະຊາຊົນໃນເຂດຊົນນະບົດ ຍັງຢູ່ໃນລະດັບສູງຢູ່ ແລະ ເຂົາເຫຼົ່ານັ້ນຍັງ ຂຶ້ນຢູ່ກັບການກະສິກຳ ທີ່ອາໃສແຕ່ລະດູຝົນ ຊຶ່ງເຮັດໃຫ້ຂໍ້ມູນຂ່າວສານ ດ້ານການພະຍາ ກອນອາກາດ ເປັນສິ່ງທີ່ຈຳເປັນ ແລະ ຫຼືກລ້ຽງ ບໍ່ໄດ້ສຳລັບການປັບຕົວ. ເຖິງຢ່າງໃດກໍ່ຕາມ, ພາກພື້ນດັ່ງກ່າວ ເປັນເຂດທີ່ມີລະດັບຂອງ ຄວາມໜາແໜ້ນຂອງການພະຍາກອນອາ ກາດຕ່ຳ. ຢູ່ປະເທດຝຣັ່ງງົບປະມານສຳລັບ ອຸຕຸນິຍົມມີປະມານ 388 ລ້ານໂດລາສະຫາ ລັດ ຕໍ່ປີ ສົມທຽບໃສ່ປະເທດ ເອທິໂອເປຍ ມີ ພຽງແຕ່ 2 ລ້ານໂດລາສະຫາລັດ ຕໍ່ປີທໍ່ນັ້ນ ກອງປະຊຸມສຸດຍອດ G8 ປີ 2005 ໄດ້ຕົກລົງ ເຫັນດີຮ່ວມກັນສ້າງຄວາມເຂັ້ມແຂງໃຫ້ແກ່ ວຽກງານອຸຕຸນິຍົມ ຂອງທະວີບ ອາຟະລິກາ ຍົກສູງຄວາມສາມາດໃນການຕິດຕາມ ແລະ ພະຍາກອນອາກາດ. ມາຮອດປະຈຸບັນຍັງຢູ່ ໄກກັບສິ່ງທີ່ໄດ້ຕົກລົງເຫັນດີຮ່ວມກັນ.
- *ພື້ນຖານໂຄງລ່າງ.* ໃນການປັບຕົວເຂົ້າກັບ ການປ່ຽນແປງດິນຟ້າອາກາດ, ໃນຂົງເຂດ ອື່ນ, ການປ້ອງກັນບັນຫາກ່ອນ ດີກວ່າການ ແກ້ໄຂບັນຫາທີ່ເກີດຂຶ້ນແລ້ວ. ທຸກໆ 1 ໂດລາ ສະຫະລັດ ທີ່ລົງທຶນເຂົາໃນການຄຸ້ມຄອງ ຄວາມສ່ຽງ ກ່ອນການເກີດໄພພິບັດ ໃນ ປະເທດ ທີ່ກຳລັງຈະພັດທະນາ ຈະສະກັດກັ້ນ ການສູນເສຍ 7 ໂດລາສະຫາລັດ. ຢູ່ ປະເທດ ບັງກາລາເທດ, ການຄົ້ນຄວ້າເພື່ອ ປັບປຸງການດຳລົງຊີວິດ ຂອງປະຊາກອນ ທີ່ອາໃສຢູ່ໝູ່ເກາະ ຊາ (char islands) ສະແດງໃຫ້ເຫັນว่าการปับตัว ແລະ ການ ກຽມພ້ອມຕໍ່ໄພນ້ຳຖ້ວມສາມາດສ້າງຄວາມ

ເຂັ້ມແຂງໃຫ້ແກ່ປະຊາຊົນດັ່ງກ່າວ, ເຖິງແມ່ນວ່າຈະຢູ່ໃນກໍລະນີທີ່ສະຖານະການຮ້າຍແຮງ ໜັກໜ່ວງກໍ່ຕາມ. ຫຼາຍປະເທດຂາດເຂີນແຫຼ່ງຊັບພະຍາກອນການເງິນ ຫຼື ທຶນຮອນທີ່ຈຳເປັນ ສຳລັບການປັບຕົວທາງດ້ານພື້ນຖານໂຄງລ່າງ. ບົນພື້ນຖານການສະກັດກັ້ນໄພພິບັດ, ການພັດທະນາພື້ນຖານໂຄງລ່າງ ໂດຍຊຸມຊົນ ສຳລັບການກັກເກັບນ້ຳ ສາມາດຫຼຸດຜ່ອນການຂາດແຄນ ແລະ ເພີ່ມກຳລັງແຮງໃຫ້ປະຊາຊົນໄດ້ສາມາດແກ້ໄຂ ຄວາມສ່ຽງຕ່າງໆ ທີ່ເກີດຈາກການປ່ຽນແປງດິນຟ້າອາກາດ. ການເປັນຮຸ້ນສ່ວນກັນລະຫວ່າງຊຸມຊົນ ແລະ ລັດຖະບານທ້ອງຖິ່ນໃນ ປະເທດ ອິນເດຍ ເຊັ່ນໃນລັດ ອານດຣາ ພຣາເດັດ ແລະ ກູຈາຣາດ ເປັນຕົວຢ່າງທີ່ສະທ້ອນເຖິງ ສິ່ງທີ່ພວກເຮົາສາມາດເຮັດໄດ້.

- *ການຮັບປະກັນການປົກປ້ອງສັງຄົມ.* ການ ປ່ຽນແປງດິນຟ້າອາກາດໄດ້ສ້າງຄວາມສ່ຽງ ຕ່າງໆ ເພີ່ມຂຶ້ນໃນການດຳລົງຊີວິດ ຂອງຄົນ ທຸກຍາກ. ແຜນການປົກປ້ອງສັງຄົມ (ການ ຮັບປະກັນສະຫວັດດີການສັງຄົມ) ສາມາດ ຊ່ວຍເຫຼືອປະຊາຊົນ ໄດ້ແກ້ໄຂຄວາມສ່ຽງ ເຫຼົ່ານັ້ນ ໃນຂະນະທີ່ຂະຫຍາຍໂອກາດ ສຳລັບການຈ້າງງານ, ໂພຊະນະການ ແລະ ການສຶກສາ. ໃນປະເທດ ເອທິໂອເປຍ ໂຄງ ການຕາໜ່າງການຮັບປະກັນຜົນຜະລິດ ແມ່ນ ຄວາມພະຍາຍາມໜຶ່ງ ເພື່ອສ້າງຄວາມເຂັ້ມ ແຂງທາງດ້ານຄວາມສາມາດ ໃຫ້ແກ່ຄອບ ຄົວທຸກຍາກ ໄດ້ແກ້ໄຂບັນຫາ ໄພແຫ້ງແລ້ງ ໂດຍປາດສະຈາກການເສຍໂອກາດ ສຳລັບ ການຮັກສາສຸຂະພາບ ແລະ ການສຶກສາ. ໃນປະເທດ ລາຕິນອາເມລິກາ, ການໃຫ້ສິນ ເຊື່ອໂດຍມີເງື່ອນໄຂໄດ້ຖືກນຳໃຊ້ຢ່າງກວ້າງ ຂວາງ ເພື່ອຊຸກຍູ້ເປົ້າໝາຍ ການພັດທະນາ ມະນຸດ, ລວມທັງການປົກປ້ອງສ້າງເງື່ອນໄຂ ພື້ນຖານ ຄວາມສາມາດ ໃນລະຫວ່າງການ ເກີດວິກິດທີ່ຄາດບໍ່ເຖິງ. ຢູ່ພາກໃຕ້ຂອງ ທະວີບອາຟະລິກາ, ສິນເຊື່ອໂດຍມີເງື່ອນໄຂ ໄດ້ຖືກນຳໃຊ້ ເພື່ອແກ້ໄຂບັນຫາໃນໄລຍະທີ ເກີດໄພແຫ້ງແລ້ງ ເພື່ອປົກປ້ອງຄວາມສາ ມາດສະມັດຕະພາບການຜະລິດ ໃນໄລຍະ ຍາວ.

ກໍລະນີສຳລັບການປະຕິບັດງານ ຂອງສາກົນ ໃນການປັບຕົວເຂົ້າກັບ ການປ່ຽນແປງດິນຟ້າ ອາກາດ ເປັນສິ່ງທີ່ເປັນພື້ນຖານມາຈາກພັນທະ ທີ່ໄດ້ສັນຍາຜ່ານມາ, ການແບ່ງປັນຄຸນຄ່າ, ການ ປະຕິບັດພັນທະ ຂອງສາກົນໃນການຫຼຸດຜ່ອນ ຄວາມທຸກຍາກ ແລະ ຄວາມຮັບຜິດຊອບຂອງ ປະເທດທີ່ຮັ່ງມີ ໃນການແກ້ໄຂບັນຫາ ການປ່ຽນ ແປງດິນຟ້າອາກາດ. ພາຍໃຕ້ຂໍ້ກຳນົດຂອງສົນທິ ສັນຍາວ່າດ້ວຍ ການປ່ຽນແປງດິນຟ້າອາກາດ ຂອງອົງການ ສ ປ ຊ (the United Nations Framework Convention on Climate Change UNFCCC) ບັນດາປະເທດຕ່າງໆ ຢູ່ທາງເໜືອ ຂອງໂລກ ມີພັນທະຕ້ອງຊຸກຍູ້ຄວາມ ສາມາດໃນການພັດທະນາການປັບຕົວ. ການຊຸກຍູ້ ການຈັດຕັ້ງປະຕິບັດ ເປົ້າໝາຍສະຫະສະວັດ

ຕາຕະລາງ ທີ 3 ການເງິນຂອງພະຫຸພາຄີສຳລັບການປັບຕົວ

ທຶນສຳລັບການປັບຕົວ	ທຶນທີ່ຕ້ອງການ (US$ ລ້ານ)	ທຶນທີ່ສະໜອງ (US$ ລ້ານ)	ລວມເບີກຈ່າຍອອກ (US$ ລ້ານ)
ກອງທຶນສຳລັບປະເທດດ້ອຍພັດທະນາ	156.7	52.1	9.8
ກອງທຶນສຳລັບການປ່ຽນແປງດິນຟ້າອາກາດສະເພາະ	67.3	53.3	1.4
ກອງທຶນປັບປຸງ	5	5	–
ລວມຍ່ອຍ	229	110.4	11.2
ຍຸດທະສາດຍູລິມະສິດໃນການປັບຕົວ	50	50	14.8 [a]
ລວມ	279	160.4	26

a. ລວມຄ່າທຳນຽມ

ໝາຍເຫດ: ຂໍ້ມູນເຖິງທີ 30, ເມສາ, 2007

ແຫຼ່ງຂໍ້ມູນ: GEF 2007a, 2007b, 2007c.

ຮູບພາບທີ 10 ອັດຕາສ່ວນນ້ອຍຂອງການ ລົງທຶນຂອງບັນດາປະເທດ ທີ່ພັດທະນາໃສ່ກອງທຶນສາ ກົນຕ່າງໆ ໃນການປັບຕົວ ເຂົ້າສູ່ການປ່ຽນແປງສະ ພາບດິນຟ້າອາກາດ



ແຫຼ່ງຂໍ້ມູນ: Abbot 2004; DEFRA 2007 ແລະ GEF 2007.

(MDGs) ກຳນົດການປະຕິບັດ ທີ່ມີເຫດຜົນ: ການປັບຕົວແມ່ນ ສິ່ງທີ່ຈຳເປັນ ສຳລັບການບັນລຸ ເປົ້າໝາຍພາຍໃນປີ 2015 ແລະ ສ້າງເງື່ອນ ໄຂສຳລັບຂະບວນການທີ່ຍືນຍົງ. ການນຳໃຊ້ຫຼັກ ການກົດໝາຍ ສຳລັບການປົກປ້ອງຈາກອັນຕະ ລາຍ ແລະ ການທົດແທນຄ່າເສຍຫາຍອາດຈະ ສ້າງພື້ນຖານໃຫ້ແກ່ການປະຕິບັດອື່ນໆ ໄດ້ໃນ ອະນາຄົດ.

ຕາມພາສາທາງການທູດແລ້ວ, ການຕອບ ສະໜອງຂອງສາກົນໃນການປັບຕົວ ແມ່ນຍັງໄກ ຈາກສິ່ງທີ່ຮຽກຮ້ອງໃຫ້ປະຕິບັດ. ກົນໄກຊຸກຍູ້ ທາງດ້ານການເງິນ ແບບພະຫຸພາຄີຂອງບັນດາ ປະເທດຕ່າງໆ ໄດ້ຖືກສ້າງຂຶ້ນ, ລວມທັງກອງທຶນ ສຳລັບບັນດາປະເທດທີ່ດ້ອຍພັດທະນາ ແລະ ກອງທຶນສຳລັບ ການປ່ຽນແປງດິນຟ້າອາກາດສະ ເພາະ. ການດຳເນີນການຕ່າງໆ ຜ່ານກົນໄກ ດັ່ງກ່າວນີ້ ຍັງມີຂອດຈຳກັດ. ຈຳນວນທຶນຊຸກຍູ້ມາ ເຖິງປັດຈຸບັນ ມີປະມານ 26 ລ້ານໂດລາສະຫະລັດ ເປັນການສະໜອງທີ່ໜ້ອຍເອົາແທ້ເອົາວ່າ (ຕາລະ ລາງ 3). ເພື່ອຈຸດປະສົງໃນການສົມທຽບ, ການສະ ໜອງນີ້ ທຽບເທົ່າກັບການໃຊ້ຈ່າຍໃນອາທິດໜຶ່ງ ເພື່ອຕາມແຜນການປ້ອງກັນນ້ຳຖ້ວມ ຂອງລາດ ຊະອານາຈັກອັງກິດ. ປັດຈຸບັນໄດ້ມີການວາງທຶນ ຮອນຈຳນວນ 279 ລ້ານ ໂດລາສະຫະລັດ ສຳລັບຄ່າໃຊ້ຈ່າຍໃນຫຼາຍປີ. ອັນນີ້ຖືວ່າໄດ້ປັບ ປຸງແລ້ວ ເມື່ອສົມທຽບກັບເມື່ອກ່ອນ ແຕ່ກໍ່ຍັງຖືວ່າ ໜ້ອຍຢູ່ ເມື່ອທຽບກັບສິ່ງທີ່ຮຽກຮ້ອງຕ້ອງການ. ມັນສະແດງເຖິງ ງົບປະມານໜ້ອຍກວ່າເຄິ່ງໜຶ່ງ ຂອງຄ່າໃຊ້ຈ່າຍຂອງ ແຂວງ ບາເດັນ ວູເທີນເບີກ (Baden Wurtenberg) ຊຶ່ງເປັນແຂວງໜຶ່ງຂອງ ປະເທດ ເຢຍລະມັນ ທີ່ຈັດສັນໃຫ້ແກ່ການສ້າງ ຄວາມເຂັ້ມແຂງໃຫ້ແກ່ການປ້ອງກັນໄພນ້ຳຖ້ວມ.

ມັນບໍ່ແມ່ນແຕ່ການດຳລົງຊີວິດ ແລະ ການ ທຳມາຫາກິນຂອງປະຊາຊົນທີ່ທຸກຍາກ ຊຶ່ງຮຽກ ຮ້ອງການປົກປ້ອງ ໂດຍຜ່ານການປັບຕົວໃຫ້ເຂົ້າ ກັບການປ່ຽນແປງ ດິນຟ້າອາກາດ. ໂຄງການ ຊ່ວຍເຫຼືອຕ່າງໆ ຍັງຕົກຢູ່ໃນໄພຂົ່ມຂູ່ຢູ່. ພວກເຮົາ ຄາດຄະເນວ່າ ປະມານໜຶ່ງສ່ວນສາມຂອງໂຄງ ການຊ່ວຍເຫຼືອພັດທະນາໃນປັດຈຸບັນແມ່ນສຸມໃສ່ ໃນຂົງເຂດທີ່ແກ້ໄຂຄວາມສ່ຽງຫຼາຍລະດັບ ທີ່ເກີດ ຈາກການປ່ຽນແປງດິນຟ້າອາກາດ. ການປົກປ້ອງ ງົບປະມານຊ່ວຍເຫຼືອຈາກຄວາມສ່ຽງດັ່ງກ່າວ ຈະ ຮຽກຮ້ອງໃຫ້ມີການເພີ່ມເຕີມການລົງທຶນ ປະມານ 4.5 ຕື້ ໂດລາສະຫະລັດ. ໃນເວລາດຽວກັນ, ການ ປ່ຽນແປງດິນຟ້າອາກາດ ຈະປະກອບສ່ວນເຮັດໃຫ້ ການປ່ຽນເສັ້ນທາງ ຂອງທຶນຊ່ວຍເຫຼືອ ໄປສູ່ການ ແກ້ໄຂຟື້ນຟູ ຈາກໄພພິບັດ. ອັນນີ້ໄດ້ເປັນຂົງເຂດ ໜຶ່ງທີ່ຂະຫຍາຍຕົວຢ່າງໄວວາສຳລັບການໄຫຼວຽນ ຂອງທຶນຊ່ວຍເຫຼືອ, ຄິດໄລ່ແລ້ວປະມານ 7.5% ຂອງຈຳນວນພັນທະທັງໝົດໃນປີ 2005.

ການຄາດຄະເນເງື່ອນໄຂຈຳເປັນ ຂອງທຶນ ຮອນການຊ່ວຍເຫຼືອ ສຳລັບການປັບຕົວ ທີ່ກ່າວ ມານີ້ ແມ່ນເປັນເລື່ອງຍາກ. ເມື່ອບໍ່ມີຂໍ້ມູນສະຖິຕິ ທີ່ຈະແຈ້ງ ໃນການຕີລາຄາປະເມີນຜົນແຫ່ງຊາດ ກ່ຽວກັບຄວາມສ່ຽງຈາກການປ່ຽນແປງດິນຟ້າອາ ກາດ ແລະ ຄວາມອ່ອນໄຫວຕໍ່ສະພາບອາກາດ, ທຸກການຕີລາຄາປະເມີນຜົນໃດໜຶ່ງ ກໍ່ຍັງເປັນ ຕົວເລກ "ສັນນິຖານ"ໄວ້ (ຕາຕະລາງ 4). ຂໍ້ "ສັນນິຖານ" ຂອງພວກເຮົາ ແມ່ນພາຍໃນປີ 2015 ຢ່າງໜ້ອຍ 44 ລ້ານໂດລາສະຫະລັດ ຕໍ່ປີ ຈະຮຽກຮ້ອງໃຫ້ມີການປະກອບສ່ວນ ສຳລັບການ ພັດທະນາການລົງທຶນ "ເພື່ອປ້ອງກັນໄພຈາກ ການປ່ຽນແປງດິນຟ້າອາກາດ" (ລາຄາໃນປີ 2005). ການພັດທະນາຊັບພະຍາກອນມະນຸດ ກໍ່ເປັນຂົງເຂດໜຶ່ງທີ່ເປັນບູລິມະສິດ. ການລົງທຶນ ໃສ່ການປົກປ້ອງສັງຄົມ ແລະ ຍຸດທະສາດໃນການ

ຢູ່ໃນໂລກທີ່ມີການແບ່ງແຍກ ໂດຍຄວາມບໍ່ເທົ່າທຽມ ທາງດ້ານຄວາມຮັ່ງມີ ແລະ ໂອກາດ, ມັນກໍ່ເປັນການງ່າຍ ທີ່ຈະລືມວ່າ ພວກເຮົາເປັນສ່ວນໜຶ່ງ ຂອງຊຸມຊົນ ຂອງມວນມະນຸດ. ດັ່ງທີ່ພວກເຮົາໄດ້ເຫັນຜົນກະທົບເບື້ອງຕົ້ນຂອງການ ປ່ຽນແປງດິນຟ້າອາກາດໃນທົ່ວໂລກ, ພວກເຮົາແຕ່ລະຄົນຄວນຈະທົບທວນຄືນກ່ຽວກັບວ່າການ ເປັນສ່ວນໜຶ່ງຂອງ ຄອບຄົວມັນ ໝາຍຄວາມວ່າແນວໃດ.

ບາງເທື່ອຈຸດເລີ່ມຕົ້ນແມ່ນ ການທົບທວນເບິ່ງຄວາມຂາດເຂີນດ້ານພາສາ. ຄຳວ່າ 'ການດັດປັບ' ເປັນສ່ວນໜຶ່ງ ຂອງຄຳສັບໃນພິດຈະນານຸກົມ ກ່ຽວກັບການ ປ່ຽນແປງດິນຟ້າອາກາດ ລະດັບມາດຖານ. ແຕ່ວ່າ ການດັດປັບໝາຍຄວາມວ່າ ແນວໃດ? ຄຳຕອບຕໍ່ຄຳຖາມນີ້ ແມ່ນຫລາຍສິ່ງແຕກຕ່າງກັນ ໃນຫລາຍໆບ່ອນ.

ສຳລັບຄົນສ່ວນຫລາຍ ໃນປະເທດທີ່ຮັ່ງມີ ການດັດປັບເປັນຂະບວນການ ທີ່ຂ້ອນຂ້າງວ່າບໍ່ມີຄວາມເຈັບປວດຫລາຍປານໃດ. ຮອງຮັບລະບົບທຳຄວາມຮ້ອນ ແລະ ທຳຄວາມເຢັນ, ເຂົາເຈົ້າສາມາດດັດປັບເຂົ້າກັບສະພາບອາກາດ ທີ່ໜັກໜ່ວງ ໄດ້ດ້ວຍການກົດບັງຄັບບາຫລອດວັດແທກອຸນຫະພູມ. ເມື່ອປະເຊີນໜ້າກັບໄພຂົ່ມຂູ່ ຂອງໄພນ້ຳຖ້ວມ, ບັນດາລັດຖະບານ ກໍ່ສາມາດປົກປ້ອງ ປະຊາຊົນຊາວລອນດອນ, ລອສ ແອນເຈີລິສ ແລະ ໂຕກຽວ ດ້ວຍລະບົບປ້ອງກັນດິນຟ້າອາກາດ ແບບທັນສະ ໄໝຄົບຊຸດ. ໃນບາງ ປະເທດ ການປ່ຽນແປງດິນຟ້າອາກາດ ກໍ່ນຳຜົນສະທ້ອນທີ່ອ່ອນ ໂຍນມາສູ່ພວກເຮົາ, ເຊັ່ນ: ມີລະດູການປູກຝັງ ທີ່ຍາວນານກວ່າເກົ່າ ສຳລັບຊາວກະສິ ກອນ.

ບັດນີ້ ມາພິຈາລະນາວ່າ ການດັດປັບມີຄວາມໝາຍວ່າແນວໃດ ສຳລັບຜູ້ທີ່ທຸກ ຍາກທີ່ສຸດໃນໂລກ ແລະ ສຳລັບຜູ້ທີ່ອ່ອນແອທີ່ສຸດໃນໂລກ - ປະມານ 2.6 ຕື້ ຄົນ ທີ່ດຳລົງຊີວິດ ໂດຍມີລາຍຮັບຕ່ຳກວ່າ 2 ໂດລາສະຫະລັດ ຕໍ່ວັນ. ຊາວກະສິກອນ ແມ່ຍິງຜູ້ໜຶ່ງທີ່ທຸກຍາກໃນປະເທດ ມາລາວີ ຈະດັດປັບແນວໃດ ເມື່ອມີໄພແຫ້ງແລ້ງ ເລື້ອຍກວ່າເກົ່າ ແລະ ມີຝົນຕົກມາໃສ່ການຜະລິດໜ້ອຍ? ບາງເທື່ອອາດແມ່ນດ້ວຍ ການຫລຸດໂພຊະນາການ ຂອງຄອບຄົວຂອງລາວທີ່ບໍ່ພຽງພໍຢູ່ແລ້ວລົງ ຫລື ເອົາລູກ ຂອງລາວອອກຈາກໂຮງຮຽນ. ປະຊາຊົນຊາວຊະລຳ ທີ່ດຳລົງຊີວິດ ຢູ່ພາຍໃຕ້ຫລັງຄາ ຜ້າຍາງ ແລະ ແຜ່ນສັງກະສີ ໃນຊະລຳໃນນະຄອນຫລວງ ມະນີລາ ຫລື ບໍໂຕປຣິນສ ດັດປັບ ເຂົ້າກັບໄພຂົ່ມຂູ່ຈາກພະຍຸໄຊໂຄລນ ທີ່ໜັກໜ່ວງກວ່າເກົ່າໄດ້ແນວໃດ? ແລະ ປະຊາຊົນ ທີ່ຢູ່ເຂດສາມລ່ຽມ ແມ່ນນ້ຳ ຄົງຄາ ແລະ ແມ່ນ້ຳຂອງ ຈະດັບປັບເຂົ້າກັບ ນ້ຳທີ່ຈະຖ້ວມເຮືອນຊານ ແລະ ດິນຂອງເຂົາເຈົ້າແນວໃດ?

ການດັດປັບ ໄດ້ກາຍເປັນເລື່ອງທີ່ຮັບໄດ້ ສຳລັບຄວາມຍຸດຕິທຳ ດ້ານສັງຄົມ ໃນລະດັບໂລກ. ໃນຂະນະທີ່ປະຊາຊົນ ຂອງໂລກທີ່ຮັ່ງມີ ໄດ້ຮັບການປົກປ້ອງ ຈາກໄພອັນຕະລາຍ, ປະຊາຊົນຜູ້ທຸກຍາກ, ຜູ້ອ່ອນແອ ແລະ ຜູ້ອຶດຫິວ ໄດ້ປະເຊີນ ກັບຄວາມຈິງ ທີ່ໂຫດຮ້າຍ ຂອງການປ່ຽນແປງດິນຟ້າອາກາດ ໃນຊີວິດທຸກໆ ມື້ ຂອງເຂົາເຈົ້າ. ຖ້າຈະເວົ້າແບບກົງໄປກົງມາ, ຜູ້ທີ່ທຸກຍາກໃນໂລກນີ້ ໄດ້ຮັບອັນຕະ ລາຍຈາກບັນຫາ ທີ່ບໍ່ແມ່ນສິ່ງທີ່ເຂົາເຈົ້າເປັນຜູ້ເຮັດຂຶ້ນມາ. ຮ່ອງຮອຍການປ່ອຍອາຍ ຄາບອນ ຂອງຊາວກະສິກອນ ມາລາວີ ຫລື ຊຸມຊົນຊາວ ຊະລຳຢູ່ ໄຮຕິ ບໍ່ຄ່ອຍຈະໄດ້ ຖືກຂຶ້ນທະບຽນໃນຊັ້ນບັນຍາກາດ ຂອງໂລກນີ້ຊຳ້.

ບໍ່ມີຊຸມຊົນທີ່ມີຄວາມສຳນຶກຂອງຄວາມຍຸດຕິທຳ, ທີ່ມີຄວາມເຫັນອົກເຫັນໃຈ ຫລື ຄວາມນັບຖືສິດທິພື້ນຖານຂອງມະນຸດໃດ ຄວນຍອມຮັບເອົາວິຖີທາງການດັດ ປັບໃນປະຈຸບັນນີ້. ການດຳລົງຊີວິດແບບຄົນທຸກຍາກ ຂອງໂລກ ເພື່ອຈິ່ມ ຫລື ລອຍ ຢູ່ກັບຊັບພະຍາກອນທີ່ເລັກນ້ອຍຂອງເຂົາເຈົ້າເອງ ໃນການປະເຊີນໜ້າກັບໄພຂົ່ມຂູ່ ທີ່ການປ່ຽນແປງນຳມາໃຫ້ນັ້ນ ແມ່ນເປັນເລື່ອງທີ່ຜິດຄຸນນະທຳ. ແຕ່ໜ້າເສຍດາຍ, ດັ່ງທີ່ບົດລາຍງານການພັດທະນາມະນຸດ ປີ 2007/2008 ໄດ້ສະແດງໃຫ້ເຫັນຢ່າງ ຈະແจ້ງແລ້ວວ່າ ສິ່ງນີ້ກໍ່ແມ່ນສິ່ງທີ່ກຳລັງເກີດຂຶ້ນຢ່າງເຫັນໄດ້ຊັດເຈນ. ພວກເຮົາກຳ ລັງກ້າວໄປສູ່ໂລກຂອງ 'ຄວາມແບ່ງແຍກດ້ານການດັດປັບ'.

ການອະນຸຍາດໃຫ້ກ້າວໄປແບບນີ້ ຍັງຄົງສືບຕໍ່ດຳເນີນໄປ ກໍ່ຈະເປັນຄວາມໜ້າ ມືດຕາມົວ. ແນ່ນອນ, ບັນດາປະເທດຮັ່ງມີ ສາມາດນຳໃຊ້ຊັບພະຍາກອນ ການເງິນ ແລະ ເຕັກໂນໂລຊີທີ່ຫລວງຫລາຍ ຂອງເຂົາເຈົ້າ ເພື່ອປົກປ້ອງເຂົາເຈົ້າຈາກການ ປ່ຽນແປງດິນຟ້າອາກາດ ຢ່າງນ້ອຍກໍ່ໃນຊ່ວງໄລຍະສັ້ນ - ນັ້ນກໍ່ແມ່ນຈຸດດີຂອງ ຄວາມຮັ່ງມີ. ແຕ່ເມື່ອການປ່ຽນແປງດິນຟ້າອາກາດທຳລາຍຊີວິດການເປັນຢູ່, ຍົກຍ້າຍຖິ່ນຖານຜູ້ຄົນ, ແລະ ທຳລາຍລະບົບເສດຖະກິດ ແລະ ສັງຄົມທັງໝົດ, ບໍ່ມີ ປະເທດໃດ - ບໍ່ວ່າຈະຮັ່ງມີ ຫລື ມີອຳນາດ ຫລາຍພຽງໃດ - ຈະມີພູມຄຸ້ມກັນຈາກ ຜົນສະທ້ອນດັ່ງກ່າວ. ໃນໄລຍະຍາວ, ບັນຫາຂອງຜູ້ທຸກຍາກຈະນຳມາຮອດປະຕູ ເຮືອນຂອງຜູ້ຮັ່ງມີ, ເຊັ່ນດຽວກັນກັບ ວິກິດການດິນຟ້າອາກາດ ໄດ້ໃຫ້ຄວາມທຳລະ ມານ, ຄວາມໃຈຮ້າຍ ແລະ ໄພຂົ່ມຂູ່ຕໍ່ຄວາມປອດໄພຂອງທຸກໆຄົນ.

ບໍ່ມີສິ່ງໃດຈາກທີ່ກ່າວມາຂ້າງເທິງຈະຕ້ອງເກີດຂຶ້ນ. ໃນທ້າຍທີ່ສຸດ ທາງແກ້ພຽງ ທາງດຽວຕໍ່ກັບການ ປ່ຽນແປງດິນຟ້າອາກາດ ແມ່ນການບັນເທົາບັນຫາຢ່າງຮີບດ່ວນ. ແຕ່ພວກເຮົາສາມາດເຮັດໄດ້ ແລະ ຕ້ອງເຮັດວຽກຮ່ວມກັນ ເພື່ອຮັບປະກັນວ່າ ການປ່ຽນແປງດິນຟ້າອາກາດທີ່ກຳລັງເກີດຂຶ້ນປັດຈຸບັນ ບໍ່ໄດ້ໂຍນການພັດທະນາ ມະນຸດເຂົ້າສູ່ເກຍຖອຍຫລັງ. ຍ້ອນແນວນັ້ນ ຂ້າພະເຈົ້າຈຶ່ງຮຽກຮ້ອງມາຍັງບັນດາ ຜູ້ນຳ ຂອງໂລກທີ່ຮັ່ງມີ ເພື່ອນຳເອົາການດັດປັບ ການປ່ຽນແປງດິນຟ້າອາກາດ ມາສູ່ ໝາກຫົວໃຈຂອງວາລະຄວາມທຸກຍາກສາກົນ - ແລະ ເພື່ອປະຕິບັດຕາມວາລະ ດັ່ງກ່າວ ກ່ອນທີ່ມັນຈະຊ້າເກີນໄປ.

ແດັສມອນ ຕູຕ
ນັກບວດ ເອເມີຣິຕັສ ຂອງ ເມືອງເຄບທາວ

ພັດທະນາຊັບພະຍາກອນມະນຸດ ທີ່ກວ້າງຂວາງ ແຂງ ຄວາມຮູ້ຄວາມສາມາດ ຂອງຜູ້ທີ່ອ່ອນແອ ຈຳເປັນຕ້ອງໄດ້ກຳນົດຂຶ້ນ ເພື່ອສ້າງຄວາມເຂັ້ມ ເກີນກວ່າທີ່ຈະຮັບມືກັບຄວາມສ່ຽງໄດ້. ການຄາດ

ຄະເນແບບລວມໆ ຂອງພວກເຮົາ ແມ່ນວ່າ ແຕ່ນີ້ຮອດປີ 2015 ຢ່າງນ້ອຍສຸດແມ່ນ ຈຳເປັນຕ້ອງໃຊ້ງົບປະມານ ປະມານ 40 ຕື້ ໂດລາສະຫະລັດ ເພື່ອເສີມຂະຫຍາຍຍຸດທະສາດແຫ່ງຊາດ ເພື່ອການຫລຸດຜ່ອນຄວາມທຸກຍາກທີ່ພົວພັນກັບການຫຼຸດຜ່ອນຄວາມສ່ຽງ ດ້ານການປ່ຽນແປງດິນຟ້າອາກາດ. ຖ້າຈະເອົາຕົວເລກດັ່ງກ່າວ ທຽບກັບສະພາບຄວາມເປັນຈິງ, ມັນກວມເອົາປະມານ 0.5% ຂອງ GDP ທີ່ຄາດຄະເນວ່າຈະບັນລຸໄດ້ໃນປີ 2015 ໃນບັນດາປະເທດທີ່ມີລາຍຮັບຕ່ຳ ແລະ ລາຍຮັບຕ່ຳປານກາງ. ການແບ່ງປັນຈັດສັນສຳລັບ ໄພພິບັດ ແລະ ການຟື້ນຟູຫລັງຈາກໄພພິບັດ ກໍ່ຕ້ອງໄດ້ຮັບການເສີມຂະຫຍາຍ ຍ້ອນວ່າ ໄພແຫ້ງແລ້ງ, ໄພນ້ຳຖ້ວມ, ພະຍຸ ແລະ ດິນຖະຫລົ່ມ ກາຍມາເປັນໄພຂົ່ມຂູ່ທີ່ຮ້າຍແຮງກວ່າເກົ່າ. ການຄາດຄະເນຂອງພວກເຮົາ ໄດ້ຊີ້ໃຫ້ເຫັນວ່າ ຕ້ອງມີການສະໜອງງົບປະມານເພີ່ມເຕີມປະມານ 2 ຕື້ ໂດລາສະຫະລັດ ຕໍ່ປີ.

ຄວາມຮຽກຮ້ອງໃຫ້ມີ ການສະໜັບສະໜູນທາງດ້ານການເງິນ ສຳລັບການດັດປັບ ຄວນຈະຖືເປັນຄວາມຍຶດໝັ້ນ 'ອັນໃໝ່ ແລະ ເພີ່ມເຕີມ'. ນັ້ນໝາຍເຖິງ, ເຂົາເຈົ້າຄວນຈະເພີ່ມ ແທນທີ່ຈະ ຫັນປ່ຽນ ຈຸດເລັ່ງຂອງຄວາມຍຶດໝັ້ນ ຂອງການຊ່ວຍເຫລືອປັດຈຸບັນ. ລັດຖະບານ ເຂດປະເທດພາກເໜືອ ໄດ້ຖືກຮຽກຮ້ອງ ໃຫ້ມີຄຳໝັ້ນສັນຍາວ່າຈະ ເພີ່ມງົບປະມານການຊ່ວຍເຫລືອເປັນສອງເທົ່າ ຮອດປີ 2010, ເຖິງແມ່ນວ່າ ການບັນທຶກຜ່ານມາກ່ຽວກັບ ການສະໜອງການຊ່ວຍເຫລືອກໍ່ມີລັກສະນະຕ່າງກັນ. ທຸກຂໍ້ບົກຜ່ອງໃນການສະໜອງການຊ່ວຍເຫລືອ ຖ່ວງດຶງກັບຄວາມຄືບໜ້າໃນການບັນລຸເປົ້າໝາຍ ການພັດທະນາ ສະຫະສະວັດ ແລະ ເປັນການເພີ່ມບັນຫາໃນການດັດປັບ ການປ່ຽນແປງດິນຟ້າອາກາດ.

ຕົວເລກຫລັກ ສຳລັບການສະໜັບສະໜູນ ດ້ານການເງິນໃຫ້ແກ່ການດັດປັບໃໝ່ ແລະ ເພີ່ມເຕີມປະກົດວ່າສູງ-ແຕ່ກໍ່ຕ້ອງນຳມາຕີລາຄາທຽບໃສ່ສະພາບການຕົວຈິງ. ຕົວເລກລວມແມ່ນ ປະມານ 86 ຕື້ ໂດລາສະຫະລັດ ແຕ່ນີ້ຮອດປີ 2015 ອາດຮຽກຮ້ອງໃຫ້ມີການສະກັດກັ້ນບໍ່ໃຫ້ມີການປ່ຽນຈຸດເລັ່ງຂອງການຊ່ວຍເຫລືອ. ມັນຈະກວມປະມານ 0.2% ຂອງ GDP ຂອງປະເທດພັດທະນາແລ້ວ, ຫລື ປະມານ 1/10 ຂອງງົບປະມານປັດຈຸບັນ ທີ່ຈັດສັນໃສ່ຄ່າໃຊ້ຈ່າຍດ້ານການທະຫານໃນປັດຈຸບັນ. ເມື່ອວັດແທກໃນແງ່ຂອງຜົນຕອບແທນ ດ້ານຄວາມປອດໄພຂອງມະນຸດ, ການສະໜັບສະໜູນດ້ານການເງິນໃຫ້ແກ່ການດັດປັບແມ່ນເປັນການລົງທຶນທີ່ຄຸ້ມຄ່າຫລາຍ ມີຫລາຍກົນໄກການສະໜັບສະໜູນດ້ານການເງິນ ທີ່ມີລັກສະນະປະດິດສ້າງແບບໃໝ່ ເຊິ່ງສາມາດ ຊອກຫາ ມານຳໃຊ້ເພື່ອຫລຸດຜ່ອນຊັບພະຍາກອນ. ກົນໄກເຫລົ່ານີ້ລວມມີ ການເກັບອາກອນ, ພາສີຄ່າປ່ອຍອາຍຄາບອນ ບໍລິຫານພາຍໃຕ້ແຜນງານ cap and trade ແລະ ຄ່າພາສີຍານພາຫະນະທາງອາກາດ ແລະ ຍານພາຫານະຕ່າງໆ.

ການສະໜັບສະໜູນ ຂອງສາກົນຕໍ່ການດັດປັບໄດ້ໄປໄກກວ່າການໃຫ້ທຶນ ສະໜັບສະໜູນ. ຄວາມພະຍາຍາມປັດຈຸບັນ ຂອງສາກົນ ກຳລັງປະເຊີນກັບຄວາມຫຍຸ້ງຍາກສັບສົນ ບໍ່ພຽງແຕ່ຍ້ອນມີການສະໜັບສະໜູນທຶນທີ່ ບໍ່ພຽງພໍ, ແຕ່ຍ້ອນຂາດການປະສານງານ ແລະ ຂາດຄວາມກົມກຽວ. ຄວາມສັບປົນຄົນເລກັນແບບມະຍົມມະຍ່ອຍ ຂອງກົນໄກການຮ່ວມມືແບບຫລາຍຝ່າຍ ນຳມາເຊິ່ງທຶນຮອນຈຳນວນໜ້ອຍ ໂດຍມີຕົ້ນທຶນການມອບໂອນສູງ, ເຊິ່ງສ່ວນຫລາຍແມ່ນຜ່ານແຕ່ລະໂຄງການ. ໃນຂະນະທີ່ການສະໜັບສະໜູນ ບົນພື້ນຖານເປັນໂຄງການ ກໍ່ມີບົດບາດສຳຄັນ,

ຈຸດຍືນຂອງການວາງແຜນການດັດປັບ ຕ້ອງໄດ້ຫັນປ່ຽນໄປເປັນແຜນງານ ແລະ ງົບປະມານແຫ່ງຊາດ.

ການເຊື່ອມໂຍງການວາງແຜນ ການດັດປັບ ໄປເຂົ້າກັບ ຍຸດທະສາດການຫລຸດຜ່ອນຄວາມທຸກຍາກ ແມ່ນເປັນບູລິມະສິດ. ນະໂຍບາຍການດັດປັບທີ່ປະສົບຜົນສຳເລັດ ບໍ່ສາມາດຈັດອັນດັບໃສ່ເປັນລະບົບ ທີ່ບໍ່ສາມາດແກ້ໄຂສາເຫດຂອງຄວາມທຸກຍາກ, ຄວາມອ່ອນແອ ແລະ ຄວາມແຕກຕ່າງ/ຊ່ອງຫว่ານດ້ານຄວາມຮັ່ງມີ ທີ່ຫລາຍກວ່າເກົ່າ, ຄວາມແຕກຕ່າງລະຫว่ານຍິງຊາຍ ແລະ ຄວາມແຕກຕ່າງ ດ້ານສະຖານທີ່ຕັ້ງ. ການສົນທະນາ ປຶກສາຫາລືກ່ຽວກັບ ເອກະສານຍຸດທະສາດການຫລຸດຜ່ອນຄວາມທຸກຍາກ (PRSPs) ໄດ້ສະໜອງທິດທາງທີ່ເປັນໄປໄດ້ສຳລັບການນຳເອົາການເຊື່ອມໂຍງການດັດປັບເຂົ້າກັບການວາງແຜນຫລຸດຜ່ອນຄວາມທຸກຍາກ. ການທົບທວນ PRSPs ໃນຂະບວນການແຫ່ງຊາດຂອງຕົນ ເພື່ອກຳນົດຄວາມຮຽກຮ້ອງຕ້ອງການ ດ້ານທຶນຮອນ ແລະ ທາງເລືອກນະໂຍບາຍ ສຳລັບການດັດປັບ ອາດເປັນຈຸດປະສານງານຫລັກສຳລັບການຮ່ວມມືສາກົນ.

ພາກສະຫລຸບ ແລະ ສັງລວມ ຂໍ້ແນະນຳຕ່ າງໆ

ການປ່ຽນແປງ ດິນຟ້າອາກາດ ປະເຊີນໜ້າກັບມະນຸດຊາດ ດ້ວຍທາງເລືອກທີ່ຫັກຫ່ວງ. ພວກເຮົາສາມາດຫລີກລ້ຽງການຖອຍຫລັງ ຂອງການພັດທະນາມະນຸດ ແລະ ຄວາມສ່ຽງຕໍ່ໄພພິບັດໃນສັດຕະວັດທີ 21 ສຳລັບ ລຸ້ນຄົນອານາຄົດໄດ້, ແຕ່ຕ້ອງແມ່ນການເລືອກທີ່ຈະດຳເນີນການດ້ວຍຈິດສຳນຶກເຖິງຄວາມຮີບດ່ວນ. ຈິດສຳນຶກຂອງຄວາມຮີບດ່ວນດັ່ງກ່ າວນັ້ນ ປັດຈຸບັນແມ່ນຍັງຂາດຢູ່. ບັນດາລັດຖະບານ ອາດນຳໃຊ້ພາສາ

ຕາຕະລາງ ທີ 4 ການລົງທຶນໃສ່ການດັດປັບ ຮອດປີ 2015

ທຶນຂອງປະເທດຜູ້ໃຫ້ທຶນທີ່ຄາດຄະເນໄດ້	ທຶນທີ່ຄາດຄະເນ % ຂອງ GDP ບັນດາ ປະເທດ OECD2015	ທຶນທີ່ຄາດຄະເນ ຕົ້ໂດລາ 2015
ການລົງທຶນພັດທະນາລະບົບຕ້ານທານຕໍ່ອາກາດ	0.1	44
ການດັດປັບການຫລຸດຜ່ອນຄວາມທຸກຍາກ ເຂົ້າກັບການປ່ຽນແປງ ດິນຟ້າອາກາດ	0.1	40
ການສິ່ງເສີມການຮັບມືກັບໄພພິບັດໃຫ້ເຂັ້ມແຂງຂຶ້ນ	(.)	2
ລວມ	**0.2**	**86**

ແຫລ່ງຂໍ້ມູນ: ຄາດຄາດຄະເນ ຂອງຫ້ອງການ HDRO ອີງໃສ່ການຄາດຄະເນອັດຕາສ່ວນ GDP ຈາກທະນາຄານ ໂລກ ປີ 2007d

ຄຳເວົ້າທີ່ວ່າ 'ວິກິດການຄວາມປອດໄພຂອງໂລກ' ເພື່ອພັນລະນາເຖິງບັນຫາ ການປ່ຽນແປງ ດິນຟ້າອາກາດ, ແຕ່ການດຳເນີນ ມາດຕະການ ຂອງເພີ່ນ ໃນດ້ານການປະຕິຮູບ ນະໂຍບາຍດ້ານພະລັງງານ ພັດເປັນອີກເລື່ອງໜຶ່ງຕ່ າງຫາກ. ຈຸດເລີ່ມຕົ້ນ ສຳລັບການດຳເນີນມາດຕະການ ແລະ ການນຳພາການເມືອງ ແມ່ນການຍອມຮັບຮູ້ ໃນສ່ວນຂອງ ລັດຖະບານ ວ່ າເຂົາເຈົ້ າໄດ້ ປະເຊີນໜ້ ານັ ກ ບ ສິ ່ ງ ທີ ່ ເປັ ນ ໄ ພ ຂົ ່ ມ ຂູ ່ ທີ ່ ຮ້ ານ ແ ຮ ງ ທີ ່ ສຸ ດ ທີ ່ ມ ະ ນຸ ດ ຊ າ ດ ບ ໍ ່ ເ ຄ ີ ຍ ປ ະ ເ ຊ ີ ນ ມ າ ກ ່ ອ ນ.

ການ ປ ະ ເ ຊ ີ ນ ໜ້ ານ ັ ກ ບ ໄ ພ ຂົ ່ ມ ຂູ ່ ຈ ະ ພ າ ໃ ຫ້ ມ ີ ສ ິ ່ ງ ທ້
 ທ ານ ຕ ່ ານ ຫ ລ າ ຍ ລ ະ ດ ັ ບ. ບ າ ງ ເ ທ ື ່ ອ ອ ັ ນ ທ ີ ່ ເ ປ ັ ນ ພ ື ້ ນ ຖ ານ ທ ີ ່ ສ ຸ ດ ແ ມ ່ ນ ມ ັ ນ ທ້ ານ ຕ ່ ານ ວ ິ ທ ີ ທ າ ງ ທ ີ ່ ພ ວ ກ ເ ຮ ົ າ ຄ ິ ນ ຄ ິ ດ ກ ່ ຽ ວ ກ ັ ບ ຄ ວ າ ມ ຄ ື ບ ໜ້ າ. ອ າ ດ ບ ໍ ່ ມ ີ ສ ິ ່ ງ ທ ີ ່ ສ ະ ແ ດ ງ ໃ ຫ້ ເ ຫ ັ ນ ປ ະ ຈ ັ ກ ຕ າ ໃ ດ ທ ີ ່ ຈ ະ ສ ະ ແ ດ ງ ໃ ຫ້ ເ ຫ ັ ນ ແ ຈ້ ງ ເ ທ ົ່ າ ກ ັ ບ ດ ິ ນ ຟ້ າ ອ າ ກ າ ດ ສ ະ ແ ດ ງ ໃ ຫ້ ເ ຫ ັ ນ ວ່ າ ການ ສ້ ານ ຄ ວ າ ມ ຮ ັ ່ ງ ມ ີ ດ ້ ານ ເ ສ ດ ຖ ະ ກ ິ ດ ບ ໍ ່ ແ ມ ່ ນ ອ ັ ນ ດ ຽ ວ ກ ັ ນ ກ ັ ບ ຄ ວ າ ມ ຄ ື ບ ໜ້ າ ຂ ອ ງ ມ ະ ນ ຸ ດ. ພ າ ຍ ໃ ຕ້ ນ ະ ໂ ຍ ບ າ ຍ ດ ້ ານ ພ ະ ລ ັ ງ ງ ານ ປ ັ ດ ຈ ຸ ບ ັ ນ ໂ ດ ຍ ມ ີ ການ ຍ ົ ກ ສ ູ ງ ຄ ວ າ ມ ຈ ະ ເ ລ ີ ນ ຮ ຸ ່ ງ ເ ຮ ືອ ງ ດ ້ ານ ເ ສ ດ ຖ ະ ກ ິ ດ ຈ ະ ໄ ປ ຄ ູ ງ ຄ ູ ່ ກ ັ ບ ການ ທ້ ອ ນ ໂ ຮ ມ ໄ ພ ຂ ົ ່ ມ ຂ ູ ່ ຕ ໍ ່ ການ ພ ັ ດ ທ ະ ນ າ ມ ະ ນ ຸ ດ ໃ ນ ທ ຸ ກ ມ ື້ ນ ີ້ ແ ລ ະ ຕ ໍ ່ ຄ ວ າ ມ ຢ ູ ່ ດ ີ ມ ີ ສ ຸ ກ ຂ ອ ງ ຄ ົ ນ ລ ຸ ້ ນ ຫ ລ ັ ງ. ແ ຕ ່ ການ ຂ ະ ຫ ຍ າ ຍ ຕ ົ ວ ຂ ອ ງ ເ ສ ດ ຖ ະ ກ ິ ດ ທ ີ ່ ມ ີ ການ ປ ່ ອ ຍ ອ າ ຍ ຄ າ ບ ອ ນ ຫ ລ າ ຍ ແ ມ ່ ນ ເ ປ ັ ນ ອ າ ການ ບ ົ ່ ງ ບ ອ ກ ຂ ອ ງ ບ ັ ນ ຫ າ ທ ີ ່

ສຳລັບລຸ້ນຄົນປັດຈຸບັນ, ສິ່ງທ້າທ້າຍແມ່ນ ການເປີດກວ້າງສູ່ໂອກາດ ດ້ວຍການດັດການປ່ອຍ ອາຍພິດເຮືອນແກ້ວໄປສູ້ ທິດທາງຫຼຸດລົງ

ຢັ່ງເລີກລົງໄປອີກ. ໜຶ່ງໃນບົດຮຽນທີ່ສຳຄັນກວ່າໝູ່ ທີ່ການປ່ຽນແປງ ດິນຟ້າອາກາດສອນໄວ້ກໍ່ຄືຮູບ ແບບເສດຖະກິດທີ່ຜັກດັນໃຫ້ມີ ການຂະຫຍາຍ ຕົວ, ແລະ ການຊົມໃຊ້ແບບຟຸມເฟือยທີ່ມາຄຽງຄູ່ ກັນ, ນັ້ນແມ່ນຄວາມບໍ່ຍືນຍົງດ້ານ ນິເວດວິທະຍາ. ມັນບໍ່ມີສິ່ງທ້າທາຍໃດ ຕໍ່ຂໍ້ສົມມຸດຖານ ກ່ຽວກັບ ຄວາມຄືບໜ້າ ທີ່ຍິ່ງໃຫຍ່ກວ່າ ການດັດປັບກິດຈະ ກຳເສດຖະກິດ ແລະ ການຊົມໃຊ້ໃຫ້ເຂົ້າກັບ ຄວາມເປັນຈິງດ້ານນິເວດວິທະຍາ.

ການຕໍ່ສູ້ກັບການປ່ຽນແປງ ດິນຟ້າອາກາດ ຮຽກຮ້ອງໃຫ້ພວກເຮົາວາງຄວາມສຳຄັນດ້ານ ນິເວດວິທະຍາ ໄວ້ໃນຈຸດໃຈກາງຂອງເສດຖະກິດ. ຂະບວນການດັ່ງກ່າວ ຕ້ອງໄດ້ເລີ່ມຕົ້ນ ໃນໂລກ ທີ່ພັດທະນາແລ້ວ - ແລະ ມັນຕ້ອງໄດ້ເລີ່ມຕົ້ນ ແຕ່ມື້ນີ້. ຕ້ອງໄດ້ມີການຍອມຮັບຄວາມບໍ່ແນ່ນອນ ຕ່າງໆ. ໃນບົດລາຍງານສະບັບນີ້ ພວກເຮົາໄດ້ ຖົກຖຽງກັນວ່າ ຖ້າມີການປະຕິຮູບທີ່ຖືກຕ້ອງ, ມັນ ກໍ່ບໍ່ທັນຊ້າເກີນໄປທີ່ຈະຈຳກັດ ອາຍພິດເຮືອນ ແກ້ວ ລົງໃຫ້ຢູ່ໃນລະດັບທີ່ຍືນຍົງ ໂດຍບໍ່ຕ້ອງສູນ ເສຍການຂະຫຍາຍຕົວ ທາງດ້ານເສດຖະກິດ: ເຊິ່ງການຍົກສູງ ຄວາມຈະເລີນຮຸ່ງເຮືອງ ແລະ ຄວາມປອດໄພດ້ານດິນຟ້າອາກາດ ບໍ່ແມ່ນຈຸດ ປະສົງທີ່ຂັດກັນ.

ສະພາບປັດຈຸບັນ ຂອງການຮ່ວມມືສາກົນ ແລະ ການຮ່ວມມືຫລາຍຝ່າຍ ກ່ຽວກັບການປ່ຽນ ແປງດິນຟ້າອາກາດ ມັນບໍ່ແທດເໝາະກັບ ຈຸດປະ ສົງຂອງມັນ. ໂດຍຖືເອົາເປັນບູລິມະສິດ ໂລກເຮົາ ຈຳເປັນຕ້ອງມີ ຂໍ້ຕົກລົງສາກົນທີ່ຜູກມັດໃຫ້ມີການ ຈຳກັດການປ່ອຍ ອາຍພິດເຮືອນແກ້ວ ໄປຕະ ຫລອດໄລຍະເວລາທີ່ຍາວນານ, ແຕ່ໂດຍມີເປົ້າ ໝາຍໄລຍະສັ້ນ ແລະ ໄລຍະກາງທີ່ເຄັ່ງຄັດ. ປະເທດທີ່ກຳລັງ ພັດທະນາຫລັກໆ ຕ້ອງໄດ້ເປັນ ພາກສ່ວນໜຶ່ງຂອງຂໍ້ຕົກລົງດັ່ງກ່າວ ແລະ ຕ້ອງມີ ຄວາມຍຶດໝັ້ນທີ່ຈະຫລຸດຜ່ອນການປ່ອຍ ອາຍພິດ ລົງ. ແນວໃດກໍ່ຕາມ ຄວາມຍຶດໝັ້ນເຫລົ່ານັ້ນ ຈຳເປັນຕ້ອງໄດ້ສະທ້ອນໃຫ້ເຫັນເຖິງ ສະພາບ ຄວາມເປັນຈິງຂອງເຂົາເຈົ້າ ແລະ ຄວາມ ອາດສາມາດຂອງເຂົາເຈົ້າ, ແລະ ຄວາມຈຳເປັນ ທີ່ແທ້ຈິງ ທີ່ຈະເຮັດໃຫ້ຄວາມຄືບໜ້າໃນດ້ານການ ຫລຸດຜ່ອນຄວາມ ທຸກຍາກຍືນຍົງຄົງຕົວ. ຂໍ້ຕົກລົງ ຫລາຍຝ່າຍໃດໆ ທີ່ປາດສະຈາກຄຳຍຶດໝັ້ນທີ່ເປັນ ຄາດໝາຍຕົວເລກ ຈາກບັນດາ ປະເທດທີ່ກຳລັງ ພັດທະນາ ຈະຂາດຄວາມໜ້າເຊື່ອຖືໃນແງ່ຂອງ ການປັບປຸງການປ່ຽນແປງດິນຟ້າອາກາດ. ໃນຂະ ນະດຽວກັນ, ຈະບໍ່ມີຂໍ້ຕົກລົງໃນລັກສະນະນັ້ນເກີດ ຂຶ້ນ ຈົນກວ່າວ່າ ມັນຈະລວມເອົາການສະໜອງ ທຶນຮອນ ແລະ ການຖ່າຍທອດເຕັກໂລໂລຊີ ຈາກຊາດທີ່ຮັ່ງມີ ທີ່ແບກຫາບຄວາມຮັບຜິດຊອບ ມາແຕ່ປະຫວັດສາດ ຕໍ່ການປ່ຽນແປງດິນຟ້າ ອາກາດ.

ການຮ່ວມມືສາກົນ ຍັງຕ້ອງໄດ້ແກ້ໄຂບັນຫາ ທີ່ກົດດັນດ້ານການດັດປັບການປ່ຽນແປງດິນຟ້າ ອາກາດ. ແມ້ກະທັ້ງວ່າ ມີການກຳຈັດທີ່ເຄັ່ງຄັດ, ໂລກກໍ່ໄດ້ຍຶດໝັ້ນຕໍ່ພາວະໂລກຮ້ອນ ທີ່ຄົງຕົວ ໃນຊ່ວງໄລຍະເຄິ່ງທຳອິດ ຂອງສັດຕະວັດທີ 21. ໃນເມື່ອສ້າງບັນຫາຂຶ້ນມາແລ້ວ, ປະເທດທີ່ຮັ່ງມີ ທີ່ສຸດຂອງໂລກ ບໍ່ສາມາດທີ່ຈະຫລີກອອກໄປ ທາງນອກ ແລະ ພຽງແຕ່ແນມເບິ່ງດ້ວຍຄວາມຫວັງ ແລະ ມອງຂ້າມຄວາມມຸ່ງມາດປາດຖະໜາຂອງ ຜູ້ທີ່ທຸກຍາກໃນໂລກ ໂດຍການເພີ່ມໂອກາດນຳ ໄປສູ່ຄວາມສ່ຽງ ແລະ ຄວາມອ່ອນແອໃຫ້ແກ່ ເຂົາເຈົ້າເຊິ່ງຈະມາຄຽງຄູ່ກັບການປ່ຽນແປງດິນຟ້າ ອາກາດ. ການຕໍ່ສູ້ກັບການປ່ຽນແປງດິນຟ້າອາ ກາດ ແມ່ນໂຈດທີ່ຕ້ອງແກ້ໃນໄລຍະ ຫລາຍລຸ້ນ ຄົນ. ສຳລັບລຸ້ນຄົນປັດຈຸບັນ, ສິ່ງທ້າທາຍ ແມ່ນຕ້ອງໄດ້ເປີດກວ້າງສູ່ໂອກາດ ດ້ວຍການດັດ

ການປ່ອຍ ອາຍພິດເຮືອນແກ້ວໄປສູ່ທິດທາງ ຫລຸດລົງ. ໂລກມີໂອກາດຕັ້ງແຕ່ປະຫວັດສາດຜ່ານ ມາ ໃນການເລີ່ມຕົ້ນພາລະໜ້າທີ່ນີ້. ໃນປີ 2012, ໄລຍະຄວາມຍຶດໝັ້ນປັດຈຸບັນ ຕໍ່ສົນທິສັນຍາ ກຽວໂຕ ກໍ່ຈະສິ້ນສຸດລົງ. ຂໍ້ຕົກລົງທີ່ຕາມມາ ອາດວາງຮູບແບບໃໝ່, ບັງຄັບໃຫ້ມີຂໍ້ຈຳກັດທີ່ເຄັ່ງ ຄັດກວ່າເກົ່າ ກ່ຽວກັບການປ່ອຍອາຍພິດໃນອານາ ຄົດ ແລະ ໃຫ້ທິດທາງສຳລັບການດຳເນີນມາດ ຕະການຮ່ວມກັນ ຂອງສາກົນ. ອາດໃຫ້ມີການ ເຈລະຈາກ່ອນ ເພື່ອສາມາດວາງຄາດໝາຍທີ່ເປັນ ຕົວເລກແຕ່ນີ້ຮອດປີ 2010, ໂດຍໃຫ້ເປົ້າໝາຍ ງົບການປ່ອຍ ອາຍຄາບອນ ແຫ່ງຊາດໃຫ້ແກ່ ບັນດາລັດຖະບານ. ການກຳນົດງົບການປ່ອຍ ອາຍພິດຄາບອນ ໂດຍມີການປະຕິຮູບນະ�โยบาย ດ້ານພະລັງງານ ແລະ ມາດຕະການດຳເນີນງານ ຂອງລັດຖະບານ ຕໍ່ໂຄງສ້າງການໃຫ້ສິ່ງຈູງໃຈ ສຳລັບຜູ້ຊົມໃຊ້ ແລະ ນັກລົງທຶນໃຫ້ປ່ຽນແປງ ເປັນບ່ອນອີງ ແມ່ນພື້ນຖານ ສຳລັບການປັບປຸງ ການປ່ຽນແປງດິນຟ້າອາກາດທີ່ມີ ປະສິດທິຜົນ. ບໍ່ມີສິ່ງໃດໃນຄວາມເປັນມະນຸດຊາດ ທີ່ຖືວ່າເປັນ ໂອກາດສຸດທ້າຍ. ແຕ່ຂອບນະ�โยบายกรุงโตพายหลัง ปี 2012 ກໍ່ຫຍັບໃກ້ເຂົ້າມາແລ້ວ.

ຂໍ້ແນະນຳ

1 ສ້າງກອບຮ່າງທິດທາງນະໂຍບາຍຮ່ວມມືຫລາຍຝ່າຍ ເພື່ອຫລີກລ້ຽງການປ່ຽນແປງດິນຟ້າອາກາດ ທີ່ເປັນອັນຕະລາຍ ພາຍໃຕ້ສົນທິສັນຍາກຽວໂຕ ຫລັງປີ 2012.

- ສ້າງຈຸດເລີ່ມຕົ້ນທີ່ເຫັນດີເປັນເອກະພາບກັນກ່ຽວກັບ ການປ່ຽນແປງດິນຟ້າອາກາດ ໃຫ້ຢູ່ໃນລະດັບ 2°C ສູງກວ່າລະດັບໃນຊ່ວງໄລຍະກ່ອນການປະຕິວັດອຸດສາຫະກຳ.
- ວາງຄາດໝາຍສະເຖຍລະພາບສຳລັບຄວາມໜາແໜ້ນໃນຊັ້ນບັນຍາກາດ ຂອງອາຍ CO_2 ໃນລະດັບ450ppm(ຕົ້ນທຶນແມ່ນຄາດຄະເນຢູ່ໃນລະດັບ 1.6% ຂອງອັດຕາ GDP ສະເລ່ຍຂອງໂລກ ແຕ່ນີ້ ຮອດປີ 2030).
- ຕົກລົງກ່ຽວກັບເສັ້ນທາງການປ່ອຍອາຍພິດແບບຍືນຍົງໃນລະດັບໂລກ ເລັ່ງໃສ່ຫລຸດຜ່ອນການປ່ອຍອາຍພິດເຮືອນແກ້ວໃຫ້ໄດ້ 50% ຮອດປີ 2050 ຫລຸດຈາກລະດັບປີ 1990.
- ຄາດໝາຍພາຍໃຕ້ຄຳໝັ້ນສັນຍາ ກຽວໂຕ ໄລຍະປັດຈຸບັນ ທີ່ຈັດຕັ້ງປະຕິບັດໂດຍບັນດາປະເທດທີ່ພັດທະນາແລ້ວ, ໂດຍໃຫ້ມີຂໍ້ຕົກລົງໃນຕໍ່ໜ້າເພື່ອຈຳກັດການປ່ອຍອາຍພິດເຮືອນແກ້ວ ຢ່າງໜ້ອຍໃຫ້ໄດ້ 80% ຮອດປີ 2050, ໂດຍໃຫ້ຫລຸດລົງໄດ້ 20-30% ຮອດປີ 2020.
- ຜູ້ທີ່ປ່ອຍອາຍພິດຫລັກໆໃນບັນດາປະເທດກຳລັງພັດທະນາ ໃຫ້ເລັ່ງໃສ່ເສັ້ນທາງການປ່ອຍອາຍພິດ ທີ່ຈະບັນລຸຈຸດສູງສຸດ ໃນປີ 2020, ໂດຍໃຫ້ຈຳກັດໄດ້ 20% ຮອດປີ 2050.

2 ວາງນະໂຍບາຍເພື່ອການກຳນົດງົບການປ່ອຍອາຍຄາບອນແບບຍືນຍົງ ໃຫ້ເປັນວາລະສຳລັບການປັບປຸງ.

- ວາງງົບສຳລັບການປ່ອຍອາຍຄາບອນແຫ່ງຊາດ ໃນທຸກບັນດາປະເທດກຳລັງພັດທະນາ ໂດຍໃຫ້ມີ ຄາດໝາຍສຳລັບການຫລຸດການປ່ອຍອາຍພິດໂດຍລວມ ຈາກລະດັບອ້າງອີງ ໃນປີ 1990 ໃຫ້ເຊື່ອມໂຍງເຂົ້າໃນກົດໝາຍແຫ່ງຊາດ.
- ວາງລາຄາອາຍຄາບອນ ໂດຍຜ່ານການເກັບອາກອນ ຫລື ແຜນງານ cap-and-trade (ຫຼື ວາງຂໍ້ບັງຄັບເພື່ອການຄ້າ) ທີ່ເປັນເອກະພາບກັບເປົ້າໝາຍງົບການປ່ອຍ ອາຍຄາບອນແຫ່ງຊາດ.
- ຕ້ອງໄດ້ນຳສະເໜີກ່ຽວກັບການເກັບອາກອນການປ່ອຍອາຍຄາບອນ ໃນລະດັບ 10-20 ໂດລາສະຫະຫະລັດ / 1 ໂຕນ CO_2 ໃນປີ 2010, ເພີ່ມຂຶ້ນໃນລະດັບປະຈຳປີ ໄປເປັນ 60 - 100 ໂດລາສະຫະລັດ / 1 ໂຕນ CO_2.
- ຮັບຮອງເອົາແຜນງານ cap and trade ເຊິ່ງເລັ່ງໃສ່ ຫລຸດການປ່ອຍ ອາຍຄາບອນ ລົງ 20-30% ໃນປີ 2020 ໂດຍໃຫ້ມີ 90-100% ຄ່າຕອບແທນ ໃນປີ 2015.
- ນຳໃຊ້ລາຍຮັບຈາກການເກັບອາກອນ ການປ່ອຍອາຍຄາບອນ ແລະ cap and trade ເພື່ອເປັນທຶນໃຫ້ແກ່ ການປະຕິຮູບອາກອນທີ່ມີລັກສະນະກ້າວໜ້າ, ໂດຍມີການຫລຸດອາກອນໃນດ້ານແຮງງານ ແລະ ການລົງທຶນ, ແລະ ການພັດທະນາສິ່ງຈູງໃຈ ສຳລັບເຕັກໂນໂລຊີທີ່ຜະລິດອາຍຄາບອນຕ່ຳ.

- ປະຕິຮູບລະບົບ ການຄ້າການປ່ອຍອາຍພິດ ຂອງສະຫະພາບເອີຣົບມາເປັນ ລະບົບຫລຸດ ໂຄຕາ, ເພີ່ມການປະມູນ ແລະ ຈຳກັດການ ໄດ້ປຽບສູງສຳລັບພາກເອກະຊົນ.
- ສ້າງສະພາບແວດລ້ອມ ທີ່ເອື້ອອຳນວຍ ສຳລັບພະລັງງານທົດແທນ ໂດຍຜ່ານ ການ ກຳແພງພາສີ ແບບ 'ປ້ອນໃຫ້' (feed-in) ແລະ ລະບຽບການ ຂອງ ຕະ ຫ ລາ ດ, ໂ ດ ຍ ມີ ຄາ ດ ໝາ ຍ 20% ໃ ນ ປີ 2020 ໃ ນ ກ ານ ສ້ າ ງ ພ ະ ລ ັ ງ ງ ານ ທ ົ ດ ແ ທ ນ.
- ເພີ່ມ ປະ ສິ ດ ທິ ພ າ ບ ດ ້ ານ ພ ະ ລ ັ ງ ງ ານ ໂ ດ ຍ ຜ ່ ານ ມ າ ດ ຖ ານ ດ ້ ານ ລ ະ ບ ຽ ບ ການ ສ ຳ ລ ັ ບ ເ ຄ ື ່ ອ ງ ໃ ຊ ້ ແ ລ ະ ອ າ ຄ ານ.
- ຫ ລ ຸ ດ ການ ປ ່ ອ ຍ ອ າ ຍ ຄ າ ບ ອ ນ ຈ າ ກ ພ ະ ຫ ະ ນ ະ ຂ ິ ນ ສ ິ ່ ງ ໂ ດ ຍ ໃ ຫ ້ ມ ີ ມ າ ດ ຖ ານ ປ ະ ສ ິ ດ ທ ິ ພ າ ບ ຂ ອ ງ ນ ້ ຳ ມ ັ ນ ທ ີ່ ເ ຂ ັ ້ ມ ແ ຂ ງ ກ ວ ່ າ ເ ກ ົ່ າ ໃ ນ ສ ະ ຫ ະ ພ າ ບ ເ ອ ີ ຣ ົ ບ, ໂ ດ ຍ ມ ີ ຄ າ ດ ໝ າ ຍ 120 ກ ຣ າ ມ CO_2 / ກ ມ ໃ ນ ປ ີ 2012 ແ ລ ະ 80 ກ ຣ າ ມ CO_2 / ກ ມ ໃ ນ ປ ີ 2020, ແ ລ ະ ໃ ຫ ້ ມ ີ ມ າ ດ ຖ ານ ເ ສ ດ ຖ ະ ກ ິ ດ ນ ້ ຳ ມ ັ ນ ໂ ດ ຍ ສ ະ ເ ລ ່ ຍ ຂ ອ ງ ບ ໍ ລ ິ ສ ັ ດ ທ ີ່ ເ ຄ ັ ່ ງ ຄ ັ ດ ກ ວ ່ າ ເ ກ ົ່ າ ໃ ນ ສ ະ ຫ ະ ລ ັ ດ ອ າ ເ ມ ລ ິ ກ າ ໂ ດ ຍ ມ ີ ການ ເ ລ ີ ມ ນ ຳ ໃ ຊ ້ ການ ເ ກ ັ ບ ພ າ ສ ີ ການ ບ ິ ນ.
- ເ ພ ີ ່ ມ ກ ານ ສ ະ ໜ ັ ບ ສ ະ ໜ ູ ນ ດ ້ ານ ກ ານ ເ ງ ິ ນ, ສ ິ ່ ງ ຈ ູ ງ ໃ ຈ ແ ລ ະ ກ ານ ສ ະ ໜ ັ ບ ສ ະ ໜ ູ ນ ດ ້ ານ ລ ະ ບ ຽ ບ ການ ໃ ຫ ້ ແ ກ ່ ການ ພ ັ ດ ທ ະ ນ າ ການ ຄ ົ ້ ນ ພ ົ ບ ໃ ໝ ່ ໆ ດ ້ ານ ເ ຕ ັ ກ ໂ ນ ໂ ລ ຊ ີ, ໂ ດ ຍ ມ ີ ຈ ຸ ດ ສ ຸ ມ ໃ ສ ່ ການ ຄ ວ ມ ຄ ຸ ມ ແ ລ ະ ການ ເ ກ ັ ບ ສ ະ ສ ົ ມ ຄ າ ບ ອ ນ (CCS) - ສ ະ ຫ ະ ລ ັ ດ ຄ ວ ນ ເ ລ ັ ່ ງ ໃ ສ ່ ໃ ຫ ້ ມ ີ 30 ໂ ຮ ງ ງ ານ ສ າ ທ ິ ດ ໃ ນ ປ ີ 2015, ແ ລ ະ ສ ະ ຫ ະ ພ າ ບ ເ ອ ີ ຣ ົ ບ ຄ ວ ນ ມ ີ ຈ ຸ ດ ມ ຸ ່ ງ ຫ ວ ັ ງ ໃ ນ ລ ະ ດ ັ ບ ດ ຽ ວ ກ ັ ນ.

3 ສ້າງກອບທິດທາງນະໂຍບາຍສຳລັບການ ຮ່ວມມືສາກົນໃຫ້ເຂັ້ມແຂງ

- ພັ ດ ທ ະ ນ າ ກ ານ ຮ ່ ວ ມ ມ ື ສ າ ກ ົ ນ ເ ພ ື ່ ອ ເ ພ ີ ່ ມ ກ ານ ເ ຂ ົ້ າ ເ ຖ ິ ງ ກ ານ ບ ໍ ລ ິ ກ ານ ດ ້ ານ ພ ະ ລ ັ ງ ງ ານ ທ ີ່ ທ ັ ນ ສ ະ ໄ ໝ ແ ລ ະ ຫ ລ ຸ ດ ກ ານ ເ ອ ື ່ ອ ຍ ອ ິ ງ ໃ ສ ່ ໄ ບ ໂ ອ ມ າ ສ (ພ ະ ລ ັ ງ ງ ານ ທ ີ່ ຜ ະ ລ ິ ດ ຈ າ ກ ມ ູ ນ ສ ັ ດ ຫ ຼ ື ພ ືດ ຍ ືນ ຍ ິ ງ), ເ ຊ ິ ່ ງ ເ ປ ັ ນ ແ ຫ ລ ່ ງ ພ ະ ລ ັ ງ ງ ານ ຕ ິ ນ ຕ ໍ ສ ຳ ລ ັ ບ ປ ະ ມ ານ 2.5 ຕ ື້ ຄ ົ ນ.
- ຫ ລ ຸ ດ ຜ ່ ອ ນ ອ ັ ດ ຕ າ ກ ານ ເ ພ ີ ່ ມ ຂ ຶ ້ ນ ຂ ອ ງ ກ ານ ປ ່ ອ ຍ ອ າ ຍ ຄ າ ບ ອ ນ ໃ ນ ບ ັ ນ ດ າ ປ ະ ເ ທ ດ ກ ຳ ລ ັ ງ ພ ັ ດ ທ ະ ນ າ ໂ ດ ຍ ການ ເ ສ ີ ມ ສ ້ າ ງ ຄ ວ າ ມ ເ ຂ ັ ້ ມ ແ ຂ ງ ໃ ຫ ້ ແ ກ ່ ກ ານ ປ ະ ຕ ິ ຮ ູ ບ ຂ ະ ແ ໜ ງ ພ ະ ລ ັ ງ ງ ານ, ສ ະ ໜ ັ ບ ສ ະ ໜ ູ ນ ໂ ດ ຍ ການ ໃ ຫ ້ ທ ຶ ນ ແ ລ ະ ກ ານ ຖ ່ າ ຍ ທ ອ ດ ເ ຕ ັ ກ ໂ ນ ໂ ລ ຊ ີ.
- ສ ້ າ ງ ສ ິ ່ ງ ອ ຳ ນ ວ ຍ ຄ ວ າ ມ ສ ະ ດ ວ ກ ດ ້ ານ ກ ານ ປ ັ ບ ປ ຸ ງ ກ ານ ປ ່ ຽ ນ ແ ປ ງ ດ ິ ນ ຟ ້ າ ອ າ ກ າ ດ ເ ພ ື ່ ອ ລ ະ ດ ົ ມ ທ ຶ ນ 25 - 50 ຕ ື້ ໂ ດ ລ າ ສ ະ ຫ ະ ລ ັ ດ ທ ີ່ ຈ ຳ ເ ປ ັ ນ ໃ ນ ແ ຕ ່ ລ ະ ປ ີ ເ ພ ື ່ ອ ສ ະ ໜ ັ ບ ສ ະ ໜ ູ ນ ກ ານ ຂ ້ າ ມ ຜ ່ ານ ໄ ປ ສ ູ ່ ກ ານ ປ ່ ອ ຍ ອ າ ຍ ຄ າ ບ ອ ນ ໃ ນ ລ ະ ດ ັ ບ ຕ ່ ຳ ໃ ນ ບ ັ ນ ດ າ ປ ະ ເ ທ ດ ກ ຳ ລ ັ ງ ພ ັ ດ ທ ະ ນ າ ໂ ດ ຍ ປ ະ ສ ົ ມ ປ ະ ສ ານ ທ າ ງ ດ ້ ານ ກ ານ ໃ ຫ ້ ທ ຶ ນ ຊ ່ ວ ຍ ເ ຫ ລ ືອ ລ ້ າ, ຊ ່ ວ ຍ ເ ຫ ລ ືອ ແ ບ ບ ໃ ຫ ້ ສ ຳ ປ ະ ທ ານ ແ ລ ະ ໃ ຫ ້ ກ ານ ຄ ້ ຳ ປ ະ ກ ັ ນ ຄ ວ າ ມ ສ ່ ຽ ງ ສ ຳ ລ ັ ບ ກ ານ ລ ົ ງ ທ ຶ ນ ພ າ ຍ ໃ ຕ ້ ແ ຜ ນ ງ ານ ກ ານ ປ ະ ຕ ິ ຮ ູ ບ ຂ ະ ແ ໜ ງ ພ ະ ລ ັ ງ ງ ານ ແ ຫ ່ ງ ຊ າ ດ ຂ ອ ງ ຕ ົ ນ.
- ເ ຊ ື ່ ອ ມ ໂ ຍ ງ ກ ານ ໃ ຫ ້ ທ ຶ ນ ດ ້ ານ ອ າ ຍ ຄ າ ບ ອ ນ ແ ບ ບ ເ ປ ັ ນ ໂ ຄ ງ ກ ານ ໂ ດ ຍ ຜ ່ ານ ກ ົ ນ ໄ ກ ກ ານ ພ ັ ດ ທ ະ ນ າ ແ ບ ບ ສ ະ ອ າ ດ ແ ລ ະ ກ ານ ສ ະ ໜ ອ ງ ແ ບ ບ ຍ ືດ ຍ ຸ ່ ນ ຂ ອ ງ ສ ິ ນ ທ ິ ສ ັ ນ ຍ າ ກ ຽ ວ ໂ ຕ ເ ຂ ົ້ າ ກ ັ ບ ແ ບ ບ ແ ຜ ນ ງ ານ ແ ລ ະ ເ ຂ ົ້ າ ກ ັ ບ ຍ ຸ ດ ທ ະ ສ າ ດ ຂ ະ ແ ໜ ງ ກ ານ ແ ຫ ່ ງ ຊ າ ດ ເ ພ ື ່ ອ ສ ະ ໜ ັ ບ ສ ະ ໜ ູ ນ ກ ານ ຂ ້ າ ມ ຜ ່ ານ ໄ ປ ສ ູ ່ ກ ານ ປ ່ ອ ຍ ອ າ ຍ ຄ າ ບ ອ ນ ໃ ນ ລ ະ ດ ັ ບ ຕ ່ ຳ.

- ສ້າງຄວາມເຂັ້ມແຂງ ໃຫ້ແກ່ການຮ່ວມມືສາກົນ ດ້ານຖ່ານຫີນ, ໂດຍໃຫ້ມີການສ້າງສິ່ງຈູງໃຈສຳລັບການພັດທະນາ ແລະ ນຳໃຊ້ເຕັກໂນໂລຊີ ແບບເປັນວົງຈອນການສ້າງອາຍແກັສ ແບບປະສົມປະສານ ຄົບຊຸດ (IGCC) ແລະ CCS.
- ພັດທະນາສິ່ງຈູງໃຈສາກົນ ສຳລັບການປົກສາຫາລື ແລະ ການຄຸ້ມຄອງປ່າເຂດຮ້ອນແບບຍືນຍົງ.
- ຂະຫຍາຍການໃຫ້ທຶນຫລຸດ ອາຍຄາບອນ ໃຫ້ນອກເໜືອການປັບປຸງຂະແໜງອຸດສາຫະກຳໄປສູ່ ແຜນງານການນຳໃຊ້ທີ່ດິນ ເຊັ່ນ: ການປົກປັກຮັກສາປ່າ ແລະ ການຟື້ນຟູທົ່ງຫຍ້າ - ເຊິ່ງກໍ່ສາມາດໃຫ້ ປະໂຫຍດແກ່ຜູ້ທຸກຍາກ.

4 ນຳເອົາການດັດປັບການປ່ຽນແປງດິນຟ້າອາກາດ ມາເປັນຈຸດໃຈກາງຂອງການອບຫິດທາງນະໂຍບາຍ ກຽວໂຕ ຫລັງປີ 2012 ແລະ ການຮ່ວມມືສາກົນເພື່ອຫລຸດຜ່ອນຄວາມທຸກຍາກ

- ຮັບຮູ້ວ່າ ໂລກຍຶດໝັ້ນຕໍ່ການປ່ຽນແປງດິນຟ້າອາກາດທີ່ຫລວງຫລາຍ, ເຊິ່ງເຖິງແມ່ນວ່າມີການປັບປຸງຢ່າງ ຈິງຈັງກໍ່ຈະບໍ່ສົ່ງຜົນໃຫ້ມີການປ່ຽນແປງອຸນຫະພູມໄດ້ຫລາຍ ໄປຈົນຮອດກາງຊຸມປີ 2030, ເຊິ່ງວ່າ ອຸນຫະພູມສະເລ່ຍຂອງໂລກຈະເພີ່ມຂຶ້ນຮອດປີ 2050 ເຖິງແມ່ນວ່າ ພາຍໃຕ້ ສະພາບ 'ມີກົດລະນີທີ່ດີ' ກໍ່ຕາມ.
- ເສີມສ້າງຄວາມເຂັ້ມແຂງ ໃຫ້ແກ່ບັນດາປະເທດທີ່ກຳລັງພັດທະນາ ໃຫ້ປະເມີນຄວາມສ່ຽງດ້ານການປ່ຽນ ແປງດິນຟ້າອາກາດ ແລະ ໃຫ້ນຳເອົາການດັດປັບ ເຂົ້າໃນທຸກໆດ້ານ ຂອງການວາງແຜນແຫ່ງຊາດ.
- ນຳເອົາການດັດປັບເຂົ້າໃນຍຸດທະສາດ ການ ຫລຸດຜ່ອນຄວາມທຸກຍາກ ທີ່ແກ້ໄຂຄວາມອ່ອນແອ ທີ່ຕິດພັນກັບຄວາມບໍ່ສະເໝີພາບ ດ້ານຄວາມຮັ່ງມີ, ດ້ານບົດບາດຍິງຊາຍ, ດ້ານບ່ອນຢູ່ທີ່ຕັ້ງ ແລະ ສິ່ງບົ່ງບອກອື່ນໆດ້ານ ຄວາມດ້ອຍໂອກາດ.
- ຂະຫຍາຍການສະໜອງ ຂອງຫລາຍຝ່າຍ ສຳລັບການຮັບມືກັບສະຖານະການຮີບດ່ວນ ດ້ານມະນຸດສະທຳ ທີ່ກ່ຽວຂ້ອງກັບດິນຟ້າອາກາດ ແລະ ການສະໜັບສະໜູນການຟື້ນຟູພາຍຫລັງໄພພິບັດ ເພື່ອສ້າງຄວາມຍືດຍຸ່ນ ໃນອານາຄົດ, ໂດຍມີການໃຫ້ທຶນ 2 ຕື້ ໂດລາສະຫະລັດ ຮອດປີ 2016 ພາຍໃຕ້ຮູບແບບການຈັດຕັ້ງ ເຊັ່ນ: ກອງທຶນຮັບມືເຫດສຸກເສີນສູນກາງຂອງອົງການສະຫະປະຊາຊາດ ແລະ ສິ່ງອຳນວຍຄວາມສະດວກ ລະດັບໂລກ ຂອງທະນາຄານໂລກ ເພື່ອການຫລຸດຜ່ອນ ແລະ ຟື້ນຟູຈາກໄພພິບັດ.
- ຄົ້ນຫາ ທາງເລືອກດ້ານການໃຫ້ທຶນແບບໃໝ່ໆ ນອກເໜືອຈາກການຊ່ວຍເຫລືອດ້ານການພັດທະນາ ເພື່ອລະດົມການສະໜັບສະໜູນການດັດປັບ, ລວມທັງການເກັບອາກອນ ການປ່ອຍອາຍຄາບອນ, ຄ່າໂຄຕາ ທີ່ອອກໃຫ້ພາຍໃຕ້ແຜນງານ cap and trade, ພາສີຍານພາຫານະ ທາງອາກາດ ແລະ ມາດຕະການອື່ນໆ ທີ່ກວ້າງຂວາງ.
- ກະຈາຍໂຄງຮ່າງປັດຈຸບັນ ຂອງກອງທຶນທີ່ຫລາຍຝ່າຍອຸທິດໃຫ້ ເຊິ່ງນຳມາເຊິ່ງການສະໜັບສະໜູນທີ່ຈຳກັດ (ມາເຖິງປັດຈຸບັນ ມີ 26 ລ້ານໂດລາສະຫະລັດ ແລະ 253 ລ້ານໂດລາສະຫະລັດ ໃນງົບປະມານຕໍ່ໜ້າ, ໂດຍມີຄ່າໃຊ້ຈ່າຍໃນການມອບໂອນ ທີ່ສູງ), ແລະ ປ່ຽນຈຸດເລັ່ງຂອງການສະໜັບສະໜູນ ຈາກແບບໂຄງການ ໄປເປັນແບບການໃຫ້ທຶນ

ແກ່ແຜນງານ.

- ນຳໃຊ້ເອກະສານຍຸດທະສາດ ການຫລຸດຜ່ອນຄວາມທຸກຍາກ (PRSPs) ເພື່ອດຳເນີນການຄາດຄະເນຕົ້ນທຶນ ຂອງແຜນງານແຫ່ງຊາດປັດຈຸບັນທີ່ມີການຍົກລະດັບຂຶ້ນ, ກຳນົດຂົງເຂດບູລິມະສິດສຳລັບການຫລຸດຜ່ອນຄວາມອ່ອນແອ.

ເອກະສານຊ້ອນທ້າຍ ຕາຕະລາງທີ 1

ການວັດແທກຮ່ອງຮອຍສະສົມອາຍຄາບອນໃນໂລກ - ບັນດາປະເທດ ແລະ ຂົງເຂດ ຈຳນວນໜຶ່ງທີ່ຄັດເລືອກມາເທົ່ານັ້ນ

ປະເທດທີ່ປ່ອຍອາຍ CO_2 ຫຼາຍກວ່າໝູ່ 30 ອັນດັບຕົ້ນໆ	ການປ່ອຍອາຍຄາບອນໄດອອກໄຊ[a] ການປ່ອຍອາຍພົດທັງໝົດ (MtCO$_2$) 1990	2004	ອັດຕາການຂະຫຍາຍຕົວ (%) 1990–2004	ອັດຕາສ່ວນໃນຈຳນວນລວມຂອງໂລກ (%) 1990	2004	ອັດຕາສ່ວນຂອງພົນລະເມືອງ (%) 2004	ການປ່ອຍອາຍຕໍ່ຫົວຄົນ (tCO$_2$) 1990	2004	ການປ່ອຍ CO_2 ຫລື ການຍາດແຍ່ງ ຈາກປ່າ[b] (Mt CO_2 / ປີ) 1990–2005
1 ສະຫະລັດ	4,818	6,046	25	21.2	20.9	4.6	19.3	20.6	-500
2 ຈີນ[c]	2,399	5,007	109	10.6	17.3	20.0	2.1	3.8	-335
3 ສະຫະພາບລັດເຊຍ	1,984 [d]	1,524	-23 [d]	8.7 [d]	5.3	2.2	13.4 [d]	10.6	72
4 ອິນເດຍ	682	1,342	97	3.0	4.6	17.1	0.8	1.2	-41
5 ຍີ່ປຸ່ນ	1,071	1,257	17	4.7	4.3	2.0	8.7	9.9	-118
6 ເຢັຍລະມັນ	980	808	-18	4.3	2.8	1.3	12.3	9.8	-75
7 ການາດາ	416	639	54	1.8	2.2	0.5	15.0	20.0	..
8 ສະຫະຣາຊະອານາຈັກ	579	587	1	2.6	2.0	0.9	10.0	9.8	-4
9 ເກົາຫລີ (ສາທາລະນະລັດ)	241	465	93	1.1	1.6	0.7	5.6	9.7	-32
10 ອິຕາລີ	390	450	15	1.7	1.6	0.9	6.9	7.8	-52
11 ແມັກຊິໂກ	413	438	6	1.8	1.5	1.6	5.0	4.2	..
12 ອາฟະລິກາໃຕ້	332	437	32	1.5	1.5	0.7	9.1	9.8	(.)
13 ອີຣານ (ສາທາລະນະລັດອິດສະລາມ)	218	433	99	1.0	1.5	1.1	4.0	6.4	-2
14 ອິນໂດເນເຊຍ	214	378	77	0.9	1.3	3.4	1.2	1.7	2,271
15 ຝຣັ່ງ	364	373	3	1.6	1.3	0.9	6.4	6.0	-44
16 ບຣາຊິນ	210	332	58	0.9	1.1	2.8	1.4	1.8	1,111
17 ສະເປນ	212	330	56	0.9	1.1	0.7	5.5	7.6	-28
18 ຢູເຄຣນ	600 [d]	330	-45 [d]	2.6 [d]	1.1	0.7	11.5 [d]	7.0	-60
19 ອິດສະຕຣາລີ	278	327	17	1.2	1.1	0.3	16.3	16.2	..
20 ຊາອຸດີ ອາຣາເບຍ	255	308	21	1.1	1.1	0.4	15.9	13.6	(.)
21 ໂປແລນ	348	307	-12	1.5	1.1	0.6	9.1	8.0	-44
22 ໄທ	96	268	180	0.4	0.9	1.0	1.7	4.2	18
23 ຕຸຣະກີ	146	226	55	0.6	0.8	1.1	2.6	3.2	-18
24 ກາຊັກສະຖານ	259 [d]	200	-23 [d]	1.1 [d]	0.7	0.2	15.7 [d]	13.3	(.)
25 ອານຈີເຣຍ	77	194	152	0.3	0.7	0.5	3.0	5.5	-6
26 ມາເລເຊຍ	55	177	221	0.2	0.6	0.4	3.0	7.5	3
27 ເວເນຊູເອລາ (ສາທາລະນະລັດ ໂບລິວາຣຽນ)	117	173	47	0.5	0.6	0.4	6.0	6.6	..
28 ອີຢິບ	75	158	110	0.3	0.5	1.1	1.5	2.3	-1
29 ສະຫະລັດອາຣັບເອມິເຣດ	55	149	173	0.2	0.5	0.1	27.2	34.1	-1
30 ເນເທີແລນ	141	142	1	0.6	0.5	0.2	9.4	8.7	-1
ບັນດາປະເທດ OECD[e] ທີ່ເປັນປະເທດ ທີ່ຮັ່ງມີຂອງໂລກ	11,205	13,319	19	49	46	18	10.8	11.5	-1,000
ເອີຣົບກາງ ແລະ ຕາເວັນອອກ & CIS	4,182	3,168	-24	18	11	6	10.3	7.9	-166
ບັນດາປະເທດກຳລັງພັດທະນາ	6,833	12,303	80	30	42	79	1.7	2.4	5,092
ອາຊີຕາເວັນອອກ ແລະ ແຖບປາຊີຟິກ	3,414	6,682	96	15	23	30	2.1	3.5	2,294
ອາຊີໃຕ້	991	1,955	97	4	7	24	0.8	1.3	-49
ອາເມລິກາລາຕິນ ແລະ ແຖບຄາຣິບຽນ	1,088	1,423	31	5	5	8	2.5	2.6	1,667
ລັດອາຣັບ	734	1,348	84	3	5	5	3.3	4.5	44
ອາฟຣິກາແຖບຊາຮາຣາ	456	663	45	2	2	11	1.0	1.0	1,154
ບັນດາປະເທດທີ່ດ້ອຍພັດທະນາ	74	146	97	(.)	1	11	0.2	0.2	1,098
ການພັດທະນາມະນຸດໃນລະດັບສູງ	14,495	16,616	15	64	57	25	9.8	10.1	90
ການພັດທະນາມະນຸດລະດັບກາງ	5,946	10,215	72	26	35	64	1.8	2.5	3,027
ການພັດທະນາມະນຸດລະດັບຕ່ຳ	78	162	108	(.)	1	8	0.3	0.3	858
ລາຍຮັບສູງ	10,572	12,975	23	47	45	15	12.1	13.3	-937
ລາຍຮັບປານກາງ	8,971	12,163	36	40	42	47	3.4	4.0	3,693
ລາຍຮັບຕ່ຳ	1,325	2,084	57	6	7	37	0.8	0.9	1,275
ທົ່ວໂລກ	22,703 [f]	28,983 [f]	28	100 [f]	100 [f]	100	4.3	4.5	4,038

ໝາຍເຫດ

a ຕົວເລກທີ່ອ້າງອີງເຖິງການປ່ອຍ ອາຍຄາບອນໄດ ອອກໄຊ ອອກມາຈາກການຊົມໃຊ້ ສານນ້ຳມັນດິບ ທີ່ເປັນທາດແຂງ, ທາງແຫລວ ແລະ ທາດອາຍ ແກ້ສ ແລະຈາກການຈູດອາຍ ແກ້ສ ແລະການຜະລິດຊີມັງ.

b ຂໍ້ມູນທີ່ອ້າງອີງເຖິງໄບໂອມາສ (ອາຍແກ້ສທີ່ ຜະລິດຈາກມູນ ສັດ) - ທັງທາງເທິງ ແລະ ໃຕ້ພື້ນດິນ, ຄາບອນໃນໄມ້ຕາຍ, ດິນ ແລະ ຂີ້ເຫຍື້ອແມ່ນ ບໍ່ໄດ້ລວມຢູ່ໃນນີ້. ອ້າງອີງໃສ່ການປ່ອຍ ອາຍພົດ ຕໍ່ປີ ລະດັບສະເລ່ຍສຸດທີ ຫລື ການກະຈາຍ ຍ້ອນ ການປ່ຽນແປງໃນລະດັບການສະສົມຄາບອນ ຂອງອາຍແກ້ສ ທຳມະຊາດໃນປ່າ. ຕົວເລກທີ່ເປັນບວກໝາຍເຖິງ ການປ່ອຍ ອາຍຄາບອນໃນຂະນະທີ່ຕົວເລກລົບ ໝາຍເຖິງການດູດຊັບ ອາຍຄາບອນ ຈາກຊັ້ນບັນຍາກາດ

c ການປ່ອຍອາຍ CO_2 ສຳລັບຈີນ ແມ່ນບໍ່ໄດ້ລວມ ເຖິງ ຂອງ ໄຕ້ຫວັນ, ແຂວງຂອງຈີນ ເຊິ່ງຢູ່ໃນ ລະດັບ 124 Mt CO_2 ໃນປີ 1990 ແລະ 241 Mt CO_2 ໃນປີ 2004

d ຕົວເລກອ້າງອີງເຖິງປີ 1992 ແລະ ມູນຄ່າອັດຕາການ ຂະຫຍາຍຕົວ ທີ່ອ້າງອີງເຖິງໄລຍະ 1992 - 2004.

e ປະເທດ OECD ເປັນຂົງເຂດທີ່ລວມເອົາບັນດາ ປະເທດ ທີ່ນອນຢູ່ໃນຂົງເຂດຍ່ອຍອື່ນໆ ດັ່ງມີ ລາຍຊື່ ລຸ່ມນີ້: ສາທາລະນະລັດເຊັກ, ຮົ່ງການີ, ແມັກຊິໂກ, ໂປແລັນ, ສາທາລະນະລັດເກົາຫລີ ແລະ ສະໂລວາເກຍ. ດັ່ງນັ້ນ ໃນລະດັບໜຶ່ງ ແຕ່ລະຂົງເຂດ ລວມກັນອາດຫລາຍກວ່າທັງໝົດ ລວມກັນໃນໂລກ

f ລວມທັງໝົດຂອງໂລກ ລວມເຖິງ ການປ່ອຍອາຍຄາບອນ ບໍ່ໄດ້ລວມ ໃນຜົນລວມແຫ່ງຊາດ, ເຊັ່ນ ບັນດາ ຕົວເລກ ຈາກນ້ຳມັນບັງເກີ ແລະ ການຜະລິດອອກຊິເຢັນຂອງຜະລິດ ຕະພັນຄາບອນນ້ຳທີ່ບໍ່ແມ່ນນ້ຳມັນ (ຕົວຢ່າງ: ຢາງປູທາງ), ແລະ ການ ປ່ອຍອາຍພົດ ໂດຍບັນດາປະເທດ ທີ່ບໍ່ໄດ້ສະແດງ ໄວ້ໃນຕາຕະລາງ ຕົວຊີ້ວັດຕົ້ນຕໍ. ອາຍພົດເຫລົ່ານີ້ ເປັນປະລິມານ ປະມານ 5% ຂອງ ປະລິມານລວມຂອງໂລກ.

ແຫລ່ງຂໍ້ມູນ:
ຕາຕະລາງຕົວຊີ້ວັດ ທີ 24